ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 0394 /ກງ

ນະຄອນຫຼວງວຽງຈັນ, ວັນທີ 04 ກຸມພາ 2022

# ຄໍາແນະນໍາ

# ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ອາກອນຊົມໃຊ້

- ອີງຕາມ ກົດໝາຍວ່າດ້ວຍ ອາກອນຊົມໃຊ້ ສະບັບເລກທີ 68/ສພຊ,ລົງວັນທີ 19 ມິຖຸນາ 2019;
- ອີງຕາມ ກົດໝາຍ ວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 7 ສິງຫາ 2021;
- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 600/ນຍ, ລົງວັນທີ 14 ຕຸລາ 2021 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງການເງິນ;
- ອີງຕາມ ໜັງສືສະເໜີຂອງກົມສ່ວຍສາອາກອນ ສະບັບເລກທີ...0136..../ກສອ, ລົງວັນທີ...20 ມັງກອນ 2022

## ລັດຖະມົນຕີກະຊວງການເງິນ ອອກຄໍາແນະນໍາ:

I. ຈຸດປະສົງ

1. ເພື່ອຜັນຂະຫຍາຍເນື້ອໃນບາງມາດຕາຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ,ລົງວັນທີ 19 ມິຖຸນາ 2019 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 7 ສິງຫາ 2021;

2. ເພື່ອແນະນໍາ, ອະທິບາຍວິທີການ ແລະ ຍົກຕົວຢ່າງປະກອບ ໃຫ້ເຂົ້າໃຈງ່າຍ ໃນການຈັດຕັ້ງປະຕິບັດວຽກງານອາກອນຊົມໃຊ້;

3. ເພື່ອເປັນບ່ອນອີງ ໃນການຄິດໄລ່, ການເກັບ, ການແຈ້ງ, ການມອບ, ການຄຸ້ມຄອງ ແລະ ການຕິດຕາມກວດກາ ການຈັດຕັ້ງປະຕິບັດອາກອນຊົມໃຊ້ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນສູງ ແນໃສ່ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທຸກພາກສ່ວນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນທຸລະກິດ, ທໍາມາຫາກິນ ແລະ ປະກອບອາຊີບຕ່າງໆ ຢູ່ໃນ ສປປ ລາວ ມີຄວາມເຂົ້າໃຈ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

II. ແນະນໍາເພີ່ມເຕີມເນື້ອໃນບາງມາດຕາຂອງກົດໝາຍ

1. ມາດຕາ 2 ອາກອນຊົມໃຊ້

ອາກອນຊົມໃຊ້ ແມ່ນ ພັນທະເປັນເງິນ ທີ່ເກັບຈາກການຊົມໃຊ້ບາງປະເພດສິນຄ້າ ທີ່ນໍາເຂົ້າ ຫຼື ຜະລິດ ພາຍໃນ ແລະ ການບໍລິການ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນປະເທດ.

ອາກອນຊົມໃຊ້ ແມ່ນປະເພດອາກອນ ທາງອ້ອມ ເກັບ ຈາກບາງປະພດ ສິນຄ້າ ທີ່ນໍາເຂົ້າຈາກຕ່າງປະເທດ, ຈາກເຂດເສດຖະກິດພິເສດ ແລະ ເຂດປອດພາສີ ມາໃນ ສປປ ລາວ ແລະ ເກັບຈາກການສະໜອງບາງປະເພດສິນຄ້າ

ແລະ ບາງກິດຈະການບໍລິການ ຢູ່ໃນ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 11 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້; ອາກອນຊົມໃຊ້ ເປັນສ່ວນໜຶ່ງ ໃນລະບົບສ່ວຍສາອາກອນ ຂອງ ສປປ ລາວ.

2. ມາດຕາ 6 ພັນທະກ່ຽວກັບອາກອນຊົມໃຊ້

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ຊົມໃຊ້ບາງປະເພດສິນຄ້າ ແລະ ການບໍລິການ ຢູ່ ສປປ ລາວ ລ້ວນແຕ່ມີພັນທະເສຍອາກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ,ລົງວັນທີ19 ມິຖຸນາ 2019 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 07 ສິງຫາ 2021;

ຜູ້ມີພັນທະທີ່ຕ້ອງເສຍອາກອນຊົມໃຊ້ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳເຂົ້າ, ຊື້ ຫຼື ຊົມໃຊ້ສິນຄ້າ ແລະ/ຫຼື ການບໍລິການ ທີ່ຖືກເສຍອາກອນຊົມໃຊ້ ຢູ່ໃນດິນແດນຂອງ ສປປ ລາວ ໂດຍບໍ່ຈຳແນກວ່າ ຈະເປັນຄົນລາວ, ຄົນຕ່າງດ້າວ ຫຼື ຄົນຕ່າງປະເທດ ທີ່ດຳເນີນທຸລະກິດ ຫຼື ບໍ່ກໍຕາມ.

3. ມາດຕາ 9 ການເກັບອາກອນຊົມໃຊ້

ການເກັບອາກອນຊົມໃຊ້ ແມ່ນ ການເກັບອາກອນຈາກ ການຊົມໃຊ້ບາງປະເພດສິນຄ້າ ທີ່ນຳເຂົ້າ ຫຼື ຜະລິດພາຍໃນ ຫຼື ການບໍລິການ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມອັດທີ່ໄດ້ກຳນົດໄວ້ໃນມາດຕາ 15 ຂອງກົດໝາຍວ່າດ້ວຍການປັບປຸງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 7 ສິງຫາ 2021, ຊຶ່ງຜູ້ເກັບອາກອນຊົມໃຊ້ ແມ່ນ ຜູ້ທີ່ເຮັດໜ້າທີ່ເກັບອາກອນຊົມໃຊ້ ຈາກສິນຄ້າ ແລະ ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ດັ່ງນີ້:

1) ຜູ້ເກັບອາກອນຊົມໃຊ້ ສຳລັບສິນຄ້າ ທີ່ຕ້ອງເສຍອາກອນຊົມໃຊ້ ທີ່ນຳເຂົ້າຈາກ ຕ່າງປະເທດ, ເຂດເສດຖະກິດພິເສດ ແລະ ເຂດປອດພາສີ ແມ່ນ ເຈົ້າໜ້າທີ່ ຜູ້ທີ່ຖືກມອບໝາຍໃຫ້ເກັບ ທີ່ປະຈຳຢູ່ດ່ານບ່ອນນຳເຂົ້າ ຫຼື ປະຈຳຢູ່ເຂດເສດຖະກິດພິເສດ ແລະ ເຂດປອດພາສີ, ຊຶ່ງໃນປະຈຸບັນ ແມ່ນ ເຈົ້າໜ້າທີ່ພາສີ ຫຼື ຜູ້ຖືກມອບໝາຍໃຫ້ເກັບ ເປັນຜູ້ເຮັດໜ້າທີ່ດັ່ງກ່າວ;

2) ຜູ້ເກັບອາກອນຊົມໃຊ້ ສຳລັບການຜະລິດສິນຄ້າ ຫຼື ຜູ້ປະກອບພາຍໃນ ທີ່ຕ້ອງເສຍອາກອນຊົມໃຊ້ ຢູ່ພາຍໃນປະເທດ ແມ່ນ ຜູ້ຜະລິດສິນຄ້າ ຫຼື ຜູ້ປະກອບພາຍໃນ ຢູ່ໃນ ສປປ ລາວ;

3) ຜູ້ເກັບອາກອນຊົມໃຊ້ສຳລັບການສະໜອງ ສິນຄ້າ ແລະ ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ຢູ່ພາຍໃນປະເທດ ແມ່ນ ຜູ້ດຳເນີນທຸລະກິດ ທີ່ສ້າງຕັ້ງວິສາຫະກິດ ຢູ່ໃນ ສປປ ລາວ;

4) ຜູ້ມີພັນທະຕ້ອງມອບອາກອນຊົມໃຊ້ ສຳລັບການຊື້ ສິນຄ້າ ແລະ/ຫຼື ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ຈາກຜູ້ບໍ່ມີພູມລຳເນົາທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ແມ່ນ ບຸກຄົນທົ່ວໄປ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະດຳເນີນທຸລະກິດ ຫຼື ບໍ່ກໍຕາມ.

4. ມາດຕາ 10 ການເກັບອາກອນຊົມໃຊ້

ຜູ້ມອບອາກອນຊົມໃຊ້ ມີ ດັ່ງນີ້:

1) ຜູ້ນຳເຂົ້າສິນຄ້າ ເປັນ ຜູ້ມອບອາກອນຊົມໃຊ້ ສຳລັບສິນຄ້ານຳເຂົ້າ, ຊຶ່ງພາຍຫຼັງທີ່ເຈົ້າໜ້າທີ່ພາສີ ຫຼື ຜູ້ຖືກມອບໝາຍໃຫ້ເກັບ ໄດ້ຄິດໄລ່ຈຳນວນອາກອນຊົມໃຊ້ ທີ່ຕ້ອງເສຍແລ້ວ ຜູ້ນຳເຂົ້າສິນຄ້າດັ່ງກ່າວ ຕ້ອງນຳຈຳນວນເງິນອາກອນຊົມໃຊ້ນັ້ນ ໄປມອບເຂົ້າງົບປະມານແຫ່ງລັດ ໃຫ້ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 18 ວັກ 1 ຂີດໜ້າທີ 1 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ແລະ ຂໍ້ 11 ຂໍ້ 1) ຂອງຄຳແນະນຳສະບັບນີ້ ແລ້ວຈຶ່ງສາມາດນຳເອົາສິນຄ້າຂອງຕົນ ອອກຈາກດ່ານພາສີ ຫຼື ອອກຈາກເຂດເສດຖະກິດພິເສດ ຫຼື ເຂດປອດພາສີ ເຂົ້າມາໃນ ສປປ ລາວ ໄດ້. ສຳລັບສິນຄ້າ ຫຼື ພາຫະນະ ທີ່ນຳເຂົ້າຊົ່ວຄາວ ແຕ່ບໍ່ໄດ້ນຳອອກຄືນ ພາຍຫຼັງທີ່ເຈົ້າໜ້າທີ່ພາສີ ຫຼື ຜູ້ຖືກມອບໝາຍໃຫ້ເກັບ ໄດ້ຄິດໄລ່ ຈຳນວນ ອາກອນຊົມໃຊ້ ຕາມມູນຄ່າທີ່ຄະນະກຳມະການຖືກແຕ່ງຕັ້ງກຳນົດແລ້ວ ຜູ້ຊື້ ຫຼື ຜູ້

ຂາຍສິນຄ້າດັ່ງກ່າວ ຕ້ອງນໍາຈໍານວນເງິນອາກອນຊົມໃຊ້ນັ້ນໄປມອບເຂົ້າງົບປະມານແຫ່ງລັດ ໃຫ້ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ຢູ່ໃນມາດຕາ 18 ຂີດໝາຍ 1 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ແລະ ຂໍ້ 11 ຂໍ້ 1) ຂອງຄໍາແນະນໍາສະບັບນີ້;

2) ຜູ້ຜະລິດສິນຄ້າ ຫຼື ຜູ້ປະກອບພາຍໃນ ເປັນ ຜູ້ມອບອາກອນຊົມໃຊ້ ສໍາລັບການຜະລິດສິນຄ້າ ຫຼື ການປະກອບພາຍໃນ ທີ່ຕ້ອງເສຍອາກອນຊົມໃຊ້ ຢູ່ພາຍໃນປະເທດ, ຊຶ່ງພາຍຫຼັງທີ່ຜູ້ຜະລິດສິນຄ້າ ຫຼື ຜູ້ດໍາເນີນທຸລະກິດໄດ້ຄິດໄລ່ ແລະ ເກັບຈໍານວນອາກອນຊົມໃຊ້ທີ່ຕ້ອງເສຍແລ້ວ ຕ້ອງນໍາໄປມອບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ ຢູ່ໃນມາດຕາ 18 ວັກ 1 ຂີດໝາຍ 2 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ແລະ ຂໍ້ 11 ຂໍ້ 2) ຂອງຄໍາແນະນໍາສະບັບນີ້;

3) ຜູ້ສະໜອງ ສິນຄ້າ ແລະ ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ຢູ່ພາຍໃນປະເທດ ຫຼື ຜູ້ດໍາເນີນທຸລະກິດ ທີ່ສ້າງຕັ້ງວິສາຫະກິດ ຢູ່ໃນ ສປປ ລາວ ເປັນ ຜູ້ມອບອາກອນຊົມໃຊ້ສໍາລັບການສະໜອງ ສິນຄ້າ ແລະ ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ຢູ່ພາຍໃນປະເທດ ແມ່ນຜູ້ດໍາເນີນທຸລະກິດ ທີ່ສ້າງຕັ້ງວິສາຫະກິດ ຢູ່ໃນ ສປປ ລາວ; ພາຍຫຼັງທີ່ຕົນໄດ້ຄິດໄລ່ ແລະ ເກັບຈໍານວນອາກອນຊົມໃຊ້ທີ່ຕ້ອງເສຍແລ້ວ ຕ້ອງນໍາໄປມອບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ ຢູ່ໃນມາດຕາ 18 ວັກ 1 ຂີດໝາຍ 2 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ແລະ ຂໍ້ 11 ຂໍ້ 2) ຂອງຄໍາແນະນໍາສະບັບນີ້;

4) ຜູ້ຊື້ ສິນຄ້າ ແລະ/ຫຼື ການບໍລິການ ຈາກຜູ້ບໍ່ມີພູມລໍາເນົາ ເປັນ ຜູ້ມອບອາກອນຊົມໃຊ້ ສໍາລັບການຊື້ສິນຄ້າ ແລະ/ຫຼື ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ຈາກຜູ້ບໍ່ມີພູມລໍາເນົາທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ, ຊຶ່ງຜູ້ຊື້ສິນຄ້າ ແລະ/ຫຼື ການບໍລິການດັ່ງກ່າວ ແມ່ນ ບຸກຄົນທົ່ວໄປ ຫຼື ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະດໍາເນີນທຸລະກິດ ຫຼື ບໍ່ກໍຕາມ. ພາຍຫຼັງທີ່ຜູ້ຊື້ ສິນຄ້າ ແລະ/ຫຼື ການບໍລິການ ຈາກຜູ້ບໍ່ມີພູມລໍາເນົາ ໄດ້ຄິດໄລ່ ແລະ ເກັບຈໍານວນອາກອນຊົມໃຊ້ທີ່ຕ້ອງເສຍແລ້ວ ແມ່ນ ຕ້ອງນໍາໄປມອບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ ຕາມທີ່ໄດ້ກໍານົດໄວ້ ຢູ່ໃນມາດຕາ 18 ວັກ 1 ຂີດໝາຍ 3 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ແລະ ຂໍ້ 11 ຂໍ້ 3) ຂອງຄໍາແນະນໍາສະບັບນີ້.

5. ມາດຕາ 11 ສິນຄ້າ ແລະ ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້

ລາຍການ ສິນຄ້າ ທີ່ນໍາເຂົ້າ ແລະ ຜະລິດ ຫຼື ປະກອບ ຢູ່ພາຍໃນປະເທດ ແລະ ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ຕາມຈໍານວນລາຍການ ທີ່ກໍານົດໄວ້ໃນມາດຕາ 11 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ສະບັບເລກທີ 68/ສພຊ, ລົງວັນທີ 19 ມິຖຸນາ 2019. ຖ້າມີການສະໜອງສິນຄ້າ ແລະ/ຫຼື ການບໍລິການອື່ນ ນອກເໜືອຈາກລາຍການດັ່ງກ່າວນີ້ ແມ່ນ ຈະບໍ່ຖືກເສຍອາກອນຊົມໃຊ້. ເພື່ອສະດວກສໍາລັບການຈັດຕັ້ງປະຕິບັດ ຈຶ່ງໄດ້ຍົກເອົາລາຍການສິນຄ້າ ແລະ ການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ ຕາມທີ່ໄດ້ກໍານົດໄວ້ຢູ່ໃນມາດຕາ 11 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ມາບັນຈຸເຂົ້າໃນຂໍ້ 2.1 ແລະ ຂໍ້ 2.2 ຂອງຄໍາແນະນໍາສະບັບນີ້ ດັ່ງນີ້ :

5.1. ສິນຄ້າທີ່ຕ້ອງເສຍອາກອນຊົມໃຊ້:

1) ນໍ້າມັນເຊື້ອໄຟ;

2) ພາຫະນະ ລົດຈັກ ແລະ ລົດໃຫຍ່;

3) ຊິ້ນສ່ວນປະກອບພາຫະນະ;

4) ເຄື່ອງອາໄຫຼ່ປ່ຽນຖ່າຍພາຫະນະ;

5) ເຄື່ອງຕົບແຕ່ງພາຫະນະ;

6) ເຫຼົ້າ, ເຄື່ອງດື່ມທີ່ມີທາດເຫຼົ້າ;

7) ເບຍ;

8) ຢາສູບ: ຢາສູບເປັນກອກ ຫຼື ເປັນຊອງ ແລະ ຢາສູບປະເພດອື່ນໆ;

9) ອາຍແກັດໃຊ້ສໍາລັບຍານພາຫະນະ;

10) ເຄື່ອງດື່ມສໍາເລັດຮູບ ເຊັ່ນ ນໍ້າອັດລົມ, ໂຊດາ, ເຄື່ອງດື່ມຊູກໍາລັງ;

11) ເຄື່ອງແກ້ວຄຣິສຕັນທີ່ເປັນເຄື່ອງໃຊ້ ແລະ ປະດັບ, ໂຄມໄຟປະດັບ;

12) ຜ້າພົມທີ່ເຮັດດ້ວຍຂົນແກະ ຫຼື ຂົນລະອຽດຂອງສັດ;

13) ນໍ້າຫອມ, ຜະລິດຕະພັນເຄື່ອງສໍາອາງ, ອຸປະກອນຮັບໃຊ້ການເສີມສວຍ ແລະ ເສີມຄວາມງາມ;

14) ໄພ້ ແລະ ເຄື່ອງຫຼິ້ນການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ;

15) ບັ້ງໄຟ, ດອກໄມ້ໄຟ, ໝາກກະໂພກ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ;

16) ເຮືອໄວ, ເຮືອຢັອດ ແລະ ເຮືອກິລາທີ່ແລ່ນດ້ວຍເຄື່ອງຈັກ;

17) ອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມ (ຈານດາວທຽມ, ກ່ອງຮັບສັນຍານ);

18) ເຄື່ອງຫຼິ້ນສຽງ ແລະ ພາບ, ກ້ອງຖ່າຍຮູບ, ໂທລະສັບ, ເຄື່ອງອັດສຽງ ແລະ ພາບ, ເຄື່ອງດົນຕີ;

19) ເຮືອບິນບໍ່ມີຄົນຂັບ, ເຄື່ອງຖ່າຍພາບທາງອາກາດ, ເຄື່ອງບິນດ້ວຍຈ້ອງ ແລະ ເຄື່ອງຈັກໄອພົ່ນຂະໜາດນ້ອຍ;

20) ໂຕະບິລຽດ, ໂຕະສະນຸກເກີ, ອຸປະກອນໂບລິ້ງ, ໂຕະຫຼິ້ນບານເຕະ;

21) ເຄື່ອງຫຼິ້ນເກມທຸກປະເພດ ເຊັ່ນ: ເພລເຕຊັນ ເອັກບັອກ.

5.2. ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້:

1) ການບັນເທີງ: ໂຮງເຕັ້ນລໍາ, ດິດສະໂກ້ເທັກ, ຄາຣາໂອເກະ;

2) ກິດຈະການໂບລິ້ງ;

3) ກິດຈະການສັນຍາກໍາເກີດເສີມຄວາມງາມ;

4) ກິດຈະການບໍລິການໂທລະສັບ, ສັນຍາຍໂທລະພາບສາຍໄຍ, ສັນຍານໂທລະພາບດີຈີຕອນ;

5) ກິດຈະການບໍລິການອິນເຕີເນັດ;

6) ກິດຈະການສະໜາມກັອຟ;

7) ກິດຈະການຫວຍ ທີ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງ;

8) ກິດຈະການ ກາຊີໂນ, ຕູ້ເກມຢອກຫຼຽນ ແລະ ຫຼິ້ນເກມທຸກປະເພດ;

9) ກິດຈະການແຂ່ງລົດ, ແຂ່ງມ້າ, ຕີໄກ່;

10) ກິດຈະການບາລູນ, ບໍລິການບິນດ້ວຍຈ້ອງ ຫຼື ຈັກອາຍພົ່ນຂະໜາດນ້ອຍ, ການບໍລິການຖ່າຍພາບທາງອາກາດ.

6. ມາດຕາ 12 ສິນຄ້າ ແລະ ການບໍລິການ ທີ່ຖືກຍົກເວັ້ນອາກອນຊົມໃຊ້

ລາຍການ ສິນຄ້າ ແລະ ການບໍລິການ ທີ່ຖືກຍົກເວັ້ນອາກອນຊົມໃຊ້ ແມ່ນ ໄດ້ຮັບການຍົກເວັ້ນອາກອນຊົມໃຊ້ ຕາມເປົ້າໝາຍນໍາໃຊ້ທີ່ມີລັກສະນະສິ່ງເສີມການຜະລິດ ຢູ່ພາຍໃນປະເທດ ເປັນຕົ້ນ ປະເພດກົນຈັກໜັກ ແລະ ກົນຈັກກະສິກໍາ. ສິນຄ້າ ແລະ ການບລິການ ຈໍານວນໜຶ່ງ ແມ່ນ ໄດ້ຮັບການຍົກເວັ້ນອາກອນຊົມໃຊ້ ຕາມນະໂຍບາຍດ້ານສາທາລະນະປະໂຫຍດ ຂອງສັງຄົມ ແລະ ອີກຈໍານວນໜຶ່ງ ແມ່ນ ລາຍການ ສິນຄ້າ ແລະ ການບໍລິການທີ່ຖືກເສຍອາກອນຊົມໃຊ້ ແຕ່ໄດ້ຮັບການຍົກເວັ້ນອາກອນຊົມໃຊ້ ໃນກໍລະນີສິນຄ້າດັ່ງກ່າວເປັນສິນຄ້າຜ່ານແດນ ແລະ ສິນຄ້າສົ່ງອອກ ດັ່ງນີ້:

6.1. ສິນຄ້າ ຕາມລາຍການທີ່ຖືກເສຍອາກອນຊົມໃຊ້ ທີ່ກໍານົດໄວ້ໃນມາດຕາ 11 ຂໍ້ ກ ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ຖືກຍົກເວັ້ນອາກອນຊົມໃຊ້ ຂອງ ສປປ ລາວ ໃນກໍລະນີ ສິນຄ້າດັ່ງກ່າວເປັນສິນຄ້າຜ່ານແດນ ຫຼື ທີ່ຜະລິດຢູ່ພາຍໃນປະເທດ ເພື່ອສົ່ງອອກໄປຕ່າງປະເທດ, ຊຶ່ງໝາຍເຖິງ ສິນຄ້າດັ່ງກ່າວນັ້ນ ແມ່ນ ບໍ່ຖືກນໍາໃຊ້ ຫຼື ຊົມໃຊ້ຢູ່ພາຍໃນ ສປປ ລາວ ຈຶ່ງບໍ່ຖືກເສຍອາກອນຊົມໃຊ້ ຢູ່ ສປປ ລາວ, ສິນຄ້າຜ່ານແດນ ຫຼື ສິນຄ້າສົ່ງອອກ ຕ້ອງ

ມີເອກະສານຄວບຄຸມ ແລະ ຕິດຕາມ ພາຍໃຕ້ການຄຸ້ມຄອງ ຂອງຂະແໜງພາສີ, ສິນຄ້າຜ່ານແດນ ແລະ ສິນຄ້າສົ່ງອອກ ຫ້າມຈຳໜ່າຍຢູ່ພາຍໃນປະເທດຢ່າງເດັດຂາດ;

6.2. ເຫຼົ້າສຳລັບຮັບໃຊ້ວຽກງານການແພດ ແມ່ນ ເຫຼົ້າ 90 ອົງສາໃຊ້ສຳລັບຂ້າເຊື້ອພະຍາດ, ເຫຼົ້າ 70 ແລະ 75 ອົງສາ ໃຊ້ສຳລັບ ລ້າງ ຫຼື ທຳຄວາມສະອາດບາດແຜ ຈະເປັນການນຳເຂົ້າ ຫຼື ຜະລິດຢູ່ພາຍໃນປະເທດ ກໍໄດ້ຮັບການຍົກເວັ້ນອາກອນຊົມໃຊ້;

6.3. ລົດ ແລະ ເຄື່ອງຮັບໃຊ້ ທີ່ນຳເຂົ້າໂດຍສະຖານທູດ, ສະຖານກົງສຸນໃຫຍ່ ແລະ ອົງການຈັດຕັ້ງສາກົນປະຈຳຢູ່ ສປປ ລາວ ຕາມລະບຽບການ ແມ່ນ ລົດ ແລະ ວັດຖຸປະກອນ ທີ່ຮັບໃຊ້ວຽກງານທາງລັດຖະການ ຂອງອົງການດັ່ງກ່າວ ຕາມ ຂໍ້ຕົກລົງ, ສັນຍາ ຫຼື ສົນທິສັນຍາສາກົນ ລະຫວ່າງ ລັດຖະບານ ແຫ່ງສປປ ລາວ ແລະ ບັນດາປະເທດທີ່ມີສາຍພົວພັນການທູດ ກັບ ສປປ ລາວ ແລະອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ;

6.4. ບັ້ງໄຟ, ດອກໄມ້ໄຟ, ໝາກກະໂພກ ທີ່ການຈັດຕັ້ງຂອງລັດນຳເຂົ້າມາ ເພື່ອຮັບໃຊ້ການສະເຫຼີມສະຫຼອງງານສຳຄັນທີ່ເປັນທາງການ, ຜູ້ນຳເຂົ້າລາຍການສິນຄ້າດັ່ງກ່າວ ຕ້ອງມີເອກະສານອະນຸຍາດ ຈາກຂະແໜງການລັດທີ່ກ່ຽວຂ້ອງ ຍື່ນຕໍ່ເຈົ້າໜ້າທີ່ ພາສີ ແລະ ເຈົ້າໜ້າທີ່ອື່ນ ທີ່ປະຈຳຢູ່ດ່ານບ່ອນນຳເຂົ້າ ເພື່ອພິຈາລະນາຍົກເວັ້ນອາກອນຊົມໃຊ້ໃຫ້ຕາມກົດໝາຍກຳນົດ;

6.5. ລົດກູ້ໄພ, ເຮືອບິນກູ້ໄພ, ເຮືອກູ້ໄພ, ລົດຮັບສົ່ງຄົນເຈັບ ຂອງໂຮງໝໍ, ລົດມອດໄພ ແລະ ລົດຮັບໃຊ້ວິຊາສະເພາະ ຂອງກຳລັງປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ, ລົດຮັບໃຊ້ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແມ່ນ ລົດຫຸ້ມເກາະ, ລົດຖັງ, ລົດລຳລຽງຂອງກຳລັງປະກອບອາວຸດ, ລົດສ້ອມແປງເຄື່ອນທີ່ ແລະ ລົດວິຊາສະເພາະອື່ນໆ;

ສຳລັບລົດຮັບໃຊ້ວຽກງານບໍລິຫານ ເຊັ່ນ: ລົດເກັງ, ລົດຕູ້, ລົດຈິບ, ລົດກະບະ ແລະ ລົດປະເພດອື່ນ ແມ່ນບໍ່ໄດ້ຮັບການຍົກເວັ້ນອາກອນຊົມໃຊ້;

6.6. ກົນຈັກຮັບໃຊ້ ວິຊາສະເພາະການຜະລິດກະສິກຳໂດຍກົງ ທີ່ຜະລິດ ຢູ່ພາຍໃນປະເທດ ແລະ ນຳເຂົ້າຈາກຕ່າງປະເທດ ເຊັ່ນ: ລົດໄຖນາ ,ລົດດຳນາ ,ລົດຄາດນາ ,ລົດກ່ຽວເຂົ້າ, ລົດປັ່ນເຂົ້າ, ລົດຢອດເມັດ ແລະ ເຄື່ອງກົນຈັກອື່ນສຳລັບການປູກຝັງ ແລະ ລ້ຽງສັດ; ກົນຈັກຮັບໃຊ້ວຽກງານກະສິກຳໂດຍກົງ ສາມາດນຳເຂົ້າ ແລະ ສະໜອງໂດຍ ບຸກຄົນ , ນິຕິບຸກຄົນ ຫຼື ການຈັດຕັ້ງ ຈະດຳເນີນທຸລະກິດ ຫຼື ບໍ່ກໍ່ຕາມ, ເພື່ອການຊົມໃຊ້ເອງ ຫຼື ເພື່ອຈຳໜ່າຍໃຫ້ຜູ້ອື່ນ ກໍ່ຕາມແມ່ນ ໄດ້ຮັບການຍົກເວັ້ນອາກອນຊົມໃຊ້; ສຳລັບລົດຂົນສົ່ງຜົນຜະລິດກະສິກຳ ແມ່ນ ບໍ່ໄດ້ຮັບການຍົກເວັ້ນອາກອນຊົມໃຊ້ ແລະ ຖືວ່າເປັນຍານພາຫະນະທົ່ວໄປທີ່ຕ້ອງໄດ້ເສຍອາກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 11 ແລະ ມາດຕາ 15 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້;

6.7. ລົດກົນຈັກໜັກ ເຊັ່ນ: ລົດດູດ, ລົດໄຖ, ລົດຈົກດິນ-ຕັກດິນ, ລົດເກດ, ລົດຕອກເສົາເຂັມ ທີ່ຮັບໃຊ້ການຜະລິດໂດຍກົງ ແລະ ເປັນຊັບສິນບັດຄົງທີ່ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນທຸລະກິດ ຈະແມ່ນນຳເຂົ້າຈາກຕ່າງປະເທດ, ຜະລິດ ຫຼື ປະກອບຢູ່ພາຍໃນປະເທດ ກໍໄດ້ຮັບການຍົກເວັ້ນອາກອນຊົມໃຊ້;

6.8. ພາຫະນະນຳເຂົ້າຊົ່ວຄາວ ເພື່ອຮັບໃຊ້ໂຄງການຕາມສັນຍາລົງທຶນ ຂອງລັດຖະບານ, ໂຄງການຂອງເອກະຊົນ ລວມທັງລົດຂອງ ນັກຊ່ຽວຊານທີ່ເຂົ້າມາປະຕິບັດໜ້າທີ່ຢູ່ ສປປ ລາວໃນໄລຍະຊົ່ວຄາວຕາມສັນຍາ ແມ່ນພາຫະນະທີ່ນອນຢູ່ໃນລາຍການທີ່ຖືກເສຍອາກອນຊົມໃຊ້ຕາມມາດຕາ 11 ແລະ ມາດຕາ 15 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້, ຊຶ່ງຜູ້ຮັບເໝົາ ຫຼື ຜູ້ປະຕິບັດໂຄງານໄດ້ນຳເຂົ້າມາເພື່ອນຳໃຊ້ເຂົ້າໃນໂຄງການຕ່າງໆ ພາຍຫຼັງສຳເລັດໂຄງການແລ້ວ ຕ້ອງໄດ້ນຳອອກຄືນ ແມ່ນ ຈະໄດ້ຮັບການຍົກເວັ້ນອາກອນຊົມໃຊ້; ໃນກໍລະນີສຳເລັດໂຄງການແລ້ວແຕ່ບໍ່ໄດ້ນຳອອກຄືນ ແລະໄດ້ຂາຍ ຫຼື ໂອນກຳມະສິດຢູ່ໃນ ສປປ ລາວ ແມ່ນຈະຕ້ອງໄດ້ເສຍອາກອນຊົມໃຊ້ຕາມກົດໝາຍວ່າດ້ວຍອາກອນຊົມໃຊ້ໃຫ້ຖືກຕ້ອງ ແລະ ຄົບຖ້ວນ;

6.9. ພາຫະນະທີ່ໄດ້ຮັບການຊ່ວຍເຫຼືອລ້າຈາກຕ່າງປະເທດ ອົງຕາມສັນຍາການສະໜອງທຶນ ແມ່ນ ພາຫະນະທີ່ຕ່າງປະເທດໃຫ້ການຊ່ວຍເຫຼືອແກ່ອົງການຈັດຕັ້ງຂອງລັດຂັ້ນຕ່າງໆໂດຍສະເພາະ;

6.10. ລົດຈັກທີ່ນຳໃຊ້ພະລັງງານສະອາດ ແມ່ນລົດຈັກທີ່ນຳໃຊ້ພະລັງງານໄຟຟ້າ ໂດຍມີການສາກໄຟ ຫຼື ເຕີມພະລັງງານເຂົ້າໃນໝໍ້ເກັບພະລັງງານ ຫຼື ໝໍ້ເກັບໄຟໄວ້ ຫຼື ລົດທີ່ນຳໃຊ້ພະລັງງານແສງຕາເວັນ ແລະພະລັງງານທົດແທນອື່ນ ທີ່ບໍ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ; ຈະເປັນລົດທີ່ນຳເຂົ້າ, ຜະລິດ ຫຼື ປະກອບຢູ່ພາຍໃນປະເທດ ກໍ່ໄດ້ຮັບການຍົກເວັ້ນອາກອນຊົມໃຊ້;

6.11. ສຳລັບພາຫະນະທີ່ນຳໃຊ້ 2 ລະບົບ (ພະລັງງານເຊື້ອໄຟ ແລະ ພະລັງງານສະອາດ) ແມ່ນ ບໍ່ໄດ້ຮັບການຍົກເວັ້ນອາກອນຊົມໃຊ້.

6.12. ຊິ້ນສ່ວນປະກອບພາຫະນະນຳເຂົ້າ ເພື່ອມາປະກອບຢູ່ໃນລະບົບໂຮງງານພາຍໃນປະເທດ ແມ່ນ ຊິ້ນສ່ວນໃນຮູບແບບຊີເຄດີ ແລະ ຮູບແບບໄອເຄດີ ຊຶ່ງຊິ້ນສ່ວນ ສອງຮູບແບບດັ່ງກ່າວ ຕ້ອງມີຈຸດປະສົງເພື່ອນຳມາປະກອບເປັນລົດສຳເລັດຮູບ ຢູ່ໂຮງງານປະກອບ ພາຍໃນປະເທດເທົ່ານັ້ນ, ພາຍຫຼັງໄດ້ປະກອບສຳເລັດ ສົມບູນ ແລະຈຳໜ່າຍຢູ່ພາຍປະເທດເມື່ອໃດ ແມ່ນຈະຖືກຄິດໄລ່ໃຫ້ເສຍອາກອນຊົມໃຊ້ ຕາມອັດຕາອາກອນຊົມໃຊ້ ຂອງແຕ່ລະປະເພດພາຫະນະ ຕາມທີ່ໄດ້ກຳນົດໄວ້ຢູ່ໃນ ມາດຕາ 15 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ບົນພື້ນຖານລາຄາຂາຍອອກຈາກໂຮງງານປະກອບໃນກໍລະນີສະໜອງໃຫ້ລູກຄ້າທົ່ວໄປ ແລະ ບົນພື້ນຖານລາຄາຕົ້ນທຶນການຜະລິດ ຫຼື ການປະກອບໃນກໍລະນີຊົມໃຊ້ເອງ ຫຼື ສະໜອງໃຫ້ຕົນເອງ,ໃຫ້ເປັນຂອງແຖມ ຫຼື ໃຫ້ເປັນລາງວັນ. ເນື່ອງຈາກວ່າອາກອນຊົມໃຊ້ບໍ່ໄດ້ກຳນົດໃຫ້ມີກົນໄກການຫັກ ແລະ ສົ່ງຄືນ ຄືກັບອາກອນມູນຄ່າເພີ່ມ. ດັ່ງນັ້ນ, ສິນຄ້າ, ວັດຖຸດິບ, ວັດຖຸເຄິ່ງສຳເລັດຮູບ ແລະ ຊິ້ນສ່ວນປະກອບທີ່ຕ້ອງເສຍອາກອນຊົມໃຊ້ ແຕ່ຖືກນຳມາ ສຳລັບການຜະລິດ,ການປະກອບ ໃຫ້ກາຍເປັນຜະລິດຕະພັນສຳເລັດຮູບທີ່ຖືກເສຍອາກອນຊົມໃຊ້ ຢູ່ໂຮງງານພາຍໃນປະເທດ ແມ່ນຈະໄດ້ຮັບການຍົກເວັ້ນອາກອນຊົມໃຊ້ ຫຼື ຍັງບໍ່ທັນໃຫ້ເສຍອາກອນຊົມໃຊ້ເທື່ອ;

ກໍລະນີ ວັດຖຸດິບ ແລະ ຊິ້ນສ່ວນປະກອບ ລວມທັງເຄື່ອງອາໄຫຼ່ທີ່ຖືກເສຍອາກອນຊົມໃຊ້ ຊຶ່ງນຳເຂົ້າ ຫຼື ຜະລິດຢູ່ພາຍໃນປະເທດ ເພື່ອນຳໃຊ້ເຂົ້າໃນການຜະລິດ ຫຼື ມາປະກອບເປັນສິນຄ້າ ຫຼື ຜະລິດຕະພັນທີ່ບໍ່ຖືກເສຍອາກອນຊົມໃຊ້;

ກໍລະນີ ວັດຖຸດິບ ແລະ ຊິ້ນສ່ວນປະກອບ ລວມທັງເຄື່ອງອາໄຫຼ່ ອື່ນໆທີ່ຖືກເສຍອາກອນຊົມໃຊ້ ຊຶ່ງນຳເຂົ້າ ຫຼື ຜະລິດຢູ່ພາຍໃນປະເທດ ເພື່ອຂາຍທົ່ວໄປ ແມ່ນຈະບໍ່ໄດ້ຮັບການຍົກເວັ້ນອາກອນຊົມໃຊ້.

## 7. ມາດຕາ 14 ພື້ນຖານຄິດໄລ່ອາກອນຊົມໃຊ້

ພື້ນຖານຄິດໄລ່ອາກອນຊົມໃຊ້ຈາກ ສິນຄ້າ ແລະ ການບໍລິການ ມີ ດັ່ງນີ້:

7.1. ພື້ນຖານຄິດໄລ່ອາກອນຊົມໃຊ້ ສຳລັບສິນຄ້ານຳເຂົ້າ ແມ່ນ ມູນຄ່າແຈ້ງພາສີ (ມູນຄ່າຂອງສິນຄ້າ, ຄ່າປະກັນໄພ, ຄ່າຂົນສົ່ງ ແລະ ຄ່າທຳນຽມອື່ນໆ) ບວກຄ່າພາສີ (ຖ້າມີ); ຄ່າທຳນຽມອື່ນໆ ແມ່ນ ຄ່ານາຍໜ້າ, ຄ່າຫຸ້ມຫໍ່, ຄ່າຄ່ຽນຖ່າຍ ແລະ ຄ່າຝາກສາງ ເຫຼົ່ານີ້ເປັນຕົ້ນ; ການນຳເຂົ້າສິນຄ້າທີ່ຕ້ອງເສຍອາກອນຊົມໃຊ້ ແມ່ນ ການນຳເຂົ້າຈາກຕ່າງປະເທດ, ຈາກເຂດເສດຖະກິດພິເສດ ແລະ ຈາກເຂດປອດພາສີ ໂດຍບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຈະດຳເນີນທຸລະກິດ ຫຼື ບໍ່ ກໍຕາມ; ການນຳເຂົ້າສິນຄ້າຈາກຕ່າງປະເທດ ແມ່ນ ການນຳເຂົ້າມາຮອດດ່ານຊາຍແດນບ່ອນນຳເຂົ້າ ຊຶ່ງແມ່ນສະຖານທີ່ ທີ່ສິນຄ້າຖືກນຳເຂົ້າມາໃນ ສປປ ລາວ ຫຼື ສະຖານທີ່ຕ້ອງຍື່ນໃບແຈ້ງພາສີຂາເຂົ້າໃຫ້ແກ່ຂະແໜງພາສີ; ການນຳເຂົ້າສິນຄ້າ ຈາກເຂດເສດຖະກິດພິເສດ ແລະ ຈາກເຂດປອດພາສີ ແມ່ນການສົ່ງສິນຄ້າອອກນອກເຂດ ດັ່ງກ່າວມາພາຍໃນ ສປປ ລາວ ໂດຍມີການລະບຸໄວ້ຢູ່ໃນໃບນຳສົ່ງ ຫຼື ເອກະສານອື່ນ ທີ່ກ່ຽວຂ້ອງກັບສິນຄ້າດັ່ງກ່າວເປັນລາຍລະອຽດ; ອາກອນຊົມໃຊ້ຂອງສິນຄ້ານຳເຂົ້າທີ່ຜູ້ດຳເນີນທຸລະກິດໄດ້ຈ່າຍຢູ່ບ່ອນນຳເຂົ້ານັ້ນ ແມ່ນ ອະນຸຍາດໃຫ້ເປັນລາຍຈ່າຍດ້ານລ່ວຍລາອາກອນໄດ້.

ສຳລັບການນຳເຂົ້າ ເບຍ, ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ ຈາກຕ່າງປະເທດ, ຈາກເຂດເສດຖະກິດພິເສດ ຫຼື ຈາກເຂດປອດພາສີ ນັ້ນ ພາຍຫຼັງທີ່ໄດ້ຄິດໄລ່ ແລະ ໃຫ້ເສຍອາກອນຊົມໃຊ້ຢູ່ດ່ານບ່ອນນຳເຂົ້າຕາມມູນຄ່າແຈ້ງພາສີ ບວກຄ່າພາສີ (ຖ້າມີ) ໃນກໍລະນີນຳເຂົ້າຈາກຕ່າງປະເທດ ແລະ ຕາມມູນຄ່າຢູ່ໃນເອກະສານນຳ

ສິ່ງສິນຄ້າ ບວກຄ່າພາສີ (ຖ້າມີ) ໃນກໍລະນີ ນໍາເຂົ້າຈາກເຂດເສດຖະກິດພິເສດ ຫຼື ຈາກເຂດປອດພາສີ ແລ້ວ ຍັງຈະຕ້ອງໄດ້ຄິດໄລ່ ແລະ ເກັບ ອາກອນຊົມໃຊ້ ບົນພື້ນຖານລາຄາຂາຍຢູ່ພາຍໃນປະເທດບໍ່ລວມອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ລົບ ໃຫ້ພື້ນຖານຄິດໄລ່ອາກອນຊົມໃຊ້ ຢູ່ຂອດນໍາເຂົ້າອີກຕື່ມ; ອາກອນຊົມໃຊ້ທີ່ໄດ້ເສຍຢູ່ໃນຂອດນໍາເຂົ້າ ແມ່ນອະນຸຍາດໃຫ້ເປັນລາຍຈ່າຍດ້ານສ່ວຍສາອາກອນໄດ້, ສ່ວນອາກອນຊົມໃຊ້ທີ່ເກັບບົນພື້ນຖານຈາກສ່ວນຜິດດ່ຽງລະຫວ່າງລາຄາຂາຍຍົກຢູ່ພາຍໃນປະເທດ ລົບໃຫ້ພື້ນຖານຄິດໄລ່ຂອດນໍາເຂົ້ານັ້ນ ແມ່ນບໍ່ອະນຸຍາດໃຫ້ເປັນລາຍຈ່າຍດ້ານສ່ວຍສາອາກອນ.

ຜູ້ນໍາເຂົ້າສິນຄ້າປະເພດ ເບຍ, ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ ຕ້ອງສະໜອງລາຄາຂາຍ ຢູ່ພາຍໃນປະເທດ ເພື່ອເປັນບ່ອນອີງໃນການຊອກຫາພື້ນຖານຄິດໄລ່ອາກອນຊົມໃຊ້ພາຍໃນ, ກໍລະນີຜູ້ນໍາເຂົ້າບໍ່ສາມາດສະໜອງລາຄາຂາຍໄດ້ ເຈົ້າໜ້າທີ່ສ່ວຍສາອາກອນ ຫຼື ເຈົ້າໜ້າທີ່ ທີ່ຖືກມອບໝາຍໃຫ້ເກັບອາກອນຊົມໃຊ້ ຈາກສິນຄ້າດັ່ງກ່າວ ຈະອີງໃສ່ລາຄາຂາຍ ສິນຄ້າປະເພດດຽວກັນທີ່ຜະລິດຢູ່ພາຍໃນປະເທດ ເພື່ອຊອກຫາ ແລະ ກໍານົດພື້ນຖານຄິດໄລ່ອາກອນຊົມໃຊ້.

ເຈົ້າໜ້າທີ່ພາສີ ແລະ/ຫຼື ເຈົ້າໜ້າທີ່ອື່ນ ທີ່ຖືກມອບໝາຍໃຫ້ເກັບອາກອນຊົມໃຊ້ ທີ່ປະຈໍາຢູ່ດ່ານບ່ອນນໍາເຂົ້າ ຫຼື ປະຈໍາຢູ່ເຂດເສດຖະກິດພິເສດ ຫຼື ເຂດປອດພາສີ ຕ້ອງສົ່ງເອກະສານ-ຂໍ້ມູນກ່ຽວກັບການຄິດໄລ່ ແລະ ເກັບອາກອນຊົມໃຊ້ ໃນຂອດນໍາເຂົ້າ ສິນຄ້າ ປະເພດ ເບຍ, ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ ໃຫ້ເຈົ້າໜ້າທີ່ສ່ວຍສາອາກອນ ເພື່ອຄຸ້ມຄອງ, ຕິດຕາມ ແລະ ຄິດໄລ່ ເກັບອາກອນຊົມໃຊ້ ສິນຄ້າດັ່ງກ່າວ ຢູ່ຂອດພາຍໃນປະເທດໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມກົດໝາຍກໍານົດ;

ຕົວຢ່າງການຄິດໄລ່ອາກອນຊົມໃຊ້ການນໍາເຂົ້າສິນຄ້າຈາກຕ່າງປະເທດ, ຈາກເຂດເສດຖະກິດ ແລະ ຈາກເຂດປອດພາສີ ມີ ດັ່ງນີ້:

7.1.1. **ການນໍາເຂົ້າສິນຄ້າຈາກຕ່າງປະເທດ:**

**ຕົວຢ່າງ 1:** ການຄິດໄລ່ອາກອນຊົມໃຊ້ຈາກ ການນໍາເຂົ້າລົດໃຫຍ່: ສົມມຸດວ່າບໍລິສັດ ຈໍາກັດ ຂ ດໍາເນີນທຸລະກິດນໍາເຂົ້າ ແລະ ຈໍາໜ່າຍລົດໃຫຍ່ຢູ່ພາຍໃນປະເທດ, ໃນເດືອນ ສິງຫາ 2021 ໄດ້ນໍາເຂົ້າລົດກະບະໂຕໂຍຕ້າຣີໂວ 4 ປະຕູ ລຸ້ນສູງ, ຄວາມແຮງ 3.000 ຊີຊີ ຈໍານວນ 70 ຄັນ, ມູນຄ່າແຈ້ງພາສີ 15.000 $/ຄັນ; ສົມມຸດວ່າ ອັດຕາແລກປ່ຽນ 1 $ = 9.800 ກີບ, ສົມມຸດອັດຕາພາສີ: 30%. ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້ :

- ມູນຄ່າແຈ້ງພາສີເປັນເງິນກີບ: 15.000 x 70 x 9.800 = 10.290.000.000 ກີບ;
- ຄ່າພາສີຂາເຂົ້າ: 10.290.000.000 x 30 % = 3.087.000.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້: 10.290.000.000+3.087.000.000 = 13.377.000.000 ກີບ;
- ອາກອນຊົມໃຊ້: 13.377.000.000 x 52% = **6.956.040.000 ກີບ.**

ໃນກໍລະນີການນໍາເຂົ້າລົດດັ່ງກ່າວໄດ້ຮັບການປະຕິບັດອັດຕາ ພາສີ 0% ຫຼື ໄດ້ຮັບການຍົກເວັ້ນພາສີ ແມ່ນໃຫ້ຖືເອົາມູນຄ່າແຈ້ງພາສີ (CIF) ເປັນພື້ນຖານຄິດໄລ່ອາກອນຊົມໃຊ້ ດັ່ງນີ້:

- ມູນຄ່າແຈ້ງພາສີເປັນເງິນກີບ ຫຼື ຖານຄິດໄລ່ອາກອນຊົມໃຊ້: 15.000 x 70 x 9.800 = 10.290.000.000 ກີບ;
- ພາສີ (ອັດຕາ 0% ຫຼື ຍົກເວັ້ນ) = 0 ກີບ;
- ອາກອນຊົມໃຊ້: 10.290.000.000 x 52% = **5.350.800.000 ກີບ.**

**ໝາຍເຫດ** : ອັດຕາອາກອນຊົມໃຊ້ ສໍາລັບລົດກະບະໂຕໂຍຕ້າ ຣີໂວ 4 ປະຕູ, ລຸ້ນສູງ, ຄວາມແຮງ 3.000 ຊີຊີ ແມ່ນອັດຕາ 52% ຕາມທີ່ໄດ້ກໍານົດໄວ້ຢູ່ໃນ ຂໍ້ 8 ຂໍ້ 2.1.1.1 ອັນດັບທີ່ 5 ຂອງຄໍາແນະນໍາສະບັບນີ້.

**ຕົວຢ່າງ 2:** ການຄິດໄລ່ອາກອນຊົມໃຊ້ ຈາກນໍ້າມັນເຊື້ອໄຟ: ສົມມຸດວ່າບໍລິສັດ ຈາກັດ ກ ດໍາເນີນທຸລະກິດນໍາເຂົ້າ ແລະຈໍາໜ່າຍນໍ້າມັນເຊື້ອໄຟຢູ່ພາຍໃນປະເທດ,ໃນເດືອນ ກໍລະກົດ 2021 ໄດ້ນໍາເຂົ້ານໍ້າມັນແອັດຊັງທໍາມະດາ

ຈຳນວນ 1.200.000 ລິດ, ມູນຄ່າແຈ້ງພາສີ ແມ່ນ 0,4679 $/ລິດ; ນ້ຳມັນກາຊວນ ຈຳນວນ 1.500.000 ລິດ, ມູນຄ່າແຈ້ງພາສີ ແມ່ນ 0,4745 $/ລິດ; ສົມມຸດວ່າ ອັດຕາແລກປ່ຽນ 1 $ = 9.800 ກີບ, ອັດຕາພາສີ ສຳລັບແອັດຊັງທຳມະດາ: 15% , ກາຊວນ: 5%. ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້ :

ກ. ນ້ຳມັນອັດຊັງທຳມະດາ:

- ມູນຄ່າແຈ້ງພາສີເປັນເງິນກີບ ສຳລັບແອັດຊັງທຳມະດາ: 0,4679 x 1.200.000 x 9.800 = 5.502.504.000 ກີບ;
- ຄ່າພາສີ ສຳລັບແອັດຊັງທຳມະດາ: 5.502.504.000 x 15% = 825.375.600 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້: 5.502.504.000 + 825.375.600 = 6.327.879.600 ກີບ;
- ອາກອນຊົມໃຊ້ແອັດຊັງທຳມະດາ: 6.327.879.600 x 31% = **1.961.642.676 ກີບ;**

ຂ. ນ້ຳມັນກາຊວນ :

- ມູນຄ່າແຈ້ງພາສີ ເປັນເງິນກີບສຳລັບນ້ຳມັນກາຊວນ: 0,4745 x 1.500.000 x 9.800 = 6.975.150.000 ກີບ;
- ຄ່າພາສີ ສຳລັບນ້ຳມັນກາຊວນ: 6.975.150.000 x 5% = 348.757.500 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້: 6.975.150.000 + 348.757.500 = 7.323.907.500 ກີບ;
- ອາກອນຊົມໃຊ້ນ້ຳມັນກາຊວນ: 7.323.907.500 x 21% = **1.538.020.575 ກີບ;**
- ລວມອາກອນຊົມໃຊ້ທີ່ຕ້ອງເສຍ: **1.961.642.676 +1.538.020.575= 3.499.663.251 ກີບ.**

**ໝາຍເຫດ:** ອັດຕາອາກອນຊົມໃຊ້ ສຳລັບ ນ້ຳມັນແອັດຊັງທຳມະດາ ແມ່ນ 31%, ນ້ຳມັນກາຊວນ ແມ່ນ 21% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 1.2) ແລະ 1.3) ຂອງຄຳແນະນຳສະບັບນີ້ ເນື່ອງຈາກວ່າ ສິນຄ້າປະເພດນ້ຳມັນເຊື້ອໄຟເປັນສິນຄ້າຍຸດທະສາດ, ສິນຄ້າຄວບຄຸມ ແລະ ເປັນສິນຄ້ານຳເຂົ້າ ຈຶ່ງມີການກຳນົດໂຄງສ້າງລາຄາ, ພາສີ ແລະ ປະເພດອາກອນຕ່າງໆເປັນອັນລະອຽດໃນແຕ່ລະໄລຍະທີ່ມີການປ່ຽນແປງ ປັບຂຶ້ນ ຫຼື ປັບລົງ ໂດຍກະຊວງອຸດສາຫະກຳ ແລະ ການຄ້າ. ດັ່ງນັ້ນ, ການເກັບອາກອນຊົມໃຊ້ ແລະ ອາກອນປະເພດອື່ນ ແມ່ນໃຫ້ອີງໃສ່ຕາຕະລາງໂຄງສ້າງລາຄາດັ່ງກ່າວ.

**ຕົວຢ່າງ 3:** ການຄິດໄລ່ອາກອນຊົມໃຊ້ຈາກ ເຄື່ອງອາໄຫຼ່ປ່ຽນຖ່າຍລົດໃຫຍ່ ແລະ ເຄື່ອງຕົບແຕ່ງ: ສົມມຸດວ່າບໍລິສັດ ຈຳກັດຜູ້ດຽວ ແສງຈະເລີນການຄ້າ ໃນເດືອນ ສິງຫາ 2022 ໄດ້ນຳເຂົ້າເຄື່ອງອາໄຫຼ່ລົດ ປ່ຽນຖ່າຍສຳລັບການສ້ອງແປງ ມູນຄ່າແຈ້ງພາສີ 150.000 $ ແລະ ເຄື່ອງຕົບແຕ່ງພາຫະນະ ມູນຄ່າແຈ້ງພາສີ: 170.000 $; ສົມມຸດວ່າ ອັດຕາແລກປ່ຽນ 1 $ = 9.800 ກີບ,ອັດຕາພາສີ ສຳລັບອາໄຫຼ່ປ່ຽນຖ່າຍ 10%, ສຳລັບເຄື່ອງຕົບແຕ່ງປະດັບເອ້ພາຫະນະ 15%. ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

ກ. ເຄື່ອງອາໄຫຼ່ປ່ຽນຖ່າຍ ລົດໂດຍສານ ແລະ ລົດຂົນສົ່ງສິນຄ້າທຸກຊະນິດ:

- ມູນຄ່າແຈ້ງພາສີ ສຳລັບເຄື່ອງອາໄຫຼ່: 150.000 x 9.800 = 1.470.000.000 ກີບ;
- ຄ່າພາສີຂາເຂົ້າ: 1.470.000.000 x 10% = 147.000.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້: 1.470.000.000 + 147.000.000 = 1.617.000.000 ກີບ;
- ອາກອນຊົມໃຊ້ ເຄື່ອງອາໄຫຼ່: 1.617.000.000 x 11% = **177.870.000 ກີບ;**

ຂ. ເຄື່ອງສຽງ ຕົບແຕ່ງພາຫະນະ:

- ມູນຄ່າແຈ້ງພາສີ ສຳລັບເຄື່ອງສຽງຕົບແຕ່ງພາຫະນະ: 170.000 x 9.800 = 1.666.000.000 ກີບ;
- ຄ່າພາສີຂາເຂົ້າ: 1.666.000.000 x 15% = 249.900.000 ກີບ;
- ພື້ນຖານຄິດໄລ່ ອາກອນຊົມໃຊ້: 1.666.000.000 + 249.900.000 = 1.915.900.000 ກີບ;
- ອາກອນຊົມໃຊ້ ເຄື່ອງສຽງຕົບແຕ່ງ: 1.915.900.000 x 25% = 478.975.000 ກີບ;
- ລວມອາກອນຊົມໃຊ້ທີ່ຕ້ອງເສຍ: **177.870.000 + 478.975.000 = 656.845.000 ກີບ.**

ໝາຍເຫດ: ອັດຕາອາກອນຊົມໃຊ້ ສຳລັບ ເຄື່ອງອາໄຫຼ່ລົດໃຫຍ່ ແລະ ເຄື່ອງຕົບແຕ່ງພາຫະນະ ຕາມທີ່ໄດ້ກຳນົດໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 3 ແຖວທີ 2 ແລະ ຂໍ້ 4 ແຖວທີ 2 ຂອງຄຳແນະນຳສະບັບນີ້. ອາກອນຊົມໃຊ້ສຳລັບອາໄຫຼ່ປ່ຽນຖ່າຍ ແລະ ເຄື່ອງຕົບແຕ່ງພາຫະນະ ລວມທັງຊິ້ນສ່ວນປະກອບ ທີ່ບໍ່ຢູ່ໃນລະບົບໂຮງງານຜະລິດ ຫຼື ປະກອບພາຍໃນປະເທດ ແມ່ນຈະຖືກຄິດໄລ່ ແລະ ເກັບໃນເວລານຳເຂົ້າ ຢູ່ດ່ານບ່ອນນຳເຂົ້າ ຫຼື ຢູ່ສະຖານທີ່ບ່ອນນຳເຂົ້າໃຫ້ຖືກຕ້ອງ ແລະ ຄົບຖ້ວນ ເມື່ອມາຈຳໜ່າຍທົ່ວໄປຢູ່ພາຍໃນປະເທດ ແມ່ນຈະບໍ່ຖືກຄິດໄລ່ເກັບອາກອນຊົມໃຊ້ອີກ.

**ຕົວຢ່າງ 4:** ການຄິດໄລ່ອາກອນຊົມໃຊ້ ຈາກການນຳເຂົ້າລົດຈັກ: ສົມມຸດວ່າບໍລິສັດ ຈຳກັດຜູ້ດຽວ ກ ດຳເນີນທຸລະກິດ ນຳເຂົ້າ ແລະ ຈຳໜ່າຍລົດຈັກຢູ່ພາຍໃນປະເທດ, ໃນເດືອນ ຕຸລາ 2021 ໄດ້ນຳເຂົ້າລົດຈັກທີ່ໃຊ້ພະລັງງານເຊື້ອໄຟ ຍີ່ຫໍ້ຮອນດ້າ ແຮງ 110 ຊີຊີ ຈຳນວນ 300 ຄັນໃນຮູບແບບຊີບີຢູ, ມູນຄ່າແຈ້ງພາສີ 500 $/ຄັນ; ສົມມຸດວ່າ ອັດຕາພາສີ 30% , ອັດຕາແລກປ່ຽນ 1 $ = 9.800 ກີບ. ວິທີຄິດໄລ່ອາກອນຊົມໃຊ້ໃຫ້ປະຕິບັດ ດັ່ງນີ້:

- ມູນຄ່າແຈ້ງພາສີເປັນເງິນກີບ ຢູ່ບ່ອນນຳເຂົ້າ: 300 x 500 x 9.800 = 1.470.000.000 ກີບ;
- ຄ່າພາສີ: 1.470.000.000 x 30% = 441.000.000 ກີບ;
- ພື້ນຖານຄິດໄລ່ ອາກອນຊົມໃຊ້: 1.470.000.000 + 441.000.000 = 1.911.000.000 ກີບ;
- ອາກອນຊົມໃຊ້: 1.911.000.000 x 10% = **191.100.000 ກີບ.**

ໝາຍເຫດ: ອັດຕາອາກອນຊົມໃຊ້ ສຳລັບລົດຈັກ ຄວາມແຮງ 110 ຊີຊີ ລົງມາ ທີ່ນຳເຂົ້າສຳເລັດຮູບໃນຮູບແບບ ຊີບີຢູ ແມ່ນ ອັດຕາ 10% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 2 ຂໍ້ 1.1 ແຖວທີ 2 ຂອງຄຳແນະນຳສະບັບນີ້ .

**ຕົວຢ່າງ 5:** ການຄິດໄລ່ອາກອນຊົມໃຊ້ ຈາກ ເຄື່ອງຫຼິ້ນສຽງ ແລະ ພາບ: ສົມມຸດວ່າບໍລິສັດ ສະແຫວງບຸນ ຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ໃນເດືອນ ຕຸລາ 2021 ໄດ້ນຳເຂົ້າ ເຄື່ອງຫຼິ້ນສຽງ ແລະ ພາບ (DVD player) ຈຳນວນ 200 ເຄື່ອງ, ລາຄາແຈ້ງພາສີ: 50 $/ເຄື່ອງ; ເຄື່ອງດົນຕີຈຳນວນ 6 ຊຸດ,ລາຄາແຈ້ງພາສີ 3.000 $/ຊຸດ, ສົມມຸດວ່າ ອັດຕາແລກປ່ຽນ 1 $ = 9.800 ກີບ, ອັດຕາພາສີ ສຳລັບເຄື່ອງຫຼິ້ນສຽງ ແລະ ພາບ 15%, ສຳລັບເຄື່ອງດົນຕີ 20%. ວິທີຄິດໄລ່ ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

**ກ. ເຄື່ອງຫຼິ້ນສຽງ ແລະ ພາບ:**

- ມູນຄ່າແຈ້ງພາສີ ເປັນເງິນກີບ ສຳລັບເຄື່ອງຫຼິ້ນສຽງ ແລະ ພາບ: 200 x 50 x 9.800 = 98.000.000 ກີບ;
- ຄ່າພາສີ: 98.000.000 x 15% = 14.700.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້: 98.000.000 + 14.700.000 = 112.700.000 ກີບ;
- ອາກອນຊົມໃຊ້: 112.700.000 x 15% = **16.905.000 ກີບ.**

**ຂ. ເຄື່ອງດົນຕີ:**

- ມູນຄ່າແຈ້ງພາສີສຳລັບເຄື່ອງດົນຕີ: 6 x 3.000 x 9.800 = 176.400.000 ກີບ;
- ຄ່າພາສີ: 176.400.000 x 20% = 35.280.000 ກີບ;
- ພື້ນຖານຄິດໄລ່ ອາກອນຊົມໃຊ້: 176.400.000 + 35.280.000 = 211.680.000 ກີບ;
- ອາກອນຊົມໃຊ້: 211.680.000 x 15% = **31.752.000 ກີບ;**
- ລວມອາກອນຊົມໃຊ້ຕ້ອງເສຍ: **16.905.000 + 31.752.000 = 48.657.000 ກີບ.**

ໝາຍເຫດ: ອັດຕາອາກອນຊົມໃຊ້ ສຳລັບເຄື່ອງຫຼິ້ນສຽງ - ພາບ ແລະ ເຄື່ອງດົນຕີ ແມ່ນອັດຕາ 15% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 17 ຂອງຄຳແນະນຳສະບັບນີ້

**ຕົວຢ່າງ 6:** ການຄິດໄລ່ອາກອນຊົມໃຊ້ ຈາກເຫຼົ້າ, ເບຍ ແລະ ຢາສູບ: ສົມມຸດວ່າບໍລິສັດ ຈຳກັດ ຄ, ໃນເດືອນ ກັນຍາ 2022 ໄດ້ນຳເຂົ້າເຫຼົ້າວິສະກີ ທີ່ມີທາດເຫຼົ້າ ເກີນ 23 ສ່ວນຮ້ອຍ ຈຳນວນ 100 ແກັດ; ແກັດໜຶ່ງມີ

12 ແກ້ວ, ມູນຄ່າແຈ້ງພາສີ ແມ່ນ 150 $/ແກັດ, ເບຍປອງແຮນນີເກັນທີ່ມີທາດເຫຼົ້າເກີນ 0,5 ສ່ວນຮ້ອຍ ຈຳນວນ 1.300 ແກັດ, ແກັດໜຶ່ງມີ 24 ປອງ, ມູນຄ່າແຈ້ງພາສີ ແມ່ນ 5,5 $/ແກັດ ແລະ ຢາສູບ ເປັນຊອງ ຈຳນວນ 150 ແກັດ, ມູນຄ່າແຈ້ງພາສີ 85 $/ແກັດ; ສົມມຸດວ່າ ອັດຕາພາສີ 35% ສຳລັບເຫຼົ້າ, 30% ສຳລັບເບຍ ແລະ 40% ສຳລັບຢາສູບ,ອັດຕາແລກປ່ຽນ 1 $ = 9.800 ກີບ. ວິທີຄິດໄລ່ ອາກອນຊົມໃຊ້ແຕ່ລະປະເພດສິນຄ້າ ດັ່ງນີ້:

ກ. ເຫຼົ້າວິສະກີ:

- ມູນຄ່າແຈ້ງພາສີເປັນເງິນກີບສຳລັບເຫຼົ້າຢູ່ບ່ອນນຳເຂົ້າ: 100 x 150 x 9.800 = 147.000.000 ກີບ;
- ຄ່າພາສີ: 147.000.000 x 35% = 51.450.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້ຢູ່ຂອດນຳເຂົ້າ: 147.000.000+ 51.450.000 = 198.450.000 ກີບ;
- ອາກອນຊົມໃຊ້ຂອດນຳເຂົ້າ: 198.450.000 x 80% = **158.760.000 ກີບ.**

ຂ. ເບຍປອງແຮນນີເກັນ:

- ມູນຄ່າແຈ້ງພາສີເປັນເງິນກີບສຳລັບເບຍຢູ່ບ່ອນນຳເຂົ້າ: 1.300 x 5,5 x 9.800 = 70.070.000 ກີບ;
- ຄ່າພາສີ: 70.070.000 x 30% = 21.021.000 ກີບ;
- ພື້ນຖານຄິດໄລ່ ອາກອນຊົມໃຊ້ ຢູ່ຂອດນຳເຂົ້າ: 70.070.000 + 21.021.000 = 91.091.000 ກີບ;
- ອາກອນຊົມໃຊ້ ຂອດນຳເຂົ້າ: 91.091.000 x 60% = **54.654.600 ກີບ.**

ຄ. ຢາສູບ:

- ມູນຄ່າແຈ້ງພາສີເປັນເງິນກີບສຳລັບຢາສູບຢູ່ບ່ອນນຳເຂົ້າ: 150x85 x 9.800 = 124.950.000 ກີບ;
- ຄ່າພາສີ: 124.950.000 x 40% = 49.980.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້ຢູ່ຂອດນຳເຂົ້າ: 124.950.000 + 49.980.000 = 174.930.000 ກີບ;
- ອາກອນຊົມໃຊ້ ຂອດນຳເຂົ້າ: 174.930.000 x 57% = **99.710.100 ກີບ;**

ນອກຈາກນັ້ນ, ອີງຕາມມາດຕາ 14 ຂໍ້ 1 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ໄດ້ກຳນົດພື້ນຖານຄິດໄລ່ອາກອນຊົມໃຊ້ ສຳລັບສິນຄ້ານຳເຂົ້າ ປະເພດ ເບຍ, ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ ແມ່ນ ຈະຕ້ອງໄດ້ເກັບອາກອນຊົມໃຊ້ ຢູ່ຂອດຂາຍພາຍໃນປະເທດອີກຕື່ມ ດ້ວຍການເອົາລາຄາຂາຍ ຢູ່ພາຍໃນ ບໍ່ລວມອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ລົບ ພື້ນຖານຄິດໄລ່ອາກອນຊົມໃຊ້ ຢູ່ຂອດນຳເຂົ້າ ເພື່ອເປັນພື້ນຖານຄິດໄລ່ອາກອນຊົມໃຊ້ພາຍໃນ, ອີງໃສ່ການແນະນຳທີ່ກຳນົດຢູ່ໃນ ຂໍ້ 7.1 ວັກສອງ ຂອງຄຳແນະນຳສະບັບນີ້ ຜູ້ນຳເຂົ້າສິນຄ້າດັ່ງກ່າວ ຕ້ອງສະໜອງລາຄາຂາຍ ຢູ່ພາຍໃນປະເທດ ເພື່ອເປັນບ່ອນອີງໃນການຊອກຫາພື້ນຖານຄິດໄລ່ອາກອນຊົມໃຊ້ພາຍໃນ, ກໍລະນີຜູ້ນຳເຂົ້າບໍ່ສາມາດສະໜອງລາຄາຂາຍຍົກໄດ້ ເຈົ້າໜ້າທີ່ ທີ່ຖືກມອບໝາຍໃຫ້ເກັບອາກອນຊົມໃຊ້ ຈາກສິນຄ້າດັ່ງກ່າວ ຈະອີງໃສ່ລາຄາຂາຍຍົກ ສິນຄ້າປະເພດດຽວກັນທີ່ຜະລິດຢູ່ພາຍໃນປະເທດ ຫຼື ອີງໃສ່ລາຄາຂາຍຍົກສິນຄ້າປະເພດດຽວກັນ ຂອງບໍລິສັດອື່ນເພື່ອຊອກຫາພື້ນຖານຄິດໄລ່ອາກອນຊົມໃຊ້; ສົມມຸດວ່າ ລາຄາຂາຍຍົກບໍ່ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມເຫຼົ້າວິສະກີ ຢູ່ພາຍໃນປະເທດ ແມ່ນ 4.498.200 ກີບ/ແກັດ, ລາຄາ ຂາຍຍົກບໍ່ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ເບຍຢູ່ພາຍໃນ ແມ່ນ 93.600 ກີບ/ແກັດ ແລະ ລາຄາ ຂາຍຍົກບໍ່ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ຢາສູບ ຢູ່ພາຍໃນ ແມ່ນ 1.727.500 ກີບ/ແກັດ. ວິທີຄິດໄລອາກອນຊົມໃຊ້ຂອດພາຍໃນ ຂອງແຕ່ປະເພດສິນຄ້າ ດັ່ງນີ້ :

(1) ເຫຼົ້າວິສະກີ:

- ມູນຄ່າຂາຍຍົກທັງໝົດບໍ່ລວມອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ: 4.498.200 x 100 = 449.820.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້ພາຍໃນ: 449.820.000 - 198.450.000 = 251.370.000 ກີບ;
- ອາກອນຊົມໃຊ້ ພາຍໃນ: 251.370.000 x 80% = **201.096.000 ກີບ;**

- ລວມອາກອນຊົມໃຊ້ທັງໝົດ ສໍາລັບເຫຼົ້າ: 158.760.000 + 201.096.000 = 359.856.000 ກີບ.

(2) ເບຍປອງແຮນນິເກັນ:

- ມູນຄ່າຂາຍທັງໝົດບໍ່ລວມ ອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ: 1.300 x 93.600 = 121.680.000 ກີບ;

- ພື້ນຖານຄິດໄລ່ອາກອນຊົມໃຊ້ພາຍໃນ: 121.680.000 - 91.091.000 = 30.589.000 ກີບ;

- ອາກອນຊົມໃຊ້ພາຍໃນ: 30.589.000 x 60% = 18.353.400 ກີບ;

- ລວມອາກອນຊົມໃຊ້ ທັງໝົດສໍາລັບເບຍ: 54.654.600 +18.353.400 = 73.008.000 ກີບ;

(3) ຢາສູບ:

- ມູນຄ່າຂາຍຍົກທັງໝົດບໍ່ລວມ ອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ: 150 x 1.727.500 = 259.125.000 ກີບ;

- ພື້ນຖານຄິດໄລ່ອາກອນຊົມໃຊ້ພາຍໃນ: 259.125.000 - 174.930.000 = 84.195.000 ກີບ;

- ອາກອນຊົມໃຊ້ ພາຍໃນ: 84.195.000 x 57% = 47.991.150 ກີບ;

- ລວມອາກອນຊົມໃຊ້ທັງໝົດສໍາລັບຢາສູບ: 99.710.100 + 47.991.150 = 147.701.250 ກີບ.

ການຄິດໄລ່ ອາກອນຊົມໃຊ້ ຂອດພາຍໃນ ຈາກຕົວຢ່າງ ຂອງ 3 ປະເພດສິນຄ້າຕາມ ຂໍ້ (1), (2) ແລະ (3) ຂ້າງເທິງນີ້ ແມ່ນເປັນການຄິດໄລ່ໄປຕາມຂັ້ນຕອນ ໂດຍຖືເອົາລາຄາຂາຍ ຢູ່ພາຍໃນປະເທດ ທີ່ບໍ່ລວມມີອາກອນຊົມໃຊ້ ແລະ ບໍ່ລວມມີອາກອນມູນຄ່າເພີ່ມ ເປັນພື້ນຖານຄິດໄລ່ ຊຶ່ງຖືວ່າຖືກຕ້ອງຕາມຫຼັກການ. ໃນກໍລະນີ ຜູ້ນໍາເຂົ້າຫາກສະໜອງຂໍ້ມູນ ຈາກລາຍຮັບທີ່ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມຢູ່ນໍາແລ້ວ ແມ່ນ ຈະຕ້ອງໄດ້ແຍກ 2 ປະເພດອາກອນນີ້ອອກ ເພື່ອກໍານົດລາຄາຂາຍ ທີ່ເປັນພື້ນຖານຄິດໄລ່ອາກອນຊົມໃຊ້ ຂໍຍົກເອົາສິນຄ້າປະເພດເບຍ ມາເປັນຕົວຢ່າງແນະນໍາວິທີການຄິດໄລ່ ອາກອນຊົມໃຊ້ພາຍໃນຈາກລາຄາຂາຍຍົກທີ່ລວມມີ ອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມຢູ່ນໍາແລ້ວ ດັ່ງນີ້ :

ສົມມຸດວ່າ ຜູ້ນໍາເຂົ້າສາມາດສະໜອງ ຂໍ້ມູນຂອງລາຄາຂາຍຍົກ ເບຍປອງແຮນນິເກັນ ທີ່ນໍາເຂົ້ານັ້ນ ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ແມ່ນ 154.440 ກີບ/ແກັດ. ວິທີຄິດໄລ່ເພື່ອຊອກຫາ ລາຄາຂາຍຍົກ ທີ່ບໍ່ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ໃຫ້ປະຕິບັດ ດັ່ງນີ້:

- ມູນຄ່າຂາຍຍົກລວມມີ ອາກອນມູນຄ່າເພີ່ມທັງໝົດ: 1.300 x 154.440 = 200.772.000 ກີບ;
- ມູນຄ່າຂາຍຍົກບໍ່ລວມ ອາກອນມູນຄ່າເພີ່ມ: $\frac{200.772.000}{107}$ x 100 = 187.637.383 ກີບ;
- ອາກອນມູນຄ່າເພີ່ມ ຂອດຂາຍຍົກພາຍໃນ: 187.637.383 x 10% = 18.763.738 ກີບ;
- ມູນຄ່າຂາຍຍົກ ລວມມີ ອາກອນຊົມໃຊ້: 187.637.383 ກີບ;
- ມູນຄ່າຂາຍຍົກບໍ່ລວມ ອາກອນຊົມໃຊ້: $\frac{187.637.383}{160}$ x 100 = 117.273.364 ກີບ;
- ພື້ນຖານຄິດໄລ່ ອາກອນຊົມໃຊ້ ພາຍໃນ: 117.273.364 - 91.091.000 = 26.182.364 ກີບ;
- ອາກອນຊົມໃຊ້ພາຍໃນ: 26.182.364 x 60% = 15.709.418 ກີບ.

**ໝາຍເຫດ:** ອັດຕາອາກອນຊົມໃຊ້ ສໍາລັບເຫຼົ້າ ວິສະກີ ເກີນ 23 ອົງ ແມ່ນ 80%, ເບຍທີ່ມີທາດເຫຼົ້າ 0.5 ສ່ວນຮ້ອຍ ຂຶ້ນໄປແມ່ນ 60% ແລະ ຢາສູບ ແມ່ນ 57% ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 5 ແຖວທີ 1, ຂໍ້ 6 ແຖວທີ 1 ແລະ ຂໍ້ 7 ແຖວທີ 1 ຂອງຄໍາແນະນໍາສະບັບນີ້. ເພື່ອເຮັດໃຫ້ການເກັບອາກອນຊົມໃຊ້ ປະເພດສິນຄ້າດັ່ງກ່າວຢູ່ຂອດພາຍໃນປະເທດ ໃຫ້ຖືກຕ້ອງ,ຄົບຖ້ວນ ຕາມກົດໝາຍກໍານົດ ລັດຖະການສ່ວຍສາອາກອນແຕ່ລະຂັ້ນ ຕ້ອງປະສານສົມທົບກັບລັດຖະການພາສີ ເປັນຕົ້ນແມ່ນ ເຈົ້າໜ້າທີ່ພາສີ ຫຼື ເຈົ້າໜ້າ

ທີ່ອື່ນທີ່ຖືກມອບໝາຍ ທີ່ປະຈຳຢູ່ດ່ານບ່ອນນຳເຂົ້າສິນຄ້າຈາກຕ່າງປະເທດ ຫຼື ປະຈຳຢູ່ເຂດເສດຖະກິດພິເສດ ຫຼື ເຂດປອດພາສີ ບ່ອນທີ່ນຳສົ່ງສິນຄ້າອອກຈາກເຂດມາພາຍໃນປະເທດ ພາຍຫຼັງໄດ້ຄິດໄລ່ ແລະ ເກັບອາກອນຊົມໃຊ້ຢູ່ຂອດນຳເຂົ້າແລ້ວ ຕ້ອງສົ່ງເອກະສານ ແລະ ຂໍ້ມູນກ່ຽວກັບການເກັບອາກອນຊົມໃຊ້ ໃຫ້ແກ່ລັດຖະການສ່ວຍສາອາກອນ ໃຫ້ຄົບຖ້ວນ ແລະ ທັນເວລາ; ໝາຍຄວາມວ່າ ຕ້ອງສົ່ງເປັນປົກກະຕິໃນແຕ່ລະເດືອນ.

7.1.2. <u>ການນຳເຂົ້າສິນຄ້າຈາກເຂດເສດຖະກິດພິເສດ ຫຼື ເຂດປອດພາສີ:</u>

**ຕົວຢ່າງ 1:** ສົມມຸດວ່າ ບໍລິສັດ ແສງສະຫວ່າງ ຈຳກັດ ສ້າງຕັ້ງວິສາຫະກິດ ຢູ່ໃນເຂດເສດຖະກິດພິເສດ, ໃນເດືອນ ມິຖຸນາ 2021 ໄດ້ສົ່ງສິນຄ້າ ປະເພດເຄື່ອງດື່ມຊູກຳລັງ ອອກຈາກເຂດເສດຖະກິດພິເສດ ມາຈຳໜ່າຍຢູ່ພາຍໃນ ປະເທດ (ສປປ ລາວ ) ຈຳນວນ 15.000 ແກັດ, ລາຄາຕາມເອກສານນຳສົ່ງສິນຄ້າ (ສັນຍາ ຊື້-ຂາຍ,ໃບເກັບເງິນການຂາຍ) ແມ່ນ 45.000 ກີບ/ແກັດ, ສົມມຸດວ່າ ອັດຕາພາສີ 15%. ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດດັ່ງນີ້ :

- ມູນຄ່າແຈ້ງພາສີ: 15.000 x 45.000 = 675.000.000 ກີບ;
- ຄ່າພາສີ: 675.000.000 x 15% = 101.250.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້: 675.000.000 + 101.250.000 = 776.250.000 ກີບ;
- ອາກອນຊົມໃຊ້: 776.250.000 x 12% = **93.150.000 ກີບ**;

**ໝາຍເຫດ:** ອັດຕາອາກອນຊົມໃຊ້ ສຳລັບເຄື່ອງດື່ມຊູກຳລັງ ແມ່ນ 12% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 9 ແຖວທີ 2 ຂອງຄຳແນະນຳສະບັບນີ້;

**ຕົວຢ່າງ 2:** ການຄິດໄລ່ອາກອນຊົມໃຊ້ຈາກ ຜະລິດຕະພັນເຄື່ອງສຳອາງ: ສົມມຸດວ່າບໍລິສັດ ຈິດສຳນຶກດີ ຈຳກັດ ສ້າງຕັ້ງວິສາຫະກິດ ຢູ່ໃນເຂດເສດຖະກິດພິເສດ ໃນເດືອນ ກໍລະກົດ 2022 ໄດ້ສົ່ງສິນຄ້າ ປະເພດເຄື່ອງສຳອາງ ອອກຈາກເຂດເສດຖະກິດພິເສດ ມາຈຳໜ່າຍຢູ່ພາຍໃນ ປະເທດ (ສປປ ລາວ ) ມູນຄ່າຕາມເອກະສານນຳສົ່ງສິນຄ້າ (ສັນຍາ ຊື້-ຂາຍ,ໃບເກັບເງິນການຂາຍ) ແມ່ນ 550.000.000 ກີບ, ສົມມຸດວ່າ ອັດຕາພາສີ 20%. ວິທີຄິດໄລ່ ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້ :

- ຄ່າພາສີ: 550.000.000 x 20% = 110.000.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້: 550.000.000 + 110.000.000 = 660.000.000 ກີບ;
- ອາກອນຊົມໃຊ້: 660.000.000 x25% = **165.000.000 ກີບ**;

**ໝາຍເຫດ:** ອັດຕາອາກອນຊົມໃຊ້ ສຳລັບຜະລິດຕະພັນເຄື່ອງສຳອາງທຸກຊະນິດ ແມ່ນ 25% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 12 ຂອງຄຳແນະນຳສະບັບນີ້.

**ຕົວຢ່າງ 3:** ການຄິດໄລ່ອາກອນຊົມໃຊ້ ຈາກກ້ອງຖ່າຍຮູບ: ສົມມຸດວ່າບໍລິສັດຮຸ່ງເຮືອງ ຈຳກັດຜູ້ດຽວ ສ້າງຕັ້ງວິສາຫະກິດ ປະກອບກ້ອງຖ່າຍຮູບ ຢູ່ໃນເຂດເສດຖະກິດພິເສດ ໃນເດືອນ ກັນຍາ 2022 ໄດ້ສົ່ງ ກ້ອງຖ່າຍຮູບທີ່ປະກອບ ໂດຍໂຮງງານຂອງບໍລິສັດເອງ ອອກຈາກເຂດເສດຖະກິດພິເສດ ຈຳນວນ 10.000 ເຄື່ອງ ເພື່ອມາຈຳໜ່າຍຢູ່ພາຍໃນ ປະເທດ (ສປປ ລາວ) ລາຄາຕາມເອກສານນຳສົ່ງສິນຄ້າ (ສັນຍາ ຊື້-ຂາຍ,ໃບເກັບເງິນການຂາຍ) ແມ່ນ 550.000 ກີບ/ອັນ, ສົມມຸດວ່າ ອັດຕາພາສີ 5%. ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້ :

- ມູນຄ່າແຈ້ງພາສີ: 10.000 x 550.000 = 5.500.000.000 ກີບ;
- ຄ່າພາສີ: 5.500.000.000 x 5% = 275.000.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້: 5.500.000.000 + 275.000.000 = 5.775.000.000 ກີບ;
- ອາກອນຊົມໃຊ້: 5.775.000.000 x 15% = 866.250.000 ກີບ.

**ໝາຍເຫດ :** ອັດຕາອາກອນຊົມໃຊ້ ສຳລັບກ້ອງຖ່າຍຮູບທຸກຊະນິດ ແມ່ນ 15% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 17 ຂອງຄຳແນະນຳສະບັບນີ້;

7.2. ພື້ນຖານຄິດໄລ່ອາກອນຊົມໃຊ້ ສໍາລັບສິນຄ້າ ທີ່ຜະລິດ ຫຼື ປະກອບຢູ່ພາຍໃນປະເທດ ເພື່ອຈໍາໜ່າຍ ຫຼື ຂາຍໃຫ້ຜູ້ອື່ນທີ່ເປັນລູກຄ້າທົ່ວໄປ ຫຼື ເປັນຜູ້ຊົມໃຊ້ ລວມທັງ ສິນຄ້ານໍາເຂົ້າທີ່ໄດ້ຮັບອະນຸຍາດຄິດໄລ່ ແລະເກັບອາກອນຊົມໃຊ້ໃນເວລາຂາຍຢູ່ພາຍໃນປະເທດ ແມ່ນ ລາຄາຂາຍຍົກອອກ ຈາກໂຮງງານ ຫຼື ຈາກບ່ອນຜະລິດ ຫຼື ບ່ອນປະກອບ ຫຼື ລາຄາຂາຍສໍາລັບສິນຄ້ານໍາເຂົ້າ ບໍ່ລວມອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ; ລາຄາຂາຍຍົກອອກຈາກໂຮງງານ ຫຼື ບ່ອນຜະລິດ ຫຼື ບ່ອນປະກອບ ຫຼື ລາຄາຂາຍສໍາລັບສິນຄ້ານໍາເຂົ້າ ລວມມີຕົ້ນທຶນ ແລະ ກໍາໄລລວມ. ດັ່ງນັ້ນ,ອາກອນຊົມໃຊ້ ທີ່ຄິດໄລ່ ເກັບບົນພື້ນຖານລາຄາຂາຍ ຢູ່ພາຍໃນປະເທດ ຕ້ອງມອບເຂົ້າງົບປະມານແຫ່ງລັດທັງໝົດ ແລະບໍ່ອະນຸຍາດໃຫ້ຜູ້ສະໜອງ ຫຼື ຜູ້ຂາຍນໍາມາລົງເປັນລາຍຈ່າຍດ້ານສ່ວຍສາອາກອນໄດ້ ເນື່ອງຈາກວ່າ ອາກອນຊົມໃຊ້ໃນກໍລະນີດັ່ງກ່າວ ແມ່ນ ເກັບເອົານໍາຜູ້ຊື້ໂດຍກົງ ໂດຍບໍ່ກ່ຽວຂ້ອງກັບຕົ້ນທຶນຊື້ ຂອງຜູ້ສະໜອງ ຫຼື ຜູ້ຂາຍ; ສ່ວນລາຍຮັບທຸລະກິດ ຂອງຜູ້ສະໜອງ ຫຼື ຜູ້ຂາຍນັ້ນແມ່ນ ໃຫ້ຖືເອົາມູນຄ່າສະໜອງ ຫຼື ມູນຄ່າຂາຍທີ່ບໍ່ລວມອາກອນຊົມໃຊ້ ແລະ ບໍ່ລວມອາກອນມູນຄ່າເພີ່ມ, ຊຶ່ງຕົວຢ່າງການຄິດໄລ່ອາກອນຊົມໃຊ້ ດັ່ງນີ້:

**ຕົວຢ່າງ 1:** ການຄິດໄລ່ອາກອນຊົມໃຊ້ ຈາກຜະລິດຕະພັນເບຍ: ສົມມຸດວ່າບໍລິສັດເບຍ ຂຶ້ນທະບຽນ ແລະ ສ້າງຕັ້ງ ວິສາຫະກິດຕາມກົດໝາຍ ຂອງ ສປປ ລາວ, ໃນເດືອນ ມິຖຸນາ 2021 ໄດ້ຜະລິດ ແລະ ຈໍາໜ່າຍເບຍ ມີທາດເຫຼົ້າເກີນ 0,5% ທີ່ໂຮງງານຜະລິດຢູ່ພາຍໃນປະເທດ ຄື: ຂາຍໃຫ້ລູກຄ້າທົ່ວໄປ ຈໍານວນ 250.000 ລັງ; ລາຄາຂາຍຍົກອອກຈາກໂຮງງານບໍ່ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ແມ່ນ 55.000 ກີບ/ລັງ, ແຖມໃຫ້ລູກຄ້າ ຈໍານວນທັງໝົດພາຍໃນເດືອນດັ່ງກ່າວ 300 ລັງ, ໂຮງງານນໍາອອກມາຊົມໃຊ້ເອງ ສໍາລັບກິດຈະກໍາປະຈໍາປີຂອງໂຮງງານ ຈໍານວນ 400 ລັງ, ສົມມຸດລາຄາຕົ້ນທຶນຜະລິດຕາມການໃຫ້ຂໍ້ມູນ ຫຼື ຕາມການສະຫຼຸບຂອງບໍລິສັດຜະລິດເບຍ ແມ່ນ 40.000 ກີບ/ລັງ. ວິທີຄິດໄລ່ອາກອນຊົມໃຊ້ໃຫ້ປະຕິບັດ ດັ່ງນີ້ :

**ກ. ຂາຍໃຫ້ລູກຄ້າທົ່ວໄປ :**

- ມູນຄ່າຂາຍຍົກໃຫ້ລູກຄ້າ: 250.000 x 55.000 = 13.750.000.000 ກີບ;
- ອາກອນຊົມໃຊ້ຈາກການຂາຍ: 13.750.000.000 x 60% = **8.250.000.000 ກີບ;**

**ຂ. ແຖມໃຫ້ລູກຄ້າ ແລະ ຊົມໃຊ້ເອງ (ສະໜອງໃຫ້ໂຕເອງ) :**

- ມູນຄ່າຕົ້ນທຶນສໍາລັບສະໜອງໃຫ້ຕົນເອງ ແລະ ເປັນຂອງແຖມ: (300+400) x 40.000 = 28.000.000 ກີບ;
- ອາກອນຊົມໃຊ້ທີ່ສະໜອງໃຫ້ຕົນເອງ ແລະ ເປັນຂອງແຖມ: 28.000.000 x 60% = **16.800.000 ກີບ;**
- ລວມອາກອນຊົມໃຊ້ ທັງໝົດຕ້ອງມອບ: **8.250.000.000 + 16.800.000 = 8.266.800.000 ກີບ.**

**ໝາຍເຫດ:** ອັດຕາ ອາກອນຊົມໃຊ້ ສໍາລັບຜະລິດຕະພັນເບຍ ທີ່ມີທາດເຫຼົ້າ ແຕ່ 0,5 ສ່ວນຮ້ອຍ ຂຶ້ນໄປ ຈະແມ່ນເບຍນໍາເຂົ້າ ຫຼື ຜະລິດຢູ່ພາຍໃນປະເທດ ແມ່ນ 60% ຕາມໄດ້ກໍານົດໄວ້ໃນ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 6 ແຖວທີ 1 ຂອງຄໍາແນະນໍາສະບັບນີ້ ; ພື້ນຖານຄິດໄລ່ ອາກອນຊົມໃຊ້ ໃນກໍລະນີ ຊົມໃຊ້ເອງ,ໃຫ້ເປັນຂອງແຖມ,ໃຫ້ເປັນຂອງຂວັນ ແລະ ລາງວັນ ແມ່ນລາຄາຕົ້ນທຶນການຜະລິດ. ດັ່ງນັ້ນ, ໂຮງງານທີ່ຜະລິດເບຍ ມີຄວາມຮັບຜິດຊອບໃນການກໍານົດລາຄາຕົ້ນທຶນການຜະລິດ ເພື່ອຄິດໄລ່ອາກອນຊົມໃຊ້; ອາກອນຊົມໃຊ້ ຈາກເບຍ ຫຼື ສິນຄ້າປະເພດອື່ນ ສໍາລັບກໍລະນີ ຊົມໃຊ້ເອງ,ໃຫ້ເປັນຂອງແຖມ,ໃຫ້ເປັນຂອງຂວັນ ແລະ ລາງວັນ ແມ່ນບໍ່ອະນຸຍາດໃຫ້ລົງເປັນລາຍຈ່າຍດ້ານສ່ວຍສາອາກອນໄດ້ ເຖິງວ່າ ຈະຖືກຄິດໄລ່ຈາກລາຄາຕົ້ນທຶນການຜະລິດກໍຕາມ ຍົກເວັ້ນສິນຄ້າ ຫຼື ຜະລິດຕະພັນດັ່ງກ່າວທີ່ຖືກນໍາໄປຈັດເປັນຊັບສິນຄົງທີ່ ແລະນໍາໃຊ້ໂດຍກົງເຂົ້າໃນການດໍາເນີນທຸລະກິດ ຂອງຜູ້ເສຍອາກອນ ແມ່ນອະນຸຍາດໃຫ້ຫັກຄ່າຫຼຸ້ຍຫ້ຽນຕາມລະບຽບການໄດ້.

ຕົວຢ່າງ 2: ການຄິດໄລ່ອາກອນຊົມໃຊ້ ຈາກລົດຈັກ ແລະ ລົດໃຫຍ່: ສົມມຸດວ່າ ບໍລິສັດ ຈຳກັດ ກ ດຳເນີນທຸລະກິດ ໂຮງງານປະກອບ ແລະ ຈຳໜ່າຍ ລົດຈັກ ແລະ ລົດໃຫຍ່ ຢູ່ພາຍໃນປະເທດ ໃນເດືອນ ກໍລະກົດ 2022 ມີການເຄື່ອນໄຫວທຸລະກິດ ດັ່ງນີ້:

**ກ. ສຳລັບລົດຈັກ:** ໄດ້ນຳເຂົ້າຊິ້ນສ່ວນລົດຈັກທີ່ໃຊ້ພະລັງງານເຊື້ອໄຟ, ຄວາມແຮງ 110 ຊີຊີ ຈຳນວນ 300 ຊຸດ/ຄັນ ແລະ ຄວາມແຮງ 150 ຊີຊີ ຈຳນວນ 200 ຊຸດ/ຄັນໃນຮູບແບບໄອເຄດີ ( IKD ) , ມູນຄ່າແຈ້ງພາສີ 100 $/ຊຸດຄັນ; ສົມມຸດວ່າ ອັດຕາພາສີ 10% ,ອັດຕາແລກປ່ຽນ 1 $ = 9.800 ກີບ, ພາຍຫຼັງປະກອບສຳເລັດສົມບູນຢູ່ໃນຮູບແບບ ຊີບີຢູ ( CBU ) ແລ້ວ ໄດ້ຂາຍຍົກໃຫ້ລູກຄ້າປະຈຳ ລົດຈັກຄວາມແຮງ 110 ຊີຊີ ທັງໝົດ 300 ຄັນ ໃນລາຄາບໍ່ມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ 7.500.000 ກີບ/ຄັນ, ສຳລັບ ລົດຈັກ ຄວາມແຮງ 150 ຊີຊີ ແມ່ນໄດ້ຂາຍໃນລາຄາບໍ່ມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ 9.500.000 ກີບ/ຄັນ. ວິທີຄິດໄລ່ອາກອນຊົມໃຊ້ໃຫ້ປະຕິບັດ ດັ່ງນີ້:

(1) ຄິດໄລ່ພາສີຂາເຂົ້າ ແລະ ອາກອນ ສຳລັບຊິ້ນສ່ວນປະກອບລົດຈັກ ຢູ່ບ່ອນນຳເຂົ້າ:

- ຈຳນວນຊິ້ນສ່ວນປະກອບ ໄອຄີດີ ທັງໝົດ: 300 + 200 = 500 ຊຸດ;
- ມູນຄ່າແຈ້ງພາສີ ເປັນເງິນກີບ: 500 x 100 x 9.800 = 490.000.000 ກີບ;
- ຄ່າພາສີຂາເຂົ້າ: 490.000.000 x 10% = 49.000.000 ກີບ;
- ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ: 490.000.000 + 49.000.000 = 539.000.000 ກີບ;
- ອາກອນມູນຄ່າເພີ່ມຂອດນຳເຂົ້າທັງໝົດ: 539.000.000 x 7% = 37.730.000 ກີບ.

(2) ຄິດໄລ່ອາກອນຊົມໃຊ້ ຂອດຈຳໜ່າຍຢູ່ພາຍໃນປະເທດ:

- **ລົດຈັກຄວາມແຮງ 100 ຊີຊີ :**

  - ມູນຄ່າຂາຍຍົກ ຫຼື ພື້ນຖານຄິດໄລ່ອາກອນຊົມໃຊ້: 300 x 7.500.000 = 2.250.000.000 ກີບ;
  - ອາກອນຊົມໃຊ້: 2.250.000.000 x 3% = **67.500.000 ກີບ.**

- **ລົດຈັກຄວາມແຮງ 150 ຊີຊີ :**

  - ມູນຄ່າຂາຍຍົກ ຫຼື ພື້ນຖານຄິດໄລ່ ອາກອນຊົມໃຊ້: 200 x 9.500.000 = 1.900.000.000 ກີບ;
  - ອາກອນຊົມໃຊ້: 1.900.000.000 x 20% = **380.000.000 ກີບ;**
  - ລາຍຮັບທີ່ຂາຍບໍ່ລວມອາກອນຊົມໃຊ້: 2.250.000.000 + 1.9000.000.000 = 4.150.000.000 ກີບ;
  - ຈຳນວນອາກອນຊົມໃຊ້ເກັບໄດ້ທັງໝົດ: 67.500.000 + 380.000.000 = **447.500.000 ກີບ;**
  - ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມເວລາຂາຍ: 4.150.000.000 + 447.500.000 = 4.597.500.000 ກີບ;
  - ອາກອນມູນຄ່າເພີ່ມຈາກການຂາຍຢູ່ພາຍໃນ: 4.597.500.000 x 7% = 321.825.000 ກີບ.

**ຂ. ສຳລັບລົດໃຫຍ່:** ໄດ້ນຳເຂົ້າຊິ້ນສ່ວນລົດໃຫຍ່ ສຳລັບຂົນສົ່ງສິນຄ້າ ຂະໜາດນ້ອຍທີ່ໃຊ້ພະລັງງານເຊື້ອໄຟ, ຄວາມແຮງ 2.500 ຊີຊີ ໃນຮູບແບບໄອເຄດີ (IKD) ຈຳນວນ 130 ຊຸດ/ຄັນ ມູນຄ່າແຈ້ງພາສີ 2.000 $/ຊຸດຄັນ; ສົມມຸດວ່າ ອັດຕາພາສີ 10%, ອັດຕາແລກປ່ຽນ 1 $ = 9.800 ກີບ, ພາຍຫຼັງປະກອບສຳເລັດສົມບູນຢູ່ໃນຮູບແບບ ຊີບີຢູ ( CBU ) ແລ້ວ ແມ່ນໄດ້ຂາຍລົດໃຫຍ່ທັງໝົດ ຈຳນວນ 130 ຄັນ ໃນລາຄາ ທີ່ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມແລ້ວ 75.000.000 ກີບ/ຄັນ. ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

(1) ຄິດໄລ່ພັນທະພາສີຂາເຂົ້າ ແລະ ອາກອນ ສໍາລັບຊິ້ນສ່ວນປະກອບລົດໃຫຍ່ຢູ່ບ່ອນນໍາເຂົ້າ:

- ມູນຄ່າແຈ້ງພາສີ ເປັນເງິນກີບ: 130 x 2.000 x 9.800 = 2.548.000.000 ກີບ;
- ຄ່າພາສີຂາເຂົ້າ: 2.548.000.000 x 10% = 254.800.000 ກີບ;
- ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ: 2.548.000.000 + 254.800.000 = 2.802.800.000 ກີບ;
- ອາກອນມູນຄ່າເພີ່ມຂອດນໍາເຂົ້າ: 2.802.800.000 x 7% = 196.196.000 ກີບ;

(2) ຄິດໄລ່ອາກອນຊົມໃຊ້ ຂອດຈໍາໜ່າຍຢູ່ພາຍໃນປະເທດ:

- ມູນຄ່າຂາຍຍົກລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ: 130 x 75.000.000 = 9.750.000.000 ກີບ;
- ມູນຄ່າຂາຍຍົກບໍ່ລວມມີອາກອນມູນຄ່າເພີ່ມ: $\frac{9.750.000.000}{107}$ x 100 = 9.112.149.533 ກີບ;
- ມູນຄ່າຂາຍຍົກບໍ່ລວມມີ ອາກອນຊົມໃຊ້: $\frac{9.112.149.533}{103}$ x 100 = 8.846.747.119 ກີບ;
- ອາກອນຊົມໃຊ້: 8.846.747.119 x 3% = **265.402.414 ກີບ;**
- ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມເວລາຂາຍ: 8.846.747.119 + 265.402.414 = 9.112.149.533 ກີບ.

**ໝາຍເຫດ:** ອັດຕາອາກອນຊົມໃຊ້ ສໍາລັບລົດຈັກ ນໍາໃຊ້ນໍ້າມັນເຊື້ອໄຟ ຄວາມແຮງ 110 ຊີຊີ ທີ່ປະກອບຈາກຊິ້ນສ່ວນປະກອບໃນຮູບແບບໄອເຄດີ (I K D ) ແມ່ນ 3% , ຄວາມແຮງ 150 ຊີຊີ ແມ່ນ 20% ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 2 ຂໍ້ 1.1 ແຖວທີ 2 ແລະ ແຖວທີ 3 ຂອງຄໍາແນະນໍາສະບັບນີ້; ອັດຕາອາກອນຊົມໃຊ້ ສໍາລັບລົດໃຫຍ່ ນໍາໃຊ້ນໍ້າມັນເຊື້ອໄຟ ທີ່ປະກອບຈາກຊິ້ນສ່ວນປະກອບໃນຮູບແບບໄອເຄດີ (I K D) ແມ່ນ 3% ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 2.9 ຂອງຄໍາແນະນໍາສະບັບນີ້. ຊິ້ນສ່ວນປະກອບໃນຮູບແບບ ໄອເຄດີ (I K D) ແລະ ຊີເຄດີ (C K D) ທີ່ນໍາເຂົ້າ ຫຼື ຜະລິດຢູ່ພາຍໃນປະເທດ ສໍາລັບຈຸດປະສົງມາປະກອບຢູ່ໂຮງງານ ເປັນລົດສໍາເລັດຮູບສົມບູນຕາມຮູບແບບຊີບີຢູ (CBU) ໂດຍກົງແມ່ນຈະບໍ່ຖືກເກັບອາກອນຊົມໃຊ້ ຢູ່ໃນຂອດນໍາເຂົ້າ ຫຼື ຂອດຜະລິດ ຊິ້ນສ່ວນດັ່ງກ່າວຢູ່ພາຍໃນປະເທດ ແຕ່ຈະຖືກຄິດໄລ່ ແລະ ເກັບອາກອນຊົມໃຊ້ຢູ່ພາຍໃນ ປະເທດ ເວລາທີ່ປະກອບສໍາເລັດ ແລະ ຂາຍ ຄັ້ງດຽວເລີຍ. ຜູ້ນໍາເຂົ້າ ຫຼື ຜູ້ຊື້ ຈາກໂຮງງານຜະລິດພາຍໃນ ຕ້ອງມີແຜນຄວາມຕ້ອງການນໍາໃຊ້ ຊິ້ນສ່ວນປະກອບໃນ 2 ຮູບແບບດັ່ງກ່າວ ໂດຍມີການຢັ້ງຢືນຈາກຂະແໜງການຄຸ້ມຄອງ ໂຮງງານຜະລິດ ຫຼື ໂຮງງານປະກອບ ສະເໜີຕໍ່ລັດຖະມົນຕີກະຊວງການເງິນ ພິຈາລະນາອະນຸຍາດ ເພື່ອງົດເກັບອາກອນຊົມໃຊ້ (ຍົກເວັ້ນອາກອນຊົມໃຊ້)ໃນຂອດນໍາເຂົ້າ ຫຼື ຂອດຜະລິດຢູ່ພາຍໃນ ຊິ້ນສ່ວນປະກອບດັ່ງກ່າວ.

ຕົວຢ່າງ 3: ການຄິດໄລ່ອາກອນຊົມໃຊ້ ຈາກຢາສູບ: ສົມມຸດວ່າ ບໍລິສັດຜະລິດຢາສູບ ຈໍາກັດ ໄດ້ຂຶ້ນທະບຽນ ແລະ ສ້າງຕັ້ງ ວິສາຫະກິດຕາມກົດໝາຍ ຂອງ ສປປ ລາວ, ໃນເດືອນ ກໍລະກົດ 2021 ໄດ້ຜະລິດ ແລະ ຈໍາໜ່າຍຢາສູບເປັນຊອງ ດັ່ງນີ້ : ຂາຍໃຫ້ລູກຄ້າທົ່ວໄປ ຢູ່ພາຍໃນປະເທດ ຈໍານວນ 25.000 ແກັດ, ລາຄາຂາຍຍົກອອກຈາກໂຮງງານບໍ່ມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ແມ່ນ 1.200.000 ກີບ/ແກັດ; ແຖມໃຫ້ລູກຄ້າຈໍານວນທັງໝົດພາຍໃນເດືອນດັ່ງກ່າວ 30 ແກັດ, ສົມມຸດລາຄາຕົ້ນທຶນຜະລິດ ແມ່ນ 900.000 ກີບ/ແກັດ; ໄດ້ສົ່ງອອກໄປຕ່າງປະເທດ ຈໍານວນ 20.000 ແກັດ, ລາຄາ ຕາມເອກະສານນໍາສົ່ງ ບໍ່ມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ແມ່ນ 1.300.000 ກີບ/ແກັດ. ວິທີຄິດໄລ່ ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

- ມູນຄ່າຂາຍຍົກຢູ່ພາຍໃນປະເທດ: 25.000 x 1.200.000 = 30.000.000,000 ກີບ;
- ອາກອນຊົມໃຊ້: 30.000.000.000 x 57% = 17.100.000.000 ກີບ;
- ມູນຄ່າຕົ້ນທຶນສໍາລັບເປັນຂອງແຖມ: 30 x 900.000 = 27.000.000 ກີບ;

- ອາກອນຊົມໃຊ້ຈາກການແຖມ: 27.000.000 x 57% = **15.390.000 ກີບ;**
- ມູນຄ່າສົ່ງອອກໄປຕ່າງປະເທດ: 20.000 x 1.300.000 = 26.000.000.000 ກີບ;
- ລວມອາກອນຊົມໃຊ້ຕ້ອງມອບ: 17.100.000.000 + 15.390.000 = **17.115.390.000 ກີບ.**

**ໝາຍເຫດ:** ອັດຕາ ອາກອນຊົມໃຊ້ ສໍາລັບຜະລິດຕະພັນຢາສູບເປັນຊອງ ຈະແມ່ນຢາສູບທີ່ນໍາເຂົ້າ ຫຼື ຜະລິດຢູ່ພາຍໃນປະເທດກໍ່ຕາມ ແມ່ນ ອັດຕາ 57% ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 7 ແຖວທີ 1 ຂອງຄໍາແນະນໍາສະບັບນີ້; ພື້ນຖານຄິດໄລ່ ອາກອນຊົມໃຊ້ ໃນກໍລະນີ ເອົາໃຫ້ເປັນຂອງແຖມ,ຊົມໃຊ້ເອງ, ໃຫ້ເປັນຂອງຂວັນ ແລະ ລາງວັນ ແມ່ນລາຄາຕົ້ນທຶນການຜະລິດ; ໂຮງງານທີ່ຜະລິດຢາສູບ ມີຄວາມຮັບຜິດຊອບໃນການກໍານົດລາຄາຕົ້ນທຶນການຜະລິດ ເພື່ອຄິດໄລ່ອາກອນຊົມໃຊ້; ອາກອນຊົມໃຊ້ ສໍາລັບກໍລະນີ ຊົມໃຊ້ເອງ, ໃຫ້ເປັນຂອງແຖມ, ໃຫ້ເປັນຂອງຂວັນ ແລະ ລາງວັນ ແມ່ນບໍ່ອະນຸຍາດໃຫ້ລົງເປັນລາຍຈ່າຍດ້ານສ່ວຍສາອາກອນໄດ້ ເຖິງວ່າ ຈະຖືກຄິດໄລ່ຈາກລາຄາຕົ້ນທຶນການຜະລິດກໍຕາມ.

ສໍາລັບຢາສູບທີ່ສົ່ງອອກໄປຕ່າງປະເທດ ຈໍານວນ 20.000 ແກັດ ໃນມູນຄາ 26.000.000.000 ກີບ ນັ້ນ ແມ່ນບໍ່ຖືກຄິດໄລ່ໃຫ້ເສຍອາກອນຊົມໃຊ້ຢູ່ ສປປ ລາວ, ແຕ່ລາຍຮັບຈາກການສົ່ງອອກຢາສູບດັ່ງກ່າວ ຕ້ອງໄດ້ສະຫຼຸບລວມເຂົ້າໃນລາຍຮັບທຸລະກິດທັງໝົດ ເພື່ອເສຍອາກອນລາຍໄດ້ (ອາກອນກໍາໄລ) ຕາມກົດໝາຍວ່າດ້ວຍອາກອນລາຍໄດ້.

**ຕົວຢ່າງ 4:** ການຄິດໄລ່ອາກອນຊົມໃຊ້ ຈາກເຄື່ອງດື່ມຊູກໍາລັງ: ສົມມຸດວ່າໂຮງງານຜະລິດເຄື່ອງດື່ມຊູກໍາລັງສ້າງຕັ້ງວິສາຫະກິດ ຕາມກົດໝາຍ ຂອງ ສປປ ລາວ ໃນຮູບການ ເປັນບໍລິສັດ ຈໍາກັດຜູ້ດຽວ, ໃນເດືອນ ກັນຍາ 2021 ໄດ້ຂາຍຍົກເຄື່ອງດື່ມຊູກໍາລັງ ໃຫ້ລູກຄ້າປະຈໍາ ທັງໝົດ 30.000 ແກັດ ໃນລາຄາ ບໍ່ມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ 100.000 ກີບ/ແກັດ, ໄດ້ໃຫ້ເປັນຂອງແຖມໃນຖານະເປັນລູກຄ້າປະຈໍາ. ໃນຈໍານວນ 50 ແກັດ ລາຄາຕົ້ນທຶນການຜະລິດແມ່ນ 60.000 ກີບ/ແກັດ. ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

- ພື້ນຖານຄິດໄລ່ອາກອນຊົມໃຊ້ ສໍາລັບຂາຍໃຫ້ລູກຄ້າ: 30.000 x 100.000 = 3.000.000.000 ກີບ;
- ອາກອນຊົມໃຊ້ ເກັບໄດ້ຈາກລູກຄ້າ: 3.000.000.000 x 12% = 360.000.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້ ສໍາລັບຂອງແຖມ: 50 x 60.000 = 3.000.000 ກີບ;
- ອາກອນຊົມໃຊ້ ເກັບໄດ້ຈາກການແຖມ: 3.000.000 x12% = 360.000 ກີບ;
- ລວມ ອາກອນຊົມໃຊ້ ຕ້ອງມອບ: 360.000.000 + 360.000 = **360.360.000 ກີບ.**

**ໝາຍເຫດ** : ອັດຕາອາກອນຊົມໃຊ້ ສໍາລັບເຄື່ອງດື່ມຊູກໍາລັງ ແມ່ນ ອັດຕາ 12% ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 9 ແຖວທີ 2 ຂອງຄໍາແນະນໍາສະບັບນີ້.

7.3. ພື້ນຖານຄິດໄລ່ອາກອນຊົມໃຊ້ ສໍາລັບ ສິນຄ້າ ທີ່ຜະລິດ ຫຼື ປະກອບຢູ່ພາຍໃນປະເທດ ຫຼື ສິນຄ້ານໍາເຂົ້າ ເພື່ອຊົມໃຊ້ເອງ ໂດຍຜູ້ດໍາເນີນທຸລະກິດ, ໃຫ້ເປັນຂອງຂວັນ, ເປັນຂອງແຖມ ແລະ ເປັນລາງວັນ ແມ່ນລາຄາຕົ້ນທຶນການຜະລິດ ຫຼື ປະກອບ ເປັນພື້ນຖານຄິດໄລ່ ອາກອນຊົມໃຊ້; ຜູ້ຜະລິດ ຫຼື ຜູ້ປະກອບ ມີຄວາມຮັບຜິດຊອບໃນການກໍານົດ ກ່ຽວກັບລາຄາຕົ້ນທຶນການຜະລິດ ຫຼື ຕົ້ນທຶນການປະກອບໃຫ້ຖືກຕ້ອງຕາມຄວາມເປັນຈິງທຸກກໍລະນີ ແລະ ສາມາດສະໜອງຂໍ້ມູນດັ່ງກ່າວໃຫ້ເຈົ້າໜ້າທີ່ສ່ວຍສາອາກອນ ແລະ ເຈົ້າໜ້າທີ່ກວດກາອື່ນໄດ້ທຸກເວລາ; ອາກອນຊົມໃຊ້ກໍລະນີ ຊົມໃຊ້ເອງ, ໃຫ້ເປັນຂອງແຖມ, ເປັນຂອງຂວັນ ແລະ ລາງວັນ ແມ່ນບໍ່ອະນຸຍາດໃຫ້ລົງເປັນລາຍຈ່າຍດ້ານສ່ວຍສາອາກອນໄດ້ ແລະ ໃຫ້ຖືວ່າເປັນການຊົມໃຊ້ ສິນຄ້າ ຫຼື ການບໍລິການດັ່ງກ່າວ. ສໍາລັບອາກອນຊົມໃຊ້ ຂອງສິນຄ້າ ທີ່ຜູ້ດໍາເນີນທຸລະກິດ ຫຼື ຜູ້ເສຍອາກອນ ຊົມໃຊ້ເອງ, ໄດ້ຮັບເປັນຂອງຂວັນ, ຂອງແຖມ ຫຼື ລາງວັນ ນໍາມາເປັນຊັບສົມບັດຄົງທີ່ ທີ່ນໍາໃຊ້ໂດຍກົງເຂົ້າໃນການດໍາເນີນທຸລະກິດ ແມ່ນ ສາມາດໃຫ້ຈົດເປັນມູນຄ່າຊັບສິນ ເພື່ອຫັກຫຼຸ້ຍຫ້ຽນໄດ້ ເນື່ອງຈາກວ່າ ຊັບສິນຄົງທີ່ດັ່ງກ່າວ ຖືກນໍາໃຊ້ໃຫ້ເກີດຜົນປະໂຫຍດ ຢູ່ໃນວົງຈອນເສດຖະກິດ ຂອງຜູ້ດໍາເນີນທຸລະກິດ.

ຕົວຢ່າງ: ສົມມຸດວ່າໂຮງງານ ຜະລິດນ້ຳອັດລົມ ແລະ ໂສດາ ພາຍໃນເດືອນ ພະຈິກ 2021 ໄດ້ນຳເອົາ ນ້ຳອັດລົມ ປະເພດໂຄກສ ( Coca cola ) ຊະນິດຂວດນ້ອຍທີ່ຕົນຜະລິດ ອອກຈາກສາງສິນຄ້າ ຈຳນວນ 300 ແກັດ ມາຊົມໃຊ້ດ້ວຍຕົນເອງ ແລະ ອີກ 250 ແກັດ ໃຫ້ເປັນຂອງແຖມສຳລັບລູກຄ້າລາຍໃຫຍ່ຂອງບໍລິສັດ; ຕົ້ນທຶນການຜະລິດຕາມໂຄງສ້າງລາຄາ ຂອງນ້ຳອັດລົມຊະນິດດັ່ງກ່າວ ແມ່ນ 40.000 ກີບ/ແກັດ. ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

- ພື້ນຖານຄິດໄລ່ຕາມລາຄາຕົ້ນທຶນການຜະລິດ: (300 + 250) x 40.000 = 22.000.000 ກີບ;
- ອາກອນຊົມໃຊ້: 22.000.000 x 7% = 1.540.000 ກີບ.

ໝາຍເຫດ : ອັດຕາອາກອນຊົມໃຊ້ ສຳລັບນ້ຳອັດລົມ ແມ່ນ ອັດຕາ 7% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 9 ແຖວທີ 1 ຂອງຄຳແນະນຳສະບັບນີ້. ນ້ຳອັດລົມ ເປັນສິນຄ້າບໍລິໂພກ. ດັ່ງນັ້ນ, ອາກອນຊົມໃຊ້ ເຖິງວ່າຈະຖືກຄິດໄລ່ເກັບຕາມລາຄາຕົ້ນທຶນການຜະລິດກໍຕາມ ແມ່ນບໍ່ອະນຸຍາດໃຫ້ລົງເປັນລາຍຈ່າຍດ້ານສ່ວຍສາອາກອນໄດ້. ສຳລັບກໍລະນີ ຊົມໃຊ້ເອງຕາມຂໍ້ໂຈດນີ້ ພາຍຫຼັງທີ່ໂຮງງານໄດ້ຄິດໄລ່ອາກອນຊົມໃຊ້ຕາມລາຄາຕົ້ນທຶນການຜະລິດແລ້ວ ຍັງຈະຕ້ອງໄດ້ຄິດໄລ່ ເກັບອາກອນມູນຄ່າເພີ່ມ ຕາມລາຄາຂາຍອອກຕົວຈິງຂອງໂຮງງານໃຫ້ແກ່ລູກຄ້າທົ່ວໄປຕື່ມອີກ ຕາມທີ່ໄດ້ກຳນົດໄວ້ ຢູ່ໃນມາດຕາ 15 ຂໍ້ 6 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ສະບັບເລກທີ 48/ສພຊ, ລົງວັນທີ 20 ມິຖຸນາ 2018. ດັ່ງນັ້ນ, ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ ຈະແມ່ນກໍລະນີ ຊົມໃຊ້ເອງ, ໃຫ້ເປັນຂອງແຖມ, ໃຫ້ເປັນຂອງຂັວນ-ລາງວັນ ຫຼື ເອົາໃຫ້ລ້າ ກໍຕ້ອງກຳນົດເອົາລາຄາຂາຍທີ່ສະໜອງໃຫ້ຜູ້ອື່ນໂດຍທົ່ວໄປ ຄື: ສົມມຸດວ່າ ລາຄາຂາຍຂອງໂຮງງານໂດຍທົ່ວໄປ ບໍ່ລວມມີອາກອນມູນຄ່າເພີ່ມ ແມ່ນ 50.000 ກີບ/ແກັດ, ສັງເກດເຫັນວ່າ ມີກຳໄລລວມແກັດລະ 10.000 ກີບ ຫຼື 25% ຂອງຕົ້ນທຶນການຜະລິດ:

- ພື້ນຖານຄິດໄລ່ ອາກອນມູນຄ່າເພີ່ມ: 550 x 50.000 = 27.500.000 ກີບ;
- ອາກອນມູນຄ່າເພີ່ມເບື້ອງສົ່ງອອກ ທີ່ຄິດໄລ່ໄດ້: 27.500.000 x 7% = 1.925.000 ກີບ.

7.4. ພື້ນຖານຄິດໄລ່ອາກອນຊົມໃຊ້ ສຳລັບການສະໜອງການບໍລິການ ຢູ່ພາຍໃນປະເທດ ແມ່ນ ມູນຄ່າການຊົມໃຊ້ການບໍລິການ ບໍ່ລວມອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ເປັນພື້ນຖານຄິດໄລ່ອາກອນຊົມໃຊ້; ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 11 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ເຖິງວ່າຈະເປັນການບໍລິການທີ່ຕ້ອງມີການນຳໃຊ້ ສິນຄ້າ ຫຼື ວັດຖຸດິບ ເຂົ້ານຳ ເພື່ອສະໜັບສະໜູນການບໍລິການນັ້ນ ໃຫ້ເກີດຜົນສຳເລັດ ເຊັ່ນ ໂຮງເຕັ້ນລຳ ປະກອບມີເຫຼົ້າ, ໂສດາ, ນ້ຳກ້ອນ, ຂອງກັບແກ້ມ ແລະ ເຄື່ອງດື່ມຕ່າງໆ; ກິດຈະການກ໊ອຟ ປະກອບມີການບໍລິການຄ່າເດີ່ນ, ຄ່າລົດກ໊ອຟ, ອາຫານ, ເຄື່ອງດື່ມ ແລະ ອື່ນໆ; ກິດຈະກຳສັນຍາກຳເສີມຄວາມງາມ ຕ້ອງມີນ້ຳຢາ ແລະ ເຄື່ອງມືຊ່ວຍ ເຫຼົ່ານີ້ເປັນຕົ້ນ ແມ່ນຈະຖືກກຳນົດໃຫ້ເປັນກິດຈະການບໍລິການທີ່ຕ້ອງເສຍອາກອນຊົມໃຊ້; ພື້ນຖານຄິດໄລ່ອາກອນຊົມໃຊ້ ການບໍລິການ ແມ່ນ ມູນຄ່າຈຳນວນເຕັມຂອງລາຍຮັບຈາກຄ່າບໍລິການທັງໝົດ. ສຳລັບອາກອນອາກອນຊົມໃຊ້ ທີ່ຕິດພັນກັບສິນຄ້າ ຫຼື ວັດຖຸດິບ ເພື່ອສະໜັບສະໜູນການບໍລິການໃຫ້ເກີດຜົນສຳເລັດນັ້ນ (ຖ້າມີ) ໃຫ້ຖືວ່າເປັນຕົ້ນທຶນຊື້ສິນຄ້າດັ່ງກ່າວ. ສຳລັບກິດຈະການກ໊ອຟ ບັນດາລາຍຮັບຈາກການຂາຍສິນຄ້າປະເພດທີ່ສາມາດນຳໃຊ້ໄດ້ຫຼາຍເທື່ອ ແລະ ບໍ່ຖືກກຳນົດໃຫ້ເສຍອາກອນຊົມໃຊ້ຕາມມາດຕາ 11 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ເຊັ່ນ: ລູກກ໊ອຟ, ໄມ້ຕີກ໊ອຟ, ໝວກ, ເກີບ, ເຄື່ອງນຸ່ງຕີກ໊ອຟ ເຫຼົ່ານີ້ເປັນຕົ້ນ ແມ່ນ ບໍ່ໃຫ້ຖືເປັນພື້ນຖານຄິດໄລ່ອາກອນຊົມໃຊ້ ແລະ ຕ້ອງອອກໃບເກັບເງິນການຂາຍຕ່າງຫາກ. ຕົວຢ່າງວິທີຄິດໄລ່ອາກອນຊົມໃຊ້ ດັ່ງນີ້ :

ຕົວຢ່າງ 1: ການຄິດໄລ່ອາກອນຊົມໃຊ້ຈາກ ກິດຈະການໂຮງເຕັ້ນລຳ/ດິສະໂກເທັກ: ສົມມຸດວ່າວິສາຫະກິດສ່ວນບຸກຄົນ ຄ ຈົດທະບຽນສ້າງຕັ້ງວິສາຫະກິດ ຕາມກົດໝາຍ ຂອງ ສປປ ລາວ ເພື່ອດຳເນີນທຸລະກິດບໍລິການໂຮງ

ເຕັ້ນລຳ/ດິສະໂກເທັກ, ສົມມຸດວ່າໃນເດືອນ ສິງຫາ 2022 ມີລາຍຮັບທຸລະກິດປະຈຳເດືອນ ບໍ່ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ທັງໝົດ 200.000.000 ກີບ. ວິທີຄິດໄລ່ ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້ :

- ພື້ນຖານຄິດໄລ່ອາກອນຊົມໃຊ້ ຂອງເດືອນ ສິງຫາ ປີ 2022 ຈຳນວນ 200.000.000 ກີບ;
- ອາກອນຊົມໃຊ້: 200.000.000 x 40% = **80.000.000 ກີບ;**

**ໝາຍເຫດ:** ສຳລັບກິດຈະການ ບໍລິການປະເພດ ໂຮງເຕັ້ນລຳ ແລະ ດິສະໂກເທັກ, ກິດຈະການໄນລ໌ຄລັບ ບາງກໍລະນີອາດຈະມີແຕ່ການສະໜອງການບໍລິການລ້ວນໆ ແລະ ບາງກໍລະນີແມ່ນມີການສະໜອງການບໍລິການຮ່ວມກັບສິນຄ້າ ແຕ່ກໍຕ້ອງກຳນົດເປັນກິດຈະການສະໜອງການບໍລິການ, ບັນດາສິນຄ້າທີ່ນຳມາສະໜອງ ຢູ່ພາຍໃນກິດຈະການດັ່ງກ່າວ ລວມທັງສິນຄ້າທີ່ຖືກເສຍອາກອນຊົມໃຊ້ ແລະ ບໍ່ຖືກເສຍອາກອນຊົມໃຊ້ ເຊັ່ນ: ເຫຼົ້າ, ເຄື່ອງດື່ມທີ່ມີທາດເຫຼົ້າ, ຢາສູບ ແລະ ອື່ນໆ ເຖິງວ່າຈະໄດ້ເສຍອາກອນຊົມໃຊ້ແລ້ວກໍຕາມ ກໍຈະຖືກຄິດໄລ່ອາກອນຊົມໃຊ້. ສະນັ້ນ, ການຄິດໄລ່ ແລະ ເກັບອາກອນຊົມໃຊ້ຢູ່ໃນຂອດບໍລິການ ຂອງກິດຈະການດັ່ງກ່າວ ແມ່ນໃຫ້ຖືເອົາຈຳນວນເຕັມຂອງລາຍຮັບຈາກຄ່າບໍລິການທີ່ເກີດຂຶ້ນພາຍໃນເດືອນທັງໝົດ, ສຳລັບອາກອນຊົມໃຊ້ ຂອງສິນຄ້າທີ່ໄດ້ເສຍແລ້ວນັ້ນ ແມ່ນອະນຸຍາດໃຫ້ລົງເປັນລາຍຈ່າຍເປັນຕົ້ນທຶນຂອງການຊື້ສິນຄ້າດັ່ງກ່າວ. ອັດຕາອາກອນຊົມໃຊ້ ສຳລັບກິດຈະການໂຮງເຕັ້ນລຳ/ດິສະໂກເທັກ ແມ່ນອັດຕາ 40% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.2) ອັດຕາອາກອນຊົມໃຊ້ສຳລັບການບໍລິການ ຂໍ້ 1 ຂອງຄຳແນະນຳສະບັບນີ້;

**ຕົວຢ່າງ 2:** ການຄິດໄລ່ອາກອນຊົມໃຊ້ຈາກ ກິດຈະການສັນຍາກຳເສີມຄວາມງາມ: ສົມມຸດວ່າວິສາຫະກິດສ່ວນບຸກຄົນ ກ ດຳເນີນທຸລະກິດ ເສີມຄວາມງາມ, ໃນເດືອນ ກັນຍາ 2022 ມີລາຍຮັບ ຈາກການເຮັດສັນຍາກຳ ແລະ ເຮັດເສີມສວຍໃຫ້ລູກຄ້າ ບໍ່ລວມອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ຈຳນວນ 250.000.000 ກີບ; ວິທີຄິດໄລ່ອາກອນຊົມໃຊ້ ດັ່ງນີ້ :

- ພື້ນຖານຄິດໄລ່ອາກອນຊົມໃຊ້ຂອງເດືອນກັນຍາ 2022: 250.000.000 ກີບ;
- ອາກອນຊົມໃຊ້: 250.000.000 x 13% = 32.500.000 ກີບ;

**ໝາຍເຫດ:** ອັດຕາອາກອນຊົມໃຊ້ ສຳລັບການບໍລິການ ກິດຈະການສັນຍະກຳເສີມຄວາມງາມ ແມ່ນ ອັດຕາ 13% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.2) ອັດຕາອາກອນຊົມໃຊ້ສຳລັບການບໍລິການ ຂໍ້ 3 ຂອງຄຳແນະນຳສະບັບນີ້. ກໍລະນີ ວິສາຫະກິດສ່ວນບຸກຄົນ ກ ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໄດ້ຈ້າງ ແລະ ຈ່າຍເງິນຄ່າແຮງງານ ໃຫ້ນາຍແພດ ຜູ້ຊ່ຽວຊານສຳລັບຜ່າຕັດສັນຍາກຳ ຈາກຕ່າງປະເທດ ( ເປັນຜູ້ບໍ່ມີພູມລຳເນົາ ) ມາສັນຍາກຳເພື່ອເສີມຄວາມງາມໃຫ້ລູກຄ້າ ການບໍລິການຂອງທ່ານໝໍດັ່ງກ່າວ ຈະບໍ່ຖືວ່າ ເປັນສະໜອງການບໍລິການ ຂອງຜູ້ບໍ່ມີພູມລຳເນົາ ທີ່ຕ້ອງເສຍອາກອນຊົມໃຊ້, ແຕ່ເປັນການເຄື່ອນໄຫວກິດຈະກຳທີ່ມີລາຍໄດ້ ຢູ່ ສປປ ລາວ ຂອງບຸກຄົນຕ່າງປະເທດ ທີ່ບໍ່ມີພູມລຳເນົາຢູ່ລາວ ແມ່ນຈະຖືກເສຍອາກອນລາຍໄດ້ບຸກຄົນ.

**ຕົວຢ່າງ 3:** ການຄິດໄລ່ອາກອນຊົມໃຊ້ ຈາກກິດຈະການ ບາລູນ ແລະ ການບິນດ້ວຍຈ້ອງ : ສົມມຸດວ່າ ບໍລິສັດບາລູນ ຈຳກັດຜູ້ດຽວ ຂຶ້ນທະບຽນດຳເນີນທຸລະກິດບໍລິການ ບາລູນ ແລະ ການບິນດ້ວຍຈ້ອງ, ໃນເດືອນ ກັນຍາ 2021 ມີລາຍຮັບ ຈາກການບໍລິການ ບໍ່ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ຈຳນວນ 350.000.000 ກີບ; ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດດັ່ງນີ້ :

- ພື້ນຖານຄິດໄລ່ ອາກອນຊົມໃຊ້ຂອງເດືອນກັນຍາ 2021: 350.000.000 ກີບ;
- ອາກອນຊົມໃຊ້: 350.000.000 x 12% = **42.000.000 ກີບ;**

**ໝາຍເຫດ :** ອັດຕາອາກອນຊົມໃຊ້ ສຳລັບກິດຈະບໍລິການ ບາລູນ ແລະ ບິດຈ້ອງນ້ອຍ ແມ່ນ ອັດຕາ 12% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.2) ອັດຕາອາກອນຊົມໃຊ້ສຳລັບການບໍລິການ ຂໍ້ 10 ຂອງຄຳແນະນຳສະບັບນີ້.

**ຕົວຢ່າງ 4:** ການຄິດໄລ່ອາກອນຊົມໃຊ້ ຈາກ ກິດຈະການຫວຍ: ສົມມຸດວ່າ ສາຂາ ຂອງ ວິສາຫະກິດຫວຍແຫ່ງໜຶ່ງ ໃນເດືອນ ກໍລະກົດ 2021 ໄດ້ຈຳໜ່າຍ ໃບຫວຍ ແລະ ເລກຫວຍ ອອກທັງໝົດ ທີ່ມີມູນຄ່າ 10.000 ກີບ

ຈຳນວນ 30.000 ໃບ ຫຼື ເລກຫວຍ ຊຶ່ງຢູ່ໃນມູນຄ່າ ຂອງໃບຫວຍ ຫຼື ເລກຫວຍ ຈຳນວນ 10.000 ກີບນັ້ນ ແມ່ນຜູ້ຊື້ຫວຍ ເປັນຜູ້ຈ່າຍ ເພື່ອຈຸດປະສົງສຳລັບການສ່ຽງໂຊກ ຂອງຕົນ. ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້ :

- ມູນຄ່າຂາຍຫວຍອອກທັງໝົດ: 30.000 x 10.000 = 300.000.000 ກີບ;
- ລາຍຮັບບໍ່ລວມມີອາກອນມູນຄ່າເພີ່ມ: $\frac{300.000.000}{110}$ x 100 = 272.727.273 ກີບ;
- ອາກອນມູນຄ່າເພີ່ມ: 272.727.273 x 10% = 27.272.727 ກີບ;
- ລາຍຮັບບໍ່ລວມມີອາກອນຊົມໃຊ້: $\frac{272.727.273}{130}$ x 100 = 209.790.210 ກີບ;
- ອາກອນຊົມໃຊ້: 209.790.210 x 30% = 62.937.063 ກີບ;

**ໝາຍເຫດ** : ອັດຕາອາກອນຊົມໃຊ້ ສຳລັບກິດຈະບໍລິການ ຫວຍ ແມ່ນ ອັດຕາ 30% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.2) ອັດຕາອາກອນຊົມໃຊ້ສຳລັບການບໍລິການ ຂໍ້ 7 ຂອງຄຳແນະນຳສະບັບນີ້. ສຳລັບກິດຈະການຫວຍ ແມ່ນມູນຄ່າ ຫຼື ລາຍຮັບຈາກການຂາຍຫວຍທັງໝົດ ຊຶ່ງນອນຢູ່ໃນກົລະນີການນຳໃຊ້ໃບເກັບເງິນສະເພາະທີ່ລວມມີອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້ຢູ່ນຳແລ້ວ ໝາຍເຖິງລາຄາ ຫຼື ມູນຄ່າຂອງຫວຍດັ່ງກ່າວ ແມ່ນຈຳນວນເງິນທີ່ຜູ້ຊື້ ຈະຕ້ອງໄດ້ຈ່າຍຕາມຈຳນວນເຕັມໃນເວລາທີ່ຕົນຊື້ຫວຍທີ່ລວມມີອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມຢູ່ນຳແລ້ວດັ່ງທີ່ກ່າວມານັ້ນ. ສະນັ້ນ, ອີງຕາມການກຳນົດ ພື້ນຖານຄິດໄລ່ ອາກອນຊົມໃຊ້ ທີ່ໄດ້ກຳນົດໄວ້ໃນ ຂໍ້ 8.2) ອັດຕາອາກອນຊົມໃຊ້ສຳລັບການບໍລິການ ຂໍ້ 7 ຂອງຄຳແນະນຳສະບັບນີ້ ແລະ ມາດຕາ 15 ກິດຈະການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບລ່ວຍສາອາກອນ ຈຶ່ງຖືວ່າ ອາກອນຊົມໃຊ້ ແມ່ນຖືກບັນຈຸຢູ່ໃນມູນຄ່າ ຂອງໃບຫວຍ ທີ່ຖືກສະໜອງ ຫຼື ຖືກຂາຍອອກ. ເພື່ອໃຫ້ເຂົ້າໃຈແຈ້ງຂຶ້ນຕື່ມ ຈຶ່ງຂໍຍົກຕົວຢ່າງ ໂດຍປະກອບມູນຄ່າ ຫຼື ລາຄາ ຂອງໃບຫວຍ ຫຼື ເລກຫວຍ 1 ໃບ ຫຼື 1 ເລກຫວຍ ທີ່ຖືກຂາຍໃນມູນຄ່າ 10.000 ກີບ ດັ່ງນີ້:

- ລາຄາຫວຍ 1 ເລກ ທີ່ຜູ້ຊື້ຫວຍຕ້ອງຈ່າຍທັງໝົດລວມມີ ອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້: 10.000 ກີບ;
- ລາຄາຂາຍບໍ່ລວມມີອາກອນມູນຄ່າເພີ່ມ ຫຼື ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ: $\frac{10.000}{100}$ x 100 = 9.091 ກີບ;
- ອາກອນມູນຄ່າເພີ່ມ: 9.091 x 10% = 909 ກີບ;
- ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ ແມ່ນ ລາຄາຂາຍລວມມີອາກອນຊົມໃຊ້: 9.091 ກີບ;
- ລາຄາຂາຍບໍ່ລວມມີອາກອນຊົມໃຊ້ ຫຼື ພື້ນຖານຄິດໄລ່ອາກອນຊົມໃຊ້: $\frac{9.091}{130}$ x 100 = 6.993 ກີບ;
- ອາກອນຊົມໃຊ້ທີ່ຄິດໄລ່ໄດ້ຈາກໃບຫວຍ ຫຼື ເລກຫວຍ 1 ເລກ: 6.993 x 30% = 2.098 ກີບ;

ດັ່ງນັ້ນ, ອີງໃສ່ການກຳນົດພື້ນຖານຄິດໄລ່ອາກອນຊົມໃຊ້ຈາກຫວຍ ທີ່ໄດ້ກຳນົດໄວ້ຢູ່ໃນ ຂໍ້ 3 ມາດຕາ 14 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ສຳລັບໃບຫວຍ ຫຼື ເລກຫວຍ 1 ເລກນີ້ ຈະປະກອບມີຈຳນວນເງິນ ອາກອນມູນຄ່າເພີ່ມ ແລະ ອາກອນຊົມໃຊ້ຢູ່ນຳແລ້ວ: 909 + 2.098 = 3.007 ກີບ; ສຳລັບຜູ້ຂາຍຫວຍ ຫຼື ສາຂາຫວຍ ຈະໄດ້ຮັບເງິນຕົວຈິງຈາກໃບຫວຍ ຫຼື ເລກຫວຍ 1 ເລກ ແມ່ນ : 10.000 – 3.007 = 6.993 ກີບ ເພື່ອຈະນຳໄປໄລ່ລຽງກັບລາງວັນອອກຫວຍຕົວຈິງໃນງວດທີ່ກ່ຽວຂ້ອງ.

7.5. ພື້ນຖານຄິດໄລ່ອາກອນຊົມໃຊ້ ສຳລັບການສະໜອງສິນຄ້າ ແລະ/ຫຼື ການບໍລິການ ຈາກຜູ້ບໍ່ມີພູມລຳເນົາທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ແມ່ນມູນຄ່າສິນຄ້າ ແລະ/ຫຼື ການບໍລິການຕົວຈິງບໍ່ລວມອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ; ການສະໜອງສິນຄ້າທີ່ຕ້ອງເສຍອາກອນຊົມໃຊ້ຈາກຜູ້ບໍ່ມີພູມລຳເນົາ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ແກ່ຜູ້ຊົມໃຊ້ ຫຼື ຜູ້ສັ່ງຊື້ ຢູ່ ສປປ ລາວ ຕາມປົກກະຕິ ແມ່ນເປັນການສົ່ງສິນຄ້າຜ່ານລະບົບໄປສະນີ ຫຼື ຜ່ານບໍລິສັດຂົນສົ່ງດ່ວນສາກົນ ເຊັ່ນວ່າ ບໍລິສັດ ຂົນສົ່ງຖົງເມ ຈຳກັດ ມາຍັງ ສປປ ລາວ ດັ່ງນີ້

ເປັນຕົ້ນ; ສຳລັບການສະໜອງການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ຈາກຜູ້ບໍ່ມີພູມລຳເນົາ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ແກ່ຜູ້ຊົມໃຊ້ ຢູ່ ສປປ ລາວ ນັ້ນ ບາງກໍລະນີ ແມ່ນໄດ້ສົ່ງ ບຸກຄົນ ຫຼື ແຮງງານ ຫຼື ນາຍຊ່າງທີ່ຊໍານານງານ ເຂົ້າມາສະໜອງການບໍລິການຕົວຈິງ ຢູ່ ສປປ ລາວ ອີງຕາມ ຂໍ້ຕົກລົງກັນຢູ່ໃນສັນຍາ ຫຼື ຂໍ້ຜູກພັນລະຫວ່າງຜູ້ຮັບການສະໜອງ ຢູ່ ສປປ ລາວ ກັບ ຜູ້ສະໜອງທີ່ບໍ່ມີພູມລຳເນົາ ເນື່ອງຈາກວ່າ ຕາມຫຼັກການ ຂອງການບໍລິການແມ່ນບໍ່ມີການນໍາເຂົ້າ ແລະ ສົ່ງອອກ. ສະນັ້ນ, ຖ້າການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ ເກີດຢູ່ສະຖານທີ່ໃດແມ່ນ ຖືວ່າພື້ນຖານຄິດໄລ່ ອາກອນຊົມໃຊ້ເກີດຂຶ້ນຢູ່ທີ່ນັ້ນ, ການສະໜອງ ສິນຄ້າ ແລະ/ຫຼື ການບໍລິການ ຈາກຜູ້ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງວິສາຫະກິດຢູ່ ສປປ ລາວ ຊຶ່ງໝາຍເຖິງຕ່າງປະເທດ, ເຂດເສດຖະກິດພິເສດ ແລະ ເຂດປອດພາສີ. ຕົວຢ່າງ ວິທີຄິດໄລ່ອາກອນຊົມໃຊ້ ມີ ດັ່ງນີ້:

**ຕົວຢ່າງ 1:** ກໍລະນີ ການສະໜອງສິນຄ້າ: ສົມມຸດບຸກຄົນທົ່ວໄປ ທີ່ບໍ່ດຳເນີນທຸລະກິດໃດໆ ໄດ້ຮັບສິນຄ້າປະເພດນ້ຳຫອມທີ່ຕົນໄດ້ສັ່ງຊື້ຜ່ານລະບົບອິນເຕີແນັດ ຈາກຜູ້ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ມູນຄ່າຂອງນ້ຳຫອມ ຊຶ່ງຜູ້ສັ່ງຊື້ຕ້ອງໄດ້ຊໍາລະເງິນຜ່ານລະບົບທະນາຄານໃຫ້ຜູ້ສະໜອງຢູ່ຕ່າງປະເທດຢ່າງຄົບຖ້ວນ ກ່ອນໜ້ານີ້ແລ້ວປະມານ 2 ອາທິດ ຈຳນວນ 200$ .ໄດ້ຮັບແຈ້ງວ່າສິນຄ້າມາຮອດແລ້ວຜູ້ກ່ຽວໄດ້ໄປຮັບເອົາສິນຄ້າດັ່ງກ່າວ ຢູ່ບໍລິສັດໄປສະນີລາວ; ຜູ້ກ່ຽວຈະຕ້ອງໄດ້ເສຍ ພາສີ ແລະ ອາກອນທຸກປະເພດທີ່ຕິດພັນ ໃຫ້ຄົບຖ້ວນ ຈຶ່ງສາມາດຮັບສິນຄ້າມານໍາໃຊ້ໄດ້. ສົມມຸດວ່າ ອັດຕາພາສີ 5% , ອັດແລກປ່ຽນ 1$ = 9.800 ກີບ; ວິທີການຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

- ມູນຄ່າແຈ້ງພາສີ :2 00X 9. 800= 1.960.000 ກີບ;
- ຄ່າພາສີ :1.960. 000X5 % = 98.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້: 1.960. 000+ 98.000 = 2.058.000 ກີບ;
- ອາກອນຊົມໃຊ້: 2.058.000 x 25% = **514.500 ກີບ;**

**ໝາຍເຫດ:** ອັດຕາ ອາກອນຊົມໃຊ້ ສໍາລັບນ້ຳຫອມທຸກຊະນິດ ຈະເປັນນໍາເຂົ້າ ຫຼື ຜະລິດຢູ່ພາຍໃນປະເທດກໍຕາມ ແມ່ນອັດຕາ 25% ຕາມທີ່ໄດ້ກໍານົດໄວ້ໃນ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 12 ຂອງຄໍາແນະນໍາສະບັບນີ້. ນອກຈາກຈະຕ້ອງເສຍພາສີ ແລະ ອາກອນຊົມໃຊ້ແລ້ວ ຜູ້ສັ່ງຊື້ສິນຄ້າ ຫຼື ຜູ້ຮັບສິນຄ້າ ດັ່ງກ່າວ ຍັງມີຄວາມຮັບຜິດຊອບເສຍອາກອນມູນຄ່າເພີ່ມ ແລະ ອາກອນກໍາໄລບຸກຄົນ ຕື່ມອີກ ໂດຍໃຫ້ເອົາພື້ນຖານຄິດໄລ່ອາກອນຊົມໃຊ້ ຄູນໃຫ້ອັດຕາສ່ວນກໍາໄລລວມແບບບັງຄັບ ເພື່ອຊອກຫາພື້ນຖານຄິດໄລ່ອາກອນກໍາໄລແບບບັງຄັບ ດັ່ງນີ້ :

- ກໍາໄລລວມແບບບັງຄັບ: (2.058.000+514.500 ) X 15% = 385.875 ກີບ;
- ອາກອນກໍາໄລບຸກຄົນນໍາເຂົ້າສິນຄ້າ: 385.875 x 20% = 77.175 ກີບ;
- ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ: 2.058.000 + 514.500 + 385.875 = 2.958.375 ກີບ;
- ອາກອນມູນຄ່າເພີ່ມ: 2.958.375 x 7% = 207.086 ກີບ;
- ມູນຄ່າຂອງນ້ຳຫອມທີ່ຜູ້ຮັບສິນຄ້າຕ້ອງຈ່າຍເປັນເງິນທັງໝົດ:

| | |
|---|---|
| • ມູນຄ່າຂອງສິນຄ້າ: | 1.960.000 ກີບ; |
| • ພາສີຂາເຂົ້າ: | 98.000 ກີບ; |
| • ອາກອນຊົມໃຊ້: | 514.500 ກີບ; |
| • ອາກອນມູນຄ່າເພີ່ມ: | 207.086 ກີບ; |
| • ອາກອນກໍາໄລບຸກຄົນນໍາເຂົ້າ: | 77.175 ກີບ; |
| **ລວມຍອດ:** | 2.856.761 ກີບ. |

ຕາມກົດໝາຍກຳນົດ ພັນທະພາສີ, ອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ເປັນພັນທະທາງອ້ອມ ແມ່ນໜ້າທີ່ຂອງຜູ້ຊື້ ຫຼື ຜູ້ຊົມໃຊ້ສິນຄ້າ ຢູ່ ສປປ ລາວເປັນຜູ້ເສຍ ; ສ່ວນອາກອນກຳໄລນັ້ນ ຕາມຫຼັກການ ແມ່ນໜ້າທີ່ຂອງຜູ້ສະໜອງເປັນຜູ້ເສຍ; ແຕ່ວ່າໃນກໍລະນີ ການສະໜອງສິນຄ້າຈາກຜູ້ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ແມ່ນບໍ່ສາມາດຫັກອາກອນກຳໄລໄວ້ໄດ້ ເນື່ອງຈາກວ່າຜູ້ສັ່ງຊື້ສິນຄ້າໄດ້ໂອນເງິນ ຕາມຈຳນວນເຕັມຂອງມູນຄ່າສິນຄ້າໄປໃຫ້ຜູ້ສະໜອງກ່ອນໜ້ານັ້ນຄົບຖ້ວນແລ້ວ. ດັ່ງນັ້ນ, ການສະໜອງສິນຄ້າ ຈາກຜູ້ບໍ່ມີພູມລຳເນົາທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວໃຫ້ແກ່ ບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ບໍ່ດຳເນີນທຸລະກິດ ຈຶ່ງໃຫ້ຖືວ່າເປັນການນຳເຂົ້າສິນຄ້າໂດຍບຸກຄົນ. ສະນັ້ນ,ການຈ່າຍອາກອນກຳໄລ ແມ່ນ ເປັນພາະລະໜ້າທີ່ຂອງຜູ້ຮັບການສະໜອງສິນຄ້າ ຢູ່ ສປປ ລາວ ເປັນຜູ້ຈ່າຍແທນຜູ້ສະໜອງທີ່ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ. ດັ່ງນັ້ນ, ການກຳນົດກຳໄລລວມ ເພື່ອເປັນພື້ນຖານຄິດໄລ່ ອາກອນກຳໄລແບບບັງຄັບ ຈຶ່ງໄດ້ຖືເອົາມູນຄ່າຂອງສິນຄ້າບວກຄ່າພາສີ (ຖ້າມີ) ແລະ ບວກອາກອນຊົມໃຊ້.

**ຕົວຢ່າງ 2:** ກໍລະນີ ການສະໜອງການບໍລິການ ໂດຍຜູ້ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ແກ່ນິຕິບຸກຄົນທີ່ດຳເນີນທຸລະກິດ ຢູ່ ສປປ ລາວ: ສົມມຸດ ບໍລິສັດ ຈຳກັດ ກ ສ້າງຕັ້ງວິສາຫະກິດ ຕາມກົດໝາຍ ຢູ່ ສປປ ລາວ ດຳເນີນທຸລະກິດ ສຳຫຼວດ ແລະຂຸດຄົ້ນບໍ່ແຮ່ ໄດ້ຈ້າງ ບໍລິສັດ ຂອງຕ່າງປະເທດ ເຂົ້າມາຖ່າຍພາບທາງອາກາດ ເພື່ອວຽກງານສຳຫຼວດເຂດຂຸດຄົ້ນດັ່ງກ່າວ ໃນໄລຍະ 30 ວັນ, ມູນຄ່າບໍລິການຖ່າຍພາບ ຕາມໃບສະເໜີລາຄາ ບໍ່ລວມມີ ອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ແມ່ນ 250.000 $ ; ສົມມຸດ ອັດຕາແລກປ່ຽນ 1 $ = 9.800 ກີບ; ວິທີຄິດໄລ່ອາກອນຊົມໃຊ້ ດັ່ງນີ້ :

- ມູນຄ່າບໍລິການເປັນເງິນກີບ ຫຼື ຖານຄິດໄລ່ອາກອນຊົມໃຊ້: 250.000 x 9.800 = 2.450.000.000 ກີບ;
- ອາກອນຊົມໃຊ້: 2.450.000.000 x 12% = 294.000.000 ກີບ.

**ໝາຍເຫດ:** ອັດຕາອາກອນຊົມໃຊ້ ສຳລັບກິດຈະການຖ່າຍພາບທາງອາກາດ ແມ່ນ ອັດຕາ 12% ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 8.2) ອັດຕາອາກອນຊົມໃຊ້ສຳລັບການບໍລິການ ຂໍ້ 10 ຂອງຄຳແນະນຳສະບັບນີ້. ການສະໜອງການບໍລິການຖ່າຍພາບທາງອາກາດ ດັ່ງກ່າວ ບໍລິສັດ ຈຳກັດ ກ ທີ່ສ້າງຕັ້ງວິສາຫະກິດ ຕາມກົດໝາຍ ຢູ່ ສປປ ລາວ ໃນຖານະທີ່ເປັນຜູ້ຊົມໃຊ້ການບໍລິການ ມີໜ້າທີ່ຄິດໄລ່ ແລະ ເກັບອາກອນຊົມໃຊ້ ( ເກັບນຳຕົນເອງ ແທນ ຫຼື ເກັບໃນນາມຜູ້ສະໜອງທີ່ບໍ່ມີພູມລຳເນົາ) ແລ້ວນຳໄປມອບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນ ບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 18 ຂີດໝາຍທີ 3 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້; ໃນກໍລະນີ ນີ້ ບໍລິສັດ ຈຳກັດ ກ ບໍ່ພຽງແຕ່ຕ້ອງໄດ້ຄິດໄລ່ ເກັບອາກອນຊົມໃຊ້ເທົ່ານັ້ນ ແຕ່ຍັງຕ້ອງໄດ້ຄິດໄລ່ ເກັບອາກອນມູນຄ່າເພີ່ມ ແລະ ຄິດໄລ່-ຫັກອາກອນກຳໄລຈາກຈຳນວນເງິນພູດທີ່ຈະສົ່ງໃຫ້ຜູ້ສະໜອງ ທີ່ບໍ່ມີພູມລຳເນົານັ້ນໄວ້ອີກ ດັ່ງນີ້:

- ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ: 2.450.000.000 + 294.000.000 = 2.744.000.000 ກີບ;
- ອາກອນມູນຄ່າເພີ່ມ (ອາກອນມູນຄ່າເພີ່ມ): 2.744.000.000 x 7% = 192.080.000 ກີບ;
- ພື້ນຖານຄິດໄລ່ ອາກອນກຳໄລ: 2.450.000.000 x 15% = 367.500.000 ກີບ;
- ອາກອນກຳໄລ: 367.500.000 x 20% = 73.500.000 ກີບ;
- ຈຳນວນເງິນ ທີ່ຕ້ອງສົ່ງໃຫ້ຜູ້ສະໜອງຢູ່ຕ່າງປະເທດ ພາຍຫຼັງທີ່ໄດ້ຫັກອາກອນກຳໄລໄວ້ແລ້ວ: 2.450.000.000 – 73.500.000 = 2.376.500.000 ກີບ.

**ໝາຍເຫດ:** ພື້ນຖານຄິດໄລ່ອາກອນ ກຳໄລ ກໍລະນີ ຜູ້ສະໜອງທີ່ບໍ່ມີພູມລຳເນົາ ແມ່ນ ກຳໄລລວມແບບບັງຄັບ 15% ຂອງລາຍຮັບທຸລະກິດ ທີ່ບໍ່ລວມມີ ອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 14 ຂໍ້ 2 (ຄ) ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ອັດຕາອາກອນກຳໄລ ແມ່ນອັດຕາທົ່ວໄປ 20% ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 15 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້; ອາກອນຊົມໃຊ້ ດັ່ງກ່າວ

ບໍລິສັດ ຈຳກັດ ກ ສາມາດລົງເປັນລາຍຈ່າຍດ້ານສ່ວຍສາອາກອນໄດ້;ສຳລັບອາກອນມູນຄ່າເພີ່ມ ຖືວ່າເປັນອາກອນມູນຄ່າເພີ່ມເບື້ອງສິນເຂົ້າ ຂອງ ບໍລິສັດ ຈຳກັດ ກ ຊຶ່ງສາມາດນຳໄປຫັກກັບອາກອນມູນຄ່າເພີ່ມເບື້ອງສິນອອກໄດ້ ເນື່ອງຈາກວ່າການບິນສຳຫຼວດເຂດໂຄງການຂຸດຄົ້ນບໍ່ແຮ່ດັ່ງກ່າວ ເປັນການສະໜອງການບໍລິການ ທີ່ຮັບໃຊ້ໂດຍກົງເຂົ້າໃນການດຳເນີນທຸລະກິດ ຂອງ ບໍລິສັດ ຈຳກັດ ກ .

7.6. ພື້ນຖານຄິດໄລ່ອາກອນຊົມໃຊ້ ສຳລັບພາຫະນະທີ່ນຳເຂົ້າຊົ່ວຄາວ ເພື່ອຮັບໃຊ້ໂຄງການຕາມສັນຍາລົງທຶນ ຂອງລັດຖະບານ, ໂຄງການຂອງເອກະຊົນ ລວມທັງພາຫະນະ ຂອງນັກຊ່ຽວຊານທີ່ມາປະຕິບັດໜ້າທີ່ຢູ່ ສປປ ລາວ ພາຍຫຼັງສຳເລັດໂຄງການ ຫຼື ສຳເລັດໜ້າທີ່ ຢູ່ ສປປ ລາວ ແລ້ວ ບໍ່ໄດ້ນຳອອກຄືນ ແຕ່ໄດ້ຂາຍ ຫຼື ໂອນສິດນຳໃຊ້ຢູ່ ສປປ ລາວ, ພື້ນຖານຄິດໄລ່ອາກອນຊົມໃຊ້ ແມ່ນມູນຄ່າ ຕາມການຕີລາຄາ ຂອງຄະນະກຳມະການທີ່ຖືກແຕ່ງຕັ້ງ. ໃນກໍລະນີ ມີເອກະສານການນຳເຂົ້າຊົ່ວຄາວ ຄະນະກຳມະການທີ່ຖືກແຕ່ງຕັ້ງຈະອີງໃສ່ມູນຄ່າຢູ່ໃນເອກະສານດັ່ງ ກ່າວ ລົບຄ່າຫຼຸ້ຍຫ້ຽນຕາມອາຍຸການນຳໃຊ້ຕົວຈິງອອກກ່ອນ ຫຼື ກໍລະນີບໍ່ມີເອກະສານນຳເຂົ້າຊົ່ວຄາວ ແມ່ນຈະອີງໃສ່ມູນຄ່າຕາມທ້ອງຕະຫຼາດ ຂອງພາຫະນະປະເພດດຽວກັນ ແລະ ຢູ່ໃນສະພາບດຽວກັນ ເປັນພື້ນຖານຄິດໄລ່ ພາສີ, ອາກອນຊົມໃຊ້,ອາກອນມູນຄ່າເພີ່ມ ແລະ ພັນທະອື່ນໆ ທີ່ຕິດພັນ.

**ຕົວຢ່າງ 1:** ການຄິດໄລ່ອາກອນຊົມໃຊ້ ກໍລະນີພາຫະນະທີ່ນຳເຂົ້າຊົ່ວຄາວທີ່ຂາຍຢູ່ພາຍໃນປະເທດ: ສົມມຸດວ່າບໍລິສັດ ກໍ່ສ້າງ ຂອງຕ່າງປະເທດ ໄດ້ເຊັນສັນຍາ ຮັບເໝົາກໍ່ສ້າງ ໂຄງການຂະໜາດໃຫຍ່ ຂອງລັດຖະບານ ໃນໄລຍະປະຕິບັດວຽກງານກໍ່ສ້າງແມ່ນໃຫ້ສຳເລັດພາຍໃນ 3 ປີ ນັບແຕ່ເດືອນ ມັງກອນ 2022 ຫາ ທ້າຍເດືອນທັນວາ 2024, ໃນເດືອນ ພະຈິກ 2021 ໄດ້ນຳລົດ ກະບະ ໂຕໂຍຕາ 4 ປະຕູ ລຸ້ນສູງ ຂັບເຄື່ອນ 4 ລໍ້ (ຣີໂວ) ຄວາມແຮງ 3.000 ຊີຊີເຂົ້າມາ ເພື່ອຮັບໃຊ້ໂຄງການເປັນການຊົ່ວຄາວ ແຕ່ພາຍຫຼັງສຳເລັດໂຄງການແລ້ວ ແມ່ນບໍ່ໄດ້ນຳອອກຄືນ ແລະໄດ້ຂາຍຢູ່ພາຍໃນປະເທດ; ສົມມຸດວ່າ ມູນຄ່າຂອງລົດກະບະ ຈຳນວນ 4 ຄັນ ທີ່ຄະນະກຳມະການຕີລາຄາ ແມ່ນ 5.000 $/ຄັນ, ສົມມຸດອັດຕາພາສີ 30%, ອັດຕາແລກປ່ຽນ 1 $ = 9.800 ກີບ. ວິທີຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້ :

- ມູນຄ່າລົດຈຳນວນ 4 ຄັນເປັນເງິນກີບ: 4 x 5.000 x 9.800 = 196.000.000 ກີບ;
- ຄ່າພາສີ: 196.000.000 x 30% = 58.800.000 ກີບ;
- ພື້ນຖານຄິດໄລ່ ອາກອນຊົມໃຊ້: 196.000.000 + 58.800.000 = 254.800.000 ກີບ;
- ອາກອນຊົມໃຊ້: 254.800.000 x 52% = 132.496.000 ກີບ.

**ໝາຍເຫດ** : ອັດຕາອາກອນຊົມໃຊ້ສຳລັບລົດກະບະ ຄວາມແຮງ 3.000 ຊີຊີ ແມ່ນ 52% ຕາມທີ່ໄດ້ກຳນົດໄວ້ໃນຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 2.1.1.1 ແຖວທີ 5 ຂອງຄຳແນະນຳສະບັບນີ້. ການຂາຍ ຫຼື ໂອນສິດນຳໃຊ້ຢູ່ພາຍໃນປະເທດ ລົດກະບະ ຈຳນວນ 4 ຄັນນັ້ນ,ນອກຈາກຈະຕ້ອງໄດ້ເສຍພາສີຂາເຂົ້າ ແລະອາກອນຊົມໃຊ້ ຕາມການຄິດໄລ່ນີ້ແລ້ວ ຍັງຈະຕ້ອງໄດ້ເສຍອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ ອີກ; ຜູ້ທີ່ຕ້ອງເສຍພາສີ,ອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ຕາມຫຼັກການ ແມ່ນຜູ້ຊື້ເປັນຜູ້ເສຍ ເນື່ອງຈາກວ່າເປັນພັນທະທາງອ້ອມ, ສຳລັບອາກອນກຳໄລ ແມ່ນຜູ້ຂາຍເປັນຜູ້ເສຍ ຫຼື ແລ້ວແຕ່ທັງ 2 ຝ່າຍຈະມີການຕົກລົງກັນວ່າຝ່າຍໃດຈະຮັບຜິດຊອບເສຍພັນທະດັ່ງກ່າວ. ວິທີຄິດໄລ່ອາກອນມູນຄ່າເພີ່ມ ແລະ ອາກອນກຳໄລ ດັ່ງນີ້:

- ກຳໄລລວມແບບບັງຄັບ: (254.800.000 + 132.496.000) x 15% = 58.095.400 ກີບ;
- ອາກອນກຳໄລ: 58.094.400 x 20% = 11.619.000 ກີບ;
- ພື້ນຖານຄິດໄລ່ອາກອນມູນຄ່າເພີ່ມ: 254.800.000 + 132.496.000 + 58.094.400 = 445.390.400 ກີບ;
- ອາກອນມູນຄ່າເພີ່ມ ຄິດໄລ່ໄດ້: 445.390.400 x 7% = 31.178.000 ກີບ.

8. ໂລແມັງ IV ມາດຕາ 15 ອັດຕາອາກອນຊົມໃຊ້

ອັດຕາອາກອນຊົມໃຊ້ ໄດ້ກຳນົດຕາມປະເພດສິນຄ້າ ແລະ ການບໍລິການ ຊຶ່ງປະກອບມີ ອັດຕາທຽບຖານ ແລະ ອັດຕາເດັດຖານ.

ອັດຕາທຽບຖານ ສຳລັບສິນຄ້າ ແລະ ການບໍລິການ ທີ່ຖືກເສຍອາກອນຊົມໃຊ້ ມີຫຼາຍອັດຕາຕ່າງກັນ ຂຶ້ນກັບປະເພດສິນຄ້າ ຫຼື ການບໍລິການ ຕາມທີ່ໄດ້ກຳນົດໄວ້ຢູ່ໃນການປັບປຸງ ມາດຕາ 15 ຂອງກົດໝາຍ ວ່າດ້ວຍອາກອນຊົມໃຊ້ ຂໍ້ທີ IV ຂອງກົດໝາຍ ວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 7 ສິງຫາ 2021 ແລະ ອັດຕາທຽບຖານ ແມ່ນ ເກັບຕາມ ລາຄາຂາຍຍົກ ຫຼື ມູນຄ່າການສະໜອງສິນຄ້າ ແລະ/ຫຼື ການບໍລິການ ຫຼື ຕາມຕົ້ນທຶນການຜະລິດ ຫຼື ການປະກອບ ຫຼື ຕາມມູນຄ່າຂອງການນຳເຂົ້າສິນຄ້າ ໂດຍອີງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 14 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ດັ່ງນີ້:

1) ອັດຕາອາກອນຊົມໃຊ້ສິນຄ້າ:

| ລ/ດ | | ປະເພດສິນຄ້າທົ່ວໄປທີ່ຖືກອາກອນຊົມໃຊ້ | ອັດຕາທຽບຖານເປັນສ່ວນຮ້ອຍ (%) | | |
|---|---|---|---|---|---|
| 1 | ນ້ຳມັນເຊື້ອໄຟ | | | | |
| | 1) | ນ້ຳມັນແອັດຊັງພິເສດ | 40% | | |
| | 2) | ນ້ຳມັນແອັດຊັງທຳມະດາ | 31% | | |
| | 3) | ນ້ຳມັນກາຊວນ | 21% | | |
| | 4) | ນ້ຳມັນກາດ | 8% | | |
| | 5) | ນ້ຳມັນເຕົາ, ນ້ຳມັນເຄື່ອງ, ນ້ຳມັນໄຮໂດລິກ, ນ້ຳມັນໜຽວ ແລະ ນ້ຳມັນຫ້າມລໍ້ | 5% | | |
| 2 | ພາຫະນະ | | | | |
| | 1) | ລົດຈັກ | | | |
| | 1.1 | ລົດຈັກ ທີ່ນຳໃຊ້ພະລັງງານເຊື້ອໄຟ | | | |
| | | ລາຍການ | ຊີບີຢູ | ຊີເຄດີ | ໄອເຄດີ |
| | | ແຕ່ 110 ເຊເຊ ລົງມາ | 10% | 6% | 3% |
| | | ເກີນ 110 ຫາ 150 ເຊເຊ | 20% | ສຳລັບຄວາມແຮງເກີນ 110 ເຊເຊ ຂຶ້ນໄປໃຫ້ເກັບຕາມ ອັດຕາ ຊີບີຢູ | |
| | | ເກີນ 150 ຫາ 200 ເຊເຊ | 28% | | |
| | | ເກີນ 200 ຫາ 250 ເຊເຊ | 39% | | |
| | | ເກີນ 250 ຫາ 500 ເຊເຊ | 75% | | |
| | | ເກີນ 500 ຫາ 800 ເຊເຊ | 100% | | |
| | | ເກີນ 800 ເຊເຊ ຂຶ້ນໄປ | 110% | | |
| | 2) | ລົດໃຫຍ່ | | | |
| | 2.1 | ລົດຂົນສົ່ງຂະໜາດນ້ອຍ | | | |
| | 2.1.1 | ລົດຂົນສົ່ງໂດຍສານປະເພດ ລົດເກັງ, ລົດຈີບ, ລົດຕູ້, ລົດກະບະສີ່ປະຕູ ຂຶ້ນໄປ | | | |

| | | |
|---|---|---|
| 2.1.1.1 | ທີ່ນຳໃຊ້ພະລັງງານເຊື້ອໄຟ | |
| | ແຕ່ 1.000 ເຊເຊ ລົງມາ | 26% |
| | ເກີນ 1.000 ຫາ 1.600 ເຊເຊ | 31% |
| | ເກີນ 1.600 ຫາ 2.000 ເຊເຊ | 36% |
| | ເກີນ 2.000 ຫາ 2.500 ເຊເຊ | 41% |
| | ເກີນ 2.500 ຫາ 3.000 ເຊເຊ | 52% |
| | ເກີນ 3.000 ຫາ 4.000 ເຊເຊ | 77% |
| | ເກີນ 4.000 ຫາ 5.000 ເຊເຊ | 92% |
| | ເກີນ 5.000 ເຊເຊ ຂຶ້ນໄປ | 102% |
| 2.1.1.2 | ລົດຂົນສົ່ງໂດຍສານທີ່ນຳໃຊ້ພະລັງງານສອງລະບົບຄື ພະລັງງານເຊື້ອໄຟ ແລະ ພະລັງງານທົດແທນອື່ນ | 50% ຂອງອັດຕາ ຕາມຄວາມແຮງທີ່ໄດ້ກຳນົດໄວ້ໃນຂໍ້ 2.1.1.1 |
| 2.1.1.3 | ລົດຂົນສົ່ງໂດຍສານທີ່ນຳໃຊ້ພະລັງງານສະອາດ | 3% |
| 2.1.2 | ລົດຂົນສົ່ງສິນຄ້າ ປະເພດ ລົດກະບະ 2 ປະຕູ ແລະ ລົດກະບະ 2 ປະຕູເຄິ່ງ | |
| | ທີ່ນຳໃຊ້ພະລັງງານເຊື້ອໄຟ | 16% |
| | ທີ່ນຳໃຊ້ພະລັງງານສະອາດ | 3% |
| 2.1.3 | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ຂະໜາດນ້ອຍອື່ນ | |
| | ທີ່ນຳໃຊ້ພະລັງງານເຊື້ອໄຟ | 11% |
| | ທີ່ນຳໃຊ້ພະລັງງານສະອາດ | 3% |
| 2.2 | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ຂະໜາດກາງ | |
| | ທີ່ນຳໃຊ້ພະລັງງານເຊື້ອໄຟ | 9% |
| | ທີ່ນຳໃຊ້ພະລັງງານສະອາດ | 3% |
| 2.3 | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ຂະໜາດໃຫຍ່ | |
| | ທີ່ນຳໃຊ້ພະລັງງານເຊື້ອໄຟ | 5% |
| | ທີ່ນຳໃຊ້ພະລັງງານສະອາດ | 3% |
| 2.4 | ລົດຕູ້ແຊ່ເຢັນ, ລົດບັນທຸກ ຂອງແຫຼວ ຫຼື ອາຍແກັສ ຫຼື ຊີມັງຜົງ, ລົດບັນທຸກນ້ຳມັນ, ລົດນ້ຳ, ລົດເຄຣນ, ລົດຟອກລິບ, ລົດໂມ້ຊີມັງ, ລົດດູດວິດ, ລົດສີດຊີມັງ, ລົດສີດພົ່ນທຸກຊະນິດ ແລະ ລົດເຮືອນເຄື່ອນທີ່ | 10% |
| 2.5 | ລົດຫົວລາກ, ຫາງລາກ ແລະ ເຄິ່ງຫາງລາກ | 5% |
| 2.6 | ລົດກ໊ອຟ ແລະ ລົດຮັບໃຊ້ສະໜາມກ໊ອຟ | 15% |
| 2.7 | ລົດທ່ຽວຊົມສະເພາະໃນແຫຼ່ງທ່ອງທ່ຽວ | 5% |
| 2.8 | ລົດຈັກສີ່ລໍ້ (ATV) ແລະ ລົດໂກຄາດ (Gokart) | 25% |

| | | |
|---|---|---|
| 2.9 | ສຳລັບລົດໃຫຍ່ ທີ່ນຳໃຊ້ພະລັງງານເຊື້ອໄຟ ທີ່ຜະລິດ ຫຼື ປະກອບ ຢູ່ໃນລະບົບໂຮງງານພາຍໃນປະເທດໃນຮູບແບບ ຊີເຄດີ ໃຫ້ເກັບໃນອັດຕາ 5% ແລະ ໄອເຄດີ ໃຫ້ເກັບໃນອັດຕາ 3% | |
| 3 | ຊິ້ນສ່ວນປະກອບ ນຳເຂົ້າເພື່ອມາປະກອບ ທີ່ບໍ່ຢູ່ໃນລະບົບໂຮງງານພາຍໃນປະເທດ ແລະ ເຄື່ອງອາໄຫຼ່ ປ່ຽນຖ່າຍ | |
| | ລົດຈັກ | 6% |
| | ລົດຂົນສົ່ງໂດຍສານ ແລະ ລົດຂົນສົ່ງສິນຄ້າ ທຸກຊະນິດ | 11% |
| 4 | ເຄື່ອງຕົບແຕ່ງພາຫະນະ | |
| | ເຄື່ອງສຽງ | 25% |
| | ເຄື່ອງປະດັບເອ້ພາຫະນະ | 20% |
| 5 | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ | |
| | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ເກີນ 23 ສ່ວນຮ້ອຍ | 80% |
| | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າແຕ່ 23 ສ່ວນຮ້ອຍລົງມາ ຫາ 10 ສ່ວນຮ້ອຍ | 70% |
| | ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ຕ່ຳກວ່າ 10 ສ່ວນຮ້ອຍລົງມາ | 62% |
| 6 | ເບຍ | |
| | ເບຍທີ່ມີທາດເຫຼົ້າ 0,5 ສ່ວນຮ້ອຍ ຂຶ້ນໄປ | 60% |
| | ເບຍທີ່ມີທາດເຫຼົ້າ ຕ່ຳກ່ວາ 0,5 ສ່ວນຮ້ອຍ ລົງມາ | 20% |
| 7 | ປະເພດຢາສູບ | |
| | ຢາຊິກາ, ຢາສູບເປັນກອກ ຫຼື ເປັນຊອງ ແລະ ຢາສູບປະເພດອື່ນ | 57% |
| | ຢາເສັ້ນ | 42% |
| 8 | ອາຍແກັສສຳລັບຍານພາຫະນະ | 10% |
| 9 | ເຄື່ອງດື່ມສຳເລັດຮູບ | |
| | ນ້ຳອັດລົມ, ໂຊດາ, ເຄື່ອງດື່ມປະເພດກາເຟ ແລະ ເຄື່ອງດື່ມທີ່ຄ້າຍຄຽງ | 7% |
| | ເຄື່ອງດື່ມຊູກຳລັງ | 12% |
| 10 | ເຄື່ອງແກ້ວຄຣິສຕັ້ນທີ່ເປັນເຄື່ອງໃຊ້ ແລະ ປະດັບ,ໂຄມໄຟປະດັບ | 25% |
| 11 | ຜ້າຮົ່ມທີ່ເຮັດດ້ວຍຂົນແກະ ຫຼື ຂົນລະອຽດຂອງສັດ | 20% |
| 12 | ນ້ຳຫອມ, ຜະລິດຕະພັນເຄື່ອງສຳອາງ, ອຸປະກອນຮັບໃຊ້ການເສີມສວຍ ແລະ ເສີມຄວາມງາມ | 25% |
| 13 | ໄພ້ ແລະ ອຸປະກອນການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ | 100% |
| 14 | ບັ້ງໄຟ, ດອກໄມ້ໄຟ, ໝາກກະໂພກ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ | 85% |
| 15 | ເຮືອໄວ, ເຮືອຢອດ ແລະ ເຮືອກິລາທີ່ແລ່ນດ້ວຍເຄື່ອງຈັກ | 25% |
| 16 | ອຸປະກອນຮັບສັນຍານໂທລະພາບຜ່ານດາວທຽມ | 15% |
| 17 | ເຄື່ອງຫຼິ້ນສຽງ ແລະ ພາບ, ກ້ອງຖ່າຍຮູບ, ໂທລະສັບ, ເຄື່ອງອັດສຽງ ແລະ ພາບ, ເຄື່ອງດົນຕີ | 15% |

| | | |
|---|---|---|
| 18 | ເຮືອບິນບໍ່ມີຄົນຂັບ, ເຄື່ອງຖ່າຍພາບອາກາດ, ເຄື່ອງບິນດ້ວຍຈ້ອງ ແລະ ເຄື່ອງຈັກໄອພົ່ນຂະໜາດນ້ອຍ | 25% |
| 19 | ໂຕະບິນລຽດ, ໂຕະສະນຸກເກີ, ອຸປະກອນໂບລິ້ງ, ໂຕະຫຼິ້ນບານເຕະ | 35% |
| 20 | ຕູ້ເກມຢອດຫຼຽນ, ເຄື່ອງຫຼິ້ນເກມທຸກຊະນິດ ແລະ ເຄື່ອງຫຼິ້ນເກມການພະນັນທຸກຊະນິດ ໂດຍໄດ້ຮັບອະນຸຍາດຢ່າງຖືກຕ້ອງ | (ມີອັດຕາສະເພາະຕາມບຽບການ) |

2) ອັດຕາອາກອນຊົມໃຊ້ສຳລັບການບໍລິການ

| ລດ/ | ການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ | ອັດຕາ |
|---|---|---|
| 1 | ການບັນເທີງໂຮງເຕັ້ນລໍາ :, ດິດສະໂກເທັກ, ຄາຣາໂອເກະ | 40% |
| 2 | ກິດຈະການໂບລິ້ງ | 24% |
| 3 | ກິດຈະການສົ່ງເສີມຄວາມງາມ | 13% |
| 4 | ກິດຈະການການບໍລິການໂທລະສັບ, ສັນຍານໂທລະພາບສາຍໄຍແກ້ວ, ສັນຍານໂທລະພາບ ດີຈີຕອນ | 5% |
| 5 | ກິດຈະການການບໍລິການອິນເຕີເນັດ | |
| | ປີ 2022 | 2% |
| | ປີ 2023 | 1% |
| | ປີ 2024 ເປັນຕົ້ນໄປ | 0% |
| 6 | ກິດຈະການສະໜາມກ໊ອຟ | 25% |
| 7 | ກິດຈະການຫວຍ | 30% |
| 8 | ກິດຈະການກາຊີໂນ ແລະ ຕູ້ເກມຢອດຫຼຽນ ແລະ ຫຼິ້ນເກມທຸກປະເພດ | ກຳນົດຢູ່ໃນລະບຽບການສະເພາະ |
| 9 | ກິດຈະການ ແຂ່ງລົດ, ແຂ່ງມ້າ, ຕີໄກ່ | 30% |
| 10 | ກິດຈະການ ບາລູນ, ບໍລິການບິນດ້ວຍຈ້ອງ ຫຼື ຈັກອາຍພົ່ນຂະໜາດນ້ອຍ, ການບໍລິການຖ່າຍພາບທາງອາກາດ. | 12% |

ສໍາລັບ ລົດໃຫຍ່ ທີ່ຜະລິດ ຫຼື ປະກອບ ຢູ່ໃນລະບົບໂຮງງານພາຍໃນປະເທດ ຮູບແບບຊີເຄດີ (CKD) ແມ່ນ ຊິ້ນສ່ວນປະກອບພາຫະນະເປັນຊຸດຄັນແບບຄົບຖ້ວນທີ່ນໍາເຂົ້າມາ ເພື່ອມາປະກອບເປັນຄັນສໍາເລັດຮູບ (CBU ) ແລ້ວຈຶ່ງມາຈໍາໜ່າຍໃຫ້ຜູ້ຊົມໃຊ້ , ຮູບແບບໄອເຄດີ ( IKD ) ແມ່ນ ຊິ້ນສ່ວນປະກອບພາຫະນະເປັນຊຸດຄັນບໍ່ຄົບຖ້ວນ ທີ່ນໍາເຂົ້າມາເພື່ອປະກອບໃສ່ກັບຊິ້ນສ່ວນ ທີ່ຜະລິດ ຢູ່ພາຍໃນປະເທດໃຫ້ເປັນຄັນແບບສໍາເລັດຮູບ ຊີບີຢູ (CBU ) ແລ້ວຈຶ່ງມາຈໍາໜ່າຍໃຫ້ຜູ້ຊົມໃຊ້. ອັດຕາອາກອນຊົມໃຊ້ ສໍາລັບລົດທີ່ຜະລິດ ຫຼື ປະກອບ ຈາກ 2 ຮູບແບບດັ່ງກ່າວ ແມ່ນໄດ້ກໍານົດໄວ້ ຂໍ້ 8.1) ອັດຕາອາກອນຊົມໃຊ້ສິນຄ້າ ຂໍ້ 2.9 ຂອງຄໍາແນະນໍາສະບັບນີ້.

9. ຂໍ້ IV ມາດຕາ 16 ອາກອນຊົມໃຊ້ຕໍ່າສຸດ

ອັດຕາອາກອນຊົມໃຊ້ຕໍ່າສຸດ ແມ່ນ ອາກອນເດັດຖານ ນໍາໃຊ້ສະເພາະສິນຄ້ານໍາເຂົ້າບາງປະເພດທີ່ຖືກເສຍອາກອນຊົມໃຊ້ ຕາມນະໂຍບາຍຂອງລັດຖະບານ, ຊຶ່ງສິນຄ້າທີ່ຖືກອາກອນຊົມໃຊ້ຕໍ່າສຸດ ແມ່ນ ສິນຄ້າທີ່ໄດ້ຄິດໄລ່ເສຍອາກອນຊົມໃຊ້ຕາມອັດຕາພຽງຖານ ທີ່ໄດ້ກໍານົດໄວ້ໃນ ຂໍ້ IV ມາດຕາ 15 ອັດຕາອາກອນຊົມໃຊ້ ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນທີ 7 ສິງຫາ 2021.

ໃນກໍລະນີ ອາກອນຊົມໃຊ້ອັດຕາທຽບຖານ ຫາກມີຈຳນວນຕໍ່າກ່ວາ ອາກອນຊົມໃຊ້ຕໍ່າສຸດ ແມ່ນ ໃຫ້ເກັບຕາມ ອາກອນຊົມໃຊ້ຕໍ່າສຸດ ໂດຍໃຫ້ເກັບຕາມຈຳນວນຫົວໜ່ວຍ. ນອກຈາກ ອັດຕາເດັດຖານອາກອນຊົມໃຊ້ຕໍ່າສຸດແລ້ວ ຍັງ ມີການປະຕິບັດ ອັດຕາເດັດຖານອາກອນຊົມໃຊ້ເພີ່ມເປັນບາງໄລຍະ ສຳລັບສິນຄ້າບາງປະເພດອີກຕື່ມ ຊຶ່ງໃຫ້ເກັບ ຕາມຈຳນວນຫົວໜ່ວຍເຊັ່ນກັນ. ສິນຄ້າທີ່ຖືກເສຍອາກອນຊົມໃຊ້ຕໍ່າສຸດ ແລະ ອາກອນຊົມໃຊ້ເພີ່ມ ແມ່ນປະເພດສິນຄ້າ ຄວບຄຸມ ແລະ ບໍ່ສົ່ງເສີມ ເຊັ່ນ: ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ, ເບຍ , ຢາສູບ ແລະ ອື່ນໆທີ່ຄ້າຍຄຽງ. ກະຊວງການເງິນ ເປັນຜູ້ຄົ້ນຄ້ວາ ແລະ ກຳນົດປະເພດສິນຄ້າ, ອາກອນຊົມໃຊ້ຕໍ່າສຸດ ແລະ ອາກອນຊົມໃຊ້ເພີ່ມ ແລ້ວນຳສະເໜີຜ່ານກອງ ປະຊຸມລັດຖະບານເພື່ອຕົກລົງ. ຫຼັງຈາກນັ້ນ ລັດຖະບານຈະນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາໃນ ແຕ່ລະໄລຍະທີ່ເຫັນວ່າມີຄວາມຈຳເປັນ ສຳລັບການດັດສົມການຊົມໃຊ້ ແລະ ເສດຖະກິດແຫ່ງຊາດ.

ເພື່ອສະດວກໃນການຈັດຕັ້ງປະຕິບັດ ຈຶ່ງໄດ້ຍົກເອົາ ອັດຕາອາກອນຊົມໃຊ້ທຽບຖານ ຂອງບາງລາຍການສິນຄ້າ ແລະ ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ IV ວັກ 1 ມາດຕາ 15 ອັດຕາອາກອນຊົມໃຊ້ ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ ສະບັບເລກທີ 01/ສພຊ, ລົງວັນ ທີ 7 ສິງຫາ 2021 ມາສະເໜີເປັນຕົວຢ່າງວິທີການຄິດໄລ່ ອາກອນຊົມໃຊ້ຕໍ່າສຸດ ແລະ ອາກອນຊົມໃຊ້ເພີ່ມ ດັ່ງນີ້:

**ຕົວຢ່າງ 1:** ອັດຕາເດັດຖານ ຫຼື ອາກອນຊົມໃຊ້ຕໍ່າສຸດ: ສົມມຸດວ່າໃນສົກງົບປະມານ 2022 ຄະນະປະຈຳ ສະພາແຫ່ງຊາດ ໄດ້ມີມະຕິຕົກລົງໃຫ້ປະຕິບັດ ອາກອນຊົມໃຊ້ຕໍ່າສຸດ ສຳລັບສິນຄ້າ ປະເພດເບຍ ທີ່ນຳເຂົ້າແຕ່ລະ ຊະນິດ ແຕ່ລະຍີ່ຫໍ້ ໃນອັດຕາເດັດຖານທີ່ແຕກຕ່າງກັນຂຶ້ນກັບການກຳນົດລາຄາຂອງຜູ້ຜະລິດເບຍແຕ່ລະຍີ່ຫໍ້; ສົມມຸດວ່າເບຍໄຮນີເກັນ, ຊຶ່ງມີທາດເຫຼົ້າ 0,5% ຖືກກຳນົດ ອາກອນຊົມໃຊ້ຕໍ່າສຸດ: 8.000 ກີບ/ລິດ ແລະ ສົມມຸດ ລາຄາຂາຍຍົກຢູ່ພາຍໃນປະເທດ ຂອງເບຍປອງໄຮນີເກັນ ແມ່ນ 93.000 ກີບ/ແກັດ; ໃນເດືອນກຸມພາ 2022 ວິ ສາຫະກິດຮຸ້ນສ່ວນ ກ ໄດ້ນຳເຂົ້າ ເບຍປອງແຮນນີເກັນ ເພື່ອຈຳໜ່າຍ ຢູ່ພາຍໃນປະເທດ ຕາມເອກະສານທີ່ແຈ້ງນຳ ເຂົ້າ ມີຈຳນວນ 10.000 ແກັດ (1 ແກັດ = 24 ປອງ; 1 ປອງ = 0,33 ລິດ), ມູນຄ່າແຈ້ງພາສີ 3,67 $/ແກັດ; ສົມມຸດອັດຕາພາສີ 40%; ອັດຕາແລກປ່ຽນ 1$ = 9.800 ກີບ. ວິທີຄິດໄລ່ເກັບອາກອນຊົມໃຊ້ຕໍ່າສຸດ ໃຫ້ປະຕິບັດ ຕາມຂັ້ນຕອນ ດັ່ງນີ້ :

**ກ. ການຄິດໄລ່ ອາກອນຊົມໃຊ້ ຂອດນຳເຂົ້າ:**

- ມູນຄ່າແຈ້ງພາສີເປັນເງິນກີບ: (10.000 x 3,67) x 9.800 = 359.660.000 ກີບ;
- ຄ່າພາສີຂາເຂົ້າ: 359.660.000 x 40% = 143.864.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້ຂອດນຳເຂົ້າ: 359.660.000 + 143.864.000 = 503.524.000 ກີບ;
- ອາກອນຊົມໃຊ້ຂອດນຳເຂົ້າ: 503.524.000 x 60% = 302.114.400 ກີບ.

**ຂ. ການຄິດໄລ່ ອາກອນຊົມໃຊ້ ຂອດຂາຍຍົກຢູ່ພາຍໃນປະເທດ:**

- ມູນຄ່າຂາຍຍົກທັງໝົດ: 10.000 x 93.000 = 930.000.000 ກີບ;
- ພື້ນຖານຄິດໄລ່ອາກອນຊົມໃຊ້ຂອດພາຍໃນ: 930.000.000-503.524.000 = 426.476.000 ກີບ;
- ອາກອນຊົມໃຊ້ ຂອດພາຍໃນ: 426.476.000 x 60% = 255.885.600 ກີບ;
- ລວມອາກອນຊົມໃຊ້ທັງໝົດ: 302.114.400 +255.885.600 = 558.000.000 ກີບ.

**ຄ. ຄິດໄລ່ອາກອນຊົມໃຊ້ຕໍ່າສຸດອັດຕາເດັດຖານ ຕາມຫົວໜ່ວຍ ເປັນ ລິດ :**

- ຈຳນວນ: (10.000 x 24) x 0,33 = 79.200 ລິດ;
- ອາກອນຊົມໃຊ້ຕໍ່າສຸດທັງໝົດ: 79.200 x 8.000 = 633.600.000 ກີບ;
- ອາກອນຊົມໃຊ້ທີ່ມອບແລ້ວທັງໝົດ: 558.000.000 ກີບ;
- ອາກອນຊົມໃຊ້ ຕ້ອງມອບຕື່ມ : 633.600.000 – 558.000.000 = **75.600.000 ກີບ.**

**ໝາຍເຫດ:** ການຄິດໄລອາກອນຊົມໃຊ້ຕໍ່າສຸດ ສໍາລັບສິນຄ້າ ປະເພດ ເບຍ, ເຫຼົ້າ ຫຼື ເຄື່ອງດື່ມທີ່ມີທາດເຫຼົ້າ ແລະ ຢາສູບ ຕາມທີ່ໄດ້ກໍານົດໄວ້ຢູ່ໃນມາດຕາ 14 ຂໍ້ 1 ວັກທີ 2 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ນັ້ນ ຂັ້ນຕອນທໍາອິດ ຕ້ອງໄດ້ຄິດໄລ່ອາກອນຊົມໃຊ້ອັດຕາທຽບຖານ 2 ຄັ້ງ ຄື: ຢູ່ຂອດນໍາເຂົ້າ ແມ່ນເຈົ້າໜ້າທີ່ພາສີ ຫຼື ເຈົ້າໜ້າທີ່ອື່ນທີ່ຖືກມອບໝາຍ ເປັນຜູ້ຄິດໄລ່ ແລະ ເກັບ ແລະ ຂອດຂາຍຍົກ ແລະ ອາກອນຊົມໃຊ້ຕໍ່າສຸດ ຢູ່ພາຍໃນປະເທດ ແມ່ນເຈົ້າໜ້າທີ່ສ່ວຍສາອາກອນ ເປັນຜູ້ຄິດໄລ່ ແລະ ເກັບ; ສໍາລັບອາກອນຊົມໃຊ້ຕໍ່າສຸດ ແມ່ນໃຫ້ຄິດໄລ່ຕາມອັດຕາເດັດຖານທີ່ຖືກກໍານົດຈາກຄະນະປະຈໍາສະພາແຫ່ງຊາດ ຕາມຈໍານວນຫົວໜ່ວຍຕົວຈິງ. ກໍລະນີ ຜົນການຄິດໄລ່ ອາກອນຊົມໃຊ້ຕໍ່າສຸດ ຫາກມີຈໍານວນຕໍ່າກ່ວາ ຈໍານວນອາກອນຊົມໃຊ້ ອັດຕາທຽບຖານຂອດນໍາເຂົ້າ ລວມກັບຂອດຂາຍຍົກພາຍໃນ ແມ່ນໃຫ້ຖືເອົາຕາມ ຈໍານວນ ອາກອນຊົມໃຊ້ອັດຕາທຽບຖານ ທີ່ຄິດໄລ່ ຈາກ ຂອດນໍາເຂົ້າລວມກັບຂອດຂາຍຍົກພາຍໃນ ທີ່ມີຈໍານວນສູງກ່ວາ. ສົມມຸດກໍານົດອາກອນຊົມໃຊ້ຕໍ່າສຸດ ສໍາລັບເບຍໄຮນີເກນດັ່ງກ່າວ 6.500 ກີບ/ລິດ. ການຄິດໄລ່ອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

- ອາກອນຊົມໃຊ້ຕໍ່າສຸດ: 79.200 x 6.500 = 514.800.000 ກີບ;
- ອາກອນຊົມໃຊ້ທີ່ມອບແລ້ວທັງໝົດ : 548.700.000 ກີບ;
- ຈໍານວນອາກອນຊົມໃຊ້ຕໍ່າສຸດ ຫຼຸດ ຈໍານວນອາກອນຊົມໃຊ້ທີ່ຄິດໄລ່ຢູ່ເກັບຂອດນໍາເຂົ້າ ແລະ ຂາຍຍົກພາຍໃນ: 514.800.000 – 548.700.000 = - 33.900.000 ກີບ.

ຜົນຂອງການຄິດໄລ່ ເຫັນວ່າ ອາກອນຊົມໃຊ້ຕໍ່າສຸດ ມີຈໍານວນ ນ້ອຍກ່ວາ ອາກອນຊົມໃຊ້ ທີ່ຄິດໄລ່ເກັບຢູ່ຂອດນໍາເຂົ້າ ແລະ ຂອດຂາຍຍົກພາຍໃນ. ສະນັ້ນ;ຈຶ່ງໃຫ້ຖືເອົາ ອາກອນຊົມໃຊ້ທີ່ຄິດໄລ່ ແລະເກັບຢູ່ຂອດນໍາເຂົ້າ ແລະ ຂອດຂາຍຍົກພາຍໃນ ທີ່ມີຈໍານວນເງິນຫຼາຍກ່ວາ ເປັນອາກອນຊົມໃຊ້ທີ່ຕ້ອງມອບ.

**ຕົວຢ່າງ 2: ອັດຕາເດັດຖານອາກອນຊົມໃຊ້ເພີ່ມ:** ສົມມຸດວ່າໃນສົກງົບປະມານ 2021 ລັດຖະບານ ມີຄວາມຕ້ອງການ ເພີ່ມລາຍຮັບງົບປະມານ ຈໍານວນໜຶ່ງ ເພື່ອແກ້ໄຂລາຍຈ່າຍ ທີ່ຈໍາເປັນ ແລະໄດ້ຕົກລົງ ກໍານົດສິນຄ້າທີ່ຜະລິດຢູ່ພາຍໃນປະເພດຢາສູບສໍາເລັດຮູບ ເປັນຊອງ ໂດຍໄດ້ກໍານົດອາກອນຊົມໃຊ້ເພີ່ມຕາມອັດຕາເດັດຖານ 800 ກີບ ຕໍ່ 1 ຊອງຢາສູບ; ການຈັດເກັບອາກອນຊົມໃຊ້ເພີ່ມ ດັ່ງກ່າວ ແມ່ນໂຮງງານຜະລິດຢາສູບເປັນຜູ້ຮັບຜິດຊອບ ເກັບ ໂດຍໃຫ້ເອົາຈໍານວນ ຊອງຢາສູບ ທີ່ຜະລິດ ແລະ ຂາຍພາຍໃນທັງໝົດ ຄູນກັບ 800 ກີບ (ອັດຕາເດັດຖານ) ແລ້ວໃຫ້ນໍາມາແຈ້ງມອບ ນໍາຂະແໜງສ່ວຍສາອາກອນ ບ່ອນທີ່ຕົນຂຶ້ນກັບ ຫຼື ບ່ອນທີ່ກໍານົດໃຫ້ແຈ້ງ ຫຼື ຍື່ນໃບແຈ້ງ ພ້ອມກັບການ ແຈ້ງເສຍອາກອນຊົມໃຊ້ອັດຕາທຽບຖານ ປະຈໍາເດືອນປົກກະຕິ ບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ. ສົມມຸດວ່າ ໂຮງງານຢາສູບ ກ ຈົດທະບຽນທຸລະກິດ ບໍລິສັດມະຫາຊົນ ຈໍາກັດ ໃນເດືອນ ກັນຍາ 2021 ຜະລິດຢາສູບເພື່ອຈໍາໜ່າຍຢູ່ພາຍໃນປະເທດໄດ້ທັງໝົດ ຈໍານວນ 700.000 ແກັດ. ການຄິດໄລ່ອາກອນຊົມໃຊ້ເພີ່ມອັດຕາເດັດຖານ ໃຫ້ປະຕິບັດ ດັ່ງນີ້ :

- ຈໍານວນ ຊອງຢາສູບທີ່ຜະລິດແລະຈໍາໜ່າຍໃນເດືອນ: 70.000 x 50 x 10 = 35.000.000 ຊອງ;
- ອາກອນຊົມໃຊ້ເພີ່ມ: 35.000.000 x 800 = **28.000.000.000 ກີບ.**

**ໝາຍເຫດ:** ອາກອນຊົມໃຊ້ເພີ່ມຢູ່ພາຍໃນປະເທດ ສໍາລັບສິນຄ້າ ຫຼື ຜະລິດຕະພັນ ທີ່ຖືກກໍານົດໃຫ້ເສຍອາກອນຊົມໃຊ້ເພີ່ມໃນແຕ່ລະໄລຍະ ແມ່ນ ເຈົ້າໜ້າທີ່ສ່ວຍສາອາກອນ ເປັນຜູ້ຄິດໄລ່ ແລະ ເກັບ ຕາມຈໍານວນຫົວໜ່ວຍ ຂອງສິນຄ້າ ຫຼື ຜະລິດຕະພັນຕົວຈິງ, ຈໍານວນເງິນອາກອນຊົມໃຊ້ເພີ່ມທີ່ໄດ້ຄິດໄລ່ອອກມານັ້ນຕ້ອງນໍາມາມອບເຂົ້າງົບປະມານທັງໝົດ ໂດຍບໍ່ກ່ຽວຂ້ອງກັບ ອາກອນຊົມໃຊ້ທີ່ໄດ້ມອບແລ້ວຕາມອັດຕາທຽບຖານ ແລະ ຕາມອາກອນຊົມໃຊ້ຕໍ່າສຸດ .

**10. ຂໍ້ IV ມາດຕາ 17 ກໍານົດເວລາການຄິດໄລ່ອາກອນຊົມໃຊ້**

ກໍານົດເວລາຄິດໄລ່ເກັບອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

1) ສໍາລັບການນໍາເຂົ້າສິນຄ້າທີ່ຕ້ອງເສຍອາກອນຊົມໃຊ້ ຈາກຕ່າງປະເທດ, ຈາກເຂດເສດຖະກິດພິເສດ ຫຼື ຈາກເຂດປອດພາສີ ການນໍາເຂົ້າສິນຄ້າ ໃຫ້ຄິດໄລ່ເກັບອາກອນຊົມໃຊ້ ໃນເວລາທີ່ສິນຄ້າຖືກແຈ້ງເຂົ້າມາໃນ ສປປ ລາວ ຍົກເວັ້ນຜູ້ທີ່ໄດ້ຮັບອະນຸຍາດໃຫ້ຄິດໄລ່ ເກັບ ໃນເວລາທີ່ມີການສະໜອງສິນຄ້າທີ່ນໍາເຂົ້ານັ້ນ ຢູ່ພາຍໃນປະເທດ ດັ່ງນີ້:

ກ. ສໍາລັບສິນຄ້າທີ່ນໍາເຂົ້າຈາກຕ່າງປະເທດ ແມ່ນໃຫ້ຄິດໄລ່ ແລະ ເກັບອາກອນຊົມໃຊ້ ພ້ອມກັນກັບການແຈ້ງພາສີຂາເຂົ້າ ຢູ່ດ່ານບ່ອນນໍາເຂົ້າ ໂດຍແມ່ນຜູ້ທີ່ຖືກມອບໝາຍໃຫ້ຄິດໄລ່ ແລະ ເກັບ;

ຂ. ສໍາລັບສິນຄ້າທີ່ນໍາເຂົ້າ ຈາກເຂດເສດຖະກິດພິເສດ ແລະ ເຂດປອດພາສີ, ຊຶ່ງແມ່ນການສົ່ງສິນຄ້າ ອອກນອກເຂດດັ່ງກ່າວ ມາພາຍໃນ ສປປ ລາວ ໂດຍມີການລະບຸໄວ້ຢູ່ໃນໃບນໍາສົ່ງ ຫຼື ເອກະສານອື່ນ ທີ່ກ່ຽວຂ້ອງກັບສິນຄ້າ ເປັນລາຍລະອຽດ ເຊັ່ນ: ໃບສັນຍາຊື້-ຂາຍສິນຄ້າ, ໃບເກັບເງິນ, ໃບນໍາສົ່ງສິນຄ້າ ແລະເອກະສານອື່ນໆທີ່ກໍາກັບສິນຄ້າ ອອກມາຈາກເຂດ ແມ່ນ ໃຫ້ຄິດໄລ່ ແລະ ເກັບອາກອນຊົມໃຊ້ໃນເງື່ອນໄຂດຽວກັນກັບສິນຄ້ານໍາເຂົ້າຈາກຕ່າງປະເທດ;

2) ສໍາລັບການສະໜອງສິນຄ້າ ແລະ ການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ ຢູ່ພາຍໃນປະເທດ ລວມທັງຜູ້ດໍາເນີນທຸລະກິດ ທີ່ນໍາເຂົ້າສິນຄ້າ ຈາກຕ່າງປະເທດ, ຈາກເຂດເສດຖະກິດພິເສດ ຫຼື ຈາກເຂດປອດພາສີ ທີ່ໄດ້ຮັບອະນຸຍາດໃຫ້ຄິດໄລ່ ແລະ ເກັບອາກອນຊົມໃຊ້ຢູ່ພາຍໃນປະເທດ ແມ່ນໃຫ້ຄິດໄລ່ ແລະ ເກັບອາກອນຊົມໃຊ້ ໃນເວລາທີ່ມີການສະໜອງຕົວຈິງ, ຊຶ່ງການສະໜອງສິນຄ້າ ແລະ ການບໍລິການ ກວມເອົາການສະໜອງໃຫ້ລູກຄ້າ ແລະ ການສະໜອງໃຫ້ຕົນເອງ.

3) ສໍາລັບການສະໜອງສິນຄ້າ ແລະ ການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ ຈາກຜູ້ບໍ່ມີພູມລໍາເນົາທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ຄິດໄລ່ເກັບອາກອນຊົມໃຊ້ ໃນເວລາມີການ ຊື້ ແລະ/ຫຼື ການບໍລິການຕົວຈິງ ດັ່ງນີ້:

ກ. ກໍລະນີເປັນສິນຄ້າທີ່ສົ່ງຜ່ານລະບົບໄປສະນີ ຫຼື ຜ່ານບໍລິສັດຂົນສົ່ງດ່ວນສາກົນ ໃຫ້ຄິດໄລ່ ແລະເກັບອາກອນຊົມໃຊ້ ຢູ່ຫ້ອງການໄປສະນີ ຫຼື ຢູ່ສໍານັກງານ ຂອງບໍລິສັດຂົນສົ່ງດ່ວນສາກົນ ຫຼື ຢູ່ສະໜາມບິນສາກົນ ບ່ອນທີ່ສິນຄ້າມາເຖິງຕົວຈິງ ໂດຍຜູ້ຖືກມອບໝາຍໃຫ້ຄິດໄລ່ ແລະ ເກັບ;

ຂ. ກໍລະນີເປັນການສະໜອງການບໍລິການ ຈະແມ່ນດ້ວຍຕົນເອງ ຫຼື ໃນນາມຜູ້ກ່ຽວ ໃຫ້ຄິດໄລ່ ແລະ ເກັບອາກອນຊົມໃຊ້ໃນເວລາມີການສະໜອງເກີດຂຶ້ນຈິງ ຫຼື ເວລາ ທີ່ຜູ້ຮັບການສະໜອງໄດ້ຈ່າຍຄ່າບໍລິການຕົວຈິງ.

**ໝາຍເຫດ:** ຜູ້ຊື້ ຫຼື ຜູ້ຮັບການສະໜອງ ສິນຄ້າ ຫຼື ການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ ຈາກຜູ້ບໍ່ມີພູມລໍາເນົາ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈະເປັນຄົນລາວ, ຄົນຕ່າງດ້າວ, ຄົນຕ່າງປະເທດ, ຄົນບໍ່ມີສັນຊາດ, ຈະດໍາເນີນທຸລະກິດ ຫຼື ບໍ່ກໍຕາມ ຊຶ່ງດໍາລົງຊີວິດ ແລະ ທໍາມາຫາກິນຢູ່ ສປປ ລາວ.

11. ຂໍ້ IV ມາດຕາ 18 ການແຈ້ງ ແລະ ການມອບອາກອນຊົມໃຊ້

ຜູ້ນໍາເຂົ້າສິນຄ້າ, ຜູ້ຜະລິດສິນຄ້າ ແລະ ຜູ້ສະໜອງການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ໃຫ້ແຈ້ງ ແລະ ມອບອາກອນຊົມໃຊ້ ດັ່ງນີ້:

1) ການນໍາເຂົ້າສິນຄ້າທີ່ຕ້ອງເສຍອາກອນຊົມໃຊ້ ຕາມທີ່ໄດ້ກໍານົດໄວ້ຢູ່ໃນມາດຕາ 11 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ຈາກຕ່າງປະເທດ, ຈາກເຂດເສດຖະກິດພິເສດ ຫຼື ຈາກເຂດປອດພາສີ ທຸກຄັ້ງ ຕ້ອງແຈ້ງ ແລະ ມອບອາກອນຊົມໃຊ້ ດັ່ງນີ້:

ກ. ສໍາລັບການນໍາເຂົ້າສິນຄ້າ ຈາກຕ່າງປະເທດ ໃຫ້ແຈ້ງ ແລະ ມອບອາກອນຊົມໃຊ້ພ້ອມດຽວກັນກັບການແຈ້ງເອກະສານພາສີ ຕໍ່ເຈົ້າໜ້າທີ່ພາສີ ຢູ່ດ່ານພາສີບ່ອນນໍາເຂົ້າສິນຄ້າດັ່ງກ່າວ ໂດຍໃຫ້ປະກອບຂໍ້ມູນ ກ່ຽວກັບ

ອາກອນຊົມໃຊ້ ເຂົ້າໃນແບບພິມທີ່ຂະແໜງພາສີກຳນົດໃຫ້ຖືກຕ້ອງ ແລະ ຄົບຖ້ວນ; ອາກອນຊົມໃຊ້ຕ້ອງຖືກນຳໄປມອບເຂົ້າງົບປະມານໃຫ້ຄົບຖ້ວນຈຶ່ງສາມາດນຳເອົາສິນຄ້າອອກຈາກດ່ານພາສີບ່ອນນຳເຂົ້າໄດ້;

ຂ. ສຳລັບການນຳເຂົ້າສິນຄ້າ ຈາກເຂດເສດຖະກິດພິເສດ, ຈາກເຂດປອດພາສີ ຫຼື ການນຳເອົາສິນຄ້າ ອອກນອກເຂດເສດຖະກິດພິເສດ,ຈາກເຂດປອດພາສີ ມາໃນ ສປປ ລາວ ໃຫ້ແຈ້ງ ແລະ ມອບອາກອນຊົມໃຊ້ ໃນເວລາທີ່ຈະມີການຂົນສົ່ງສິນຄ້າອອກຈາກເຂດເສດຖະກິດພິເສດ ຫຼື ເຂດປອດພາສີ ໂດຍໃຫ້ຍື່ນເອກະສານນຳສົ່ງສິນຄ້າ ຫຼື ເອກະສານອື່ນ ທີ່ກ່ຽວຂ້ອງກັບສິນຄ້າດັ່ງກ່າວເປັນລາຍລະອຽດ ເຊັ່ນ ໃບສັນຍາຊື້-ຂາຍສິນຄ້າ, ໃບເກັບເງິນ ແລະ ເອກະສານອື່ນທີ່ກ່ຽວຂ້ອງກັບສິນຄ້ານັ້ນ ຕໍ່ເຈົ້າໜ້າທີ່ພາສີ ຫຼື ເຈົ້າໜ້າທີ່ອື່ນທີ່ຖືກແຕ່ງຕັ້ງໃຫ້ຖືກຕ້ອງ ແລະ ຄົບຖ້ວນ; ອາກອນຊົມໃຊ້ ຕ້ອງຖືກມອບເຂົ້າງົບປະມານແຫ່ງລັດໃຫ້ຄົບຖ້ວນກ່ອນຈະມີການຂົນສົ່ງ ຫຼື ເຄື່ອນຍ້າຍສິນຄ້າອອກຈາກເຂດເສດຖະກິດພິເສດມາພາຍໃນ ສປປ ລາວໃນແຕ່ລະຄັ້ງ.

2) ສຳລັບຜູ້ຜະລິດສິນຄ້າ ແລະ ຜູ້ສະໜອງການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້ ຢູ່ພາຍໃນປະເທດ ລວມທັງຜູ້ນຳເຂົ້າສິນຄ້າທີ່ໄດ້ຮັບອະນຸຍາດໃຫ້ແຈ້ງເສຍອາກອນຊົມໃຊ້ຢູ່ພາຍໃນປະເທດ ຕ້ອງແຈ້ງ ແລະ ມອບອາກອນຊົມໃຊ້ເປັນແຕ່ລະເດືອນປົກກະຕິ ບໍ່ໃຫ້ກາຍ ວັນທີ 20 ຂອງເດືອນຖັດໄປ ຕໍ່ຂະແໜງສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ ຫຼື ບ່ອນທີ່ກຳນົດໃຫ້ແຈ້ງເສຍອາກອນຊົມໃຊ້, ກໍລະນີພາຍໃນເດືອນບໍ່ມີອາກອນຊົມໃຊ້ເກີດຂຶ້ນກໍໃຫ້ແຈ້ງ ຫຼື ຍື່ນໃບແຈ້ງອາກອນຊົມໃຊ້ ໂດຍໃຫ້ບັນທຶກ ຈຳນວນ 0 ກີບ ໃສ່ຫ້ອງທີ່ຂຽນວ່າ ພື້ນຖານຄິດໄລ່ອາກອນຊົມໃຊ້ ຊຶ່ງປະກອບມີ ລາຍຮັບຈາກການຂາຍ ຫຼື ຕົ້ນທຶນການຜະລິດ ຫຼື ລາຍຮັບຈາກການຍົກເວັ້ນອາກອນຊົມໃຊ້ ແລະ ບັນທຶກ ຈຳນວນ 0 ກີບໃສ່ຫ້ອງຈຳນວນເງິນອາກອນຊົມໃຊ້ທີ່ຄິດໄລ່ ແລະ ເກັບໄດ້ພາຍໃນເດືອນ;

3) ສຳລັບຜູ້ຊື້ ສິນຄ້າ ແລະ/ຫຼື ການບໍລິການ ຈາກຜູ້ບໍ່ມີພູມລຳເນົາ ທີ່ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ໃຫ້ແຈ້ງ ແລະ ມອບອາກອນຊົມໃຊ້ ຕາມເງື່ອນໄຂ ດັ່ງນີ້:

ກ. ກໍລະນີ ເປັນຜູ້ດຳເນີນທຸລະກິດ ໃຫ້ແຈ້ງ ແລະ ມອບອາກອນຊົມໃຊ້ ບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ ພ້ອມດຽວກັບການແຈ້ງ ແລະ ມອບອາກອນຊົມໃຊ້ປະຈຳເດືອນປົກກະຕິ; ກໍລະນີສິນຄ້າທີ່ສົ່ງຜ່ານລະບົບໄປສະນີ ຫຼື ຜ່ານບໍລິສັດຂົນສົ່ງດ່ວນສາກົນ ພາຍຫຼັງ ທີ່ຜູ້ຖືກມອບໝາຍ ໃຫ້ຄິດໄລ່ ແລະເກັບ ຫຼື ເຈົ້າໜ້າທີ່ພາສີ ໄດ້ຄິດໄລ່ຈຳນວນອາກອນຊົມໃຊ້ທີ່ຕ້ອງເສຍແລ້ວ ຕ້ອງນຳໄປມອບເຂົ້າຄັງເງິນແຫ່ງຊາດ ຫຼື ທະນາຄານໃຫ້ຄົບຖ້ວນໂດຍທັນທີ;

ຂ. ກໍລະນີ ເປັນບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ບໍ່ດຳເນີນທຸລະກິດ ໃຫ້ແຈ້ງ ແລະ ມອບອາກອນຊົມໃຊ້ ບໍ່ໃຫ້ກາຍ 15 ວັນ ນັບແຕ່ວັນທີ່ໄດ້ຄິດໄລ່ ແລະ ເກັບອາກອນຊົມໃຊ້ເປັນຕົ້ນໄປ; ສຳລັບສິນຄ້າ ທີ່ຖືກສົ່ງຜ່ານລະບົບໄປສະນີ ຫຼື ຜ່ານບໍລິສັດຂົນສົ່ງດ່ວນສາກົນ ພາຍຫຼັງທີ່ຜູ້ຖືກມອບໝາຍໃຫ້ຄິດໄລ່ ແລະເກັບ ຫຼື ເຈົ້າໜ້າທີ່ພາສີ ໄດ້ຄິດໄລ່ຈຳນວນອາກອນຊົມໃຊ້ທີ່ຕ້ອງເສຍແລ້ວ ຕ້ອງນຳໄປມອບເຂົ້າຄັງເງິນແຫ່ງຊາດ ຫຼື ທະນາຄານໃຫ້ຄົບຖ້ວນໂດຍທັນທີ, ສຳລັບການສະໜອງການບໍລິການ ຈະແມ່ນໂດຍຜູກ່ຽວເອງ ຫຼື ໃນນາມຜູ້ກ່ຽວ ໃຫ້ແຈ້ງ ແລະ ມອບອາກອນຊົມໃຊ້ບໍ່ໃຫ້ກາຍ 15 ວັນ ນັບແຕ່ວັນທີ່ໄດ້ຄິດໄລ່ ແລະ ເກັບອາກອນຊົມໃຊ້ເປັນຕົ້ນໄປ;

**ໝາຍເຫດ:** ຜູ້ສະໜອງ ທີ່ບໍ່ມີພູມລຳເນົາ ແລະບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ ຈະເປັນບຸກຄົນ, ນິຕິບຸກຄົນ,ຈະດຳເນີນທຸລະກິດ ຫຼື ບໍ່ ກໍຕາມ ຖ້າມີການສະໜອງສິນຄ້າ ແລະ/ຫຼື ການບໍລິການທີ່ຕ້ອງເສຍອາກອນຊົມໃຊ້ ຊຶ່ງເກີດຂຶ້ນ ຢູ່ ສປປ ລາວ ແມ່ນ ຈະຕ້ອງເສຍອາກອນຊົມໃຊ້ໃຫ້ ສປປ ລາວ ເນື່ອງຈາກວ່າ ອາກອນຊົມໃຊ້ ແມ່ນອາກອນທີ່ເກັບ ຈາກຜູ້ຊົມໃຊ້ສິນຄ້າ ແລະການບໍລິການ ຢູ່ໃນດິນແດນ ຂອງ ສປປ ລາວ. ໝາຍຄວາມວ່າ ຜູ້ຮັບການສະໜອງ ຢູ່ ສປປ ລາວ ເປັນຜູ້ມີພັນທະຕ້ອງເສຍອາກອນຊົມໃຊ້, ສ່ວນຜູ້ສະໜອງທີ່ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງວິສາຫະກິດຢູ່ ສປປ ລາວ ນັ້ນ ແມ່ນເປັນຜູ້ເຮັດໃຫ້ມີທຸລະກຳ ກ່ຽວກັບ ການສະໜອງເກີດຂຶ້ນ ຢູ່ ສປປ ລາວ ແລະເຮັດໃຫ້ເກີດມີພື້ນຖານຄິດໄລ່ ອາກອນຊົມໃຊ້ ແລະ ອາກອນປະເພດອື່ນຢູ່ ສປປ ລາວ ຕາມກົດໝາຍກຳ

ບິດ ແລະ ຜູ້ກ່ຽວແມ່ນຈະໄດ້ຮັບຜົນປະໂຫຍດຈາກການສະໜອງພາຍຫຼັງທີ່ໄດ້ຄິດໄລ່ ແລະ ຫັກອາກອນທາງກົງໄວ້ຄົບຖ້ວນແລ້ວ (ອາກອນກຳໄລ).

ສຳລັບເນື້ອໃນຂອງໃບແຈ້ງມອບອາກອນຊົມໃຊ້ຢູ່ພາຍໃນ ແຕ່ລະເດືອນ ຕາມທີ່ໄດ້ກຳນົດໄວ້ຢູ່ໃນມາດຕາ 18 ຂອງກົດໝາຍວ່າດ້ວຍອາກອນຊົມໃຊ້ ແມ່ນ ຈະຕ້ອງໄດ້ນຳໃຊ້ແບບພິມໃບແຈ້ງອາກອນຊົມໃຊ້ເປັນອັນສະເພາະ, ຊຶ່ງໄດ້ມີການກຳນົດໂຄງປະກອບຂອງໃບແຈ້ງ ຕາມເນື້ອໃນລາຍການໃຫ້ຖືກຕ້ອງ ຄົບຖ້ວນ ທີ່ລະບຸໄວ້ຢູ່ໃນກົດໝາຍວ່າດ້ວຍອາກອນຊົມໃຊ້ ຄື: ດ້ານເທິງຂອງໃບແຈ້ງອາກອນຊົມໃຊ້ ສະແດງເຖິງ ໄລຍະຂອງການແຈ້ງ (ປະຈຳເດືອນ), ຊື່ວິສາຫະກິດ, ເລກປະຈຳຕົວຜູ້ເສຍອາກອນ, ເບີໂທລະສັບ ແລະ ອີແມວ ດັ່ງນີ້:

ກ. ອາກອນຊົມໃຊ້ທຽບຖານ:

- ລາຍການ ສິນຄ້າ ຫຼື ການບໍລິການ ທີ່ຕ້ອງເສຍອາກອນຊົມໃຊ້;
- ພື້ນຖານຄິດໄລ່ອາກອນຊົມໃຊ້ ສຳລັບສິນຄ້າ ຫຼື ການບໍລິການ ກໍລະນີສະໜອງໃຫ້ລູກຄ້າ ຫຼື ຜູ້ອື່ນ;
- ພື້ນຖານຄິດໄລ່ອາກອນຊົມໃຊ້ ສຳລັບສິນຄ້າທີ່ຊົມໃຊ້ເອງ, ໃຫ້ເປັນຂອງແຖມ, ໃຫ້ເປັນຂອງຂວັນ ແລະ ລາງວັນ;
- ພື້ນຖານຄິດໄລ່ອາກອນຊົມໃຊ້ ກໍລະນີການສະໜອງສິນຄ້າ ແລະ/ຫຼື ການບໍລິການຈາກຜູ້ບໍ່ມີພູມລຳເນົາ ແລະ ບໍ່ໄດ້ສ້າງຕັ້ງວິສາຫະກິດ ຢູ່ ສປປ ລາວ;
- ມູນຄ່າການສະໜອງທີ່ຖືກຍົກເວັ້ນອາກອນຊົມໃຊ້;
- ອັດຕາອາກອນຊົມໃຊ້ ຂອງແຕ່ລະປະເພດ ສິນຄ້າ ຫຼື ການບໍລິການ;
- ຈຳນວນເງິນອາກອນຊົມໃຊ້ ຈາກອັດຕາທຽບຖານພາຍໃນເດືອນ.

ຂ. ອາກອນຊົມໃຊ້ອັດຕາເດັດຖານ ( ອາກອນຊົມໃຊ້ຕ່ຳສຸດ):

- ລາຍການສິນຄ້າ ທີ່ຕ້ອງເສຍອາກອນຊົມໃຊ້ຕ່ຳສຸດ;
- ຈຳນວນຫົວໜ່ວຍ;
- ຈຳນວນເງິນອາກອນຊົມໃຊ້ຕໍ່ຫົວໜ່ວຍ;
- ຈຳນວນເງິນອາກອນຊົມໃຊ້ຕ່ຳສຸດທັງໝົດພາຍໃນເດືອນ;

ຄ. ອາກອນຊົມໃຊ້ອັດຕາເດັດຖານ ( ອາກອນຊົມໃຊ້ເພີ່ມ):

- ລາຍການສິນຄ້າ ທີ່ຕ້ອງເສຍອາກອນຊົມໃຊ້ເພີ່ມ;
- ຈຳນວນຫົວໜ່ວຍ;
- ຈຳນວນເງິນອາກອນຊົມໃຊ້ຕໍ່ຫົວໜ່ວຍ;
- ຈຳນວນເງິນອາກອນຊົມໃຊ້ເພີ່ມທັງໝົດພາຍໃນເດືອນ ;

ງ. ການດັດແກ້ ແລະ ອາກອນຊົມໃຊ້ທີ່ຕ້ອງມອບໃນເດືອນ :

- ຈຳນວນເງິນອາກອນຊົມໃຊ້ ຖືກດັດແກ້ (ໄດ້ມອບແລ້ວ, ຖືກຫັກໄວ້, ຍອດຍົກມາ, ມີການຄິດໄລ່ຜິດພາດ, ຕ້ອງມອບຕື່ມ);
- ລວມຈຳນວນເງິນອາກອນຊົມໃຊ້ທີ່ຕ້ອງມອບຕົວຈິງ ຫຼື ສົ່ງຄືນ.

**ໝາຍເຫດ:** ພື້ນຖານຄິດໄລ່ ອາກອນຊົມໃຊ້ອັດຕາທຽບຖານ ສຳລັບການສະໜອງຢູ່ພາຍໃນປະເທດ ປະກອບມີ ກໍລະນີ ດັ່ງນີ້:

- ຄິດໄລ່ຈາກລາຄາຂາຍອອກຈາກບ່ອນຜະລິດ ຫຼື ລາຄາຂາຍຍົກ ສໍາລັບສິນຄ້າທີ່ຜະລິດ ຫຼື ປະກອບ ລວມທັງສິນຄ້ານໍາເຂົ້າທີ່ໄດ້ຮັບອະນຸຍາດໃຫ້ຄິດໄລ່,ແຈ້ງ ແລະມອບ ອາກອນຊົມໃຊ້ຢູ່ພາຍໃນ ສໍາລັບສະໜອງໃຫ້ແກ່ລູກຄ້າ ຫຼື ຜູ້ຊົມໃຊ້ທົ່ວໄປ;

- ສໍາລັບການບໍລິການ ແມ່ນ ຄິດໄລ່ຈາກມູນຄ່າຊົມໃຊ້ການບໍລິການຕົວຈິງ ອາດຈະທັງໝົດ ຫຼື ບາງສ່ວນ;

- ຄິດໄລ່ຈາກ ລາຄາຕົ້ນທຶນການຜະລິດ ຫຼື ຕົ້ນທຶນຊື້ ສໍາລັບສິນຄ້າທີ່ສະໜອງໃຫ້ຕົນເອງ, ຊົມໃຊ້ເອງ, ໃຫ້ເປັນຂອງແຖມ,ເປັນຂອງຂວັນ ແລະ ລາງວັນ; ຜູ້ເສຍອາກອນມີຄວາມຮັບຜິດຊອບໃນການກໍານົດລາຄາຕົ້ນທຶນຂອງສິນຄ້າໃຫ້ຖືກຕ້ອງ ແລະ ຊັດເຈນ ເພື່ອເປັນພື້ນຖານຄິດໄລ່ອາກອນຊົມໃຊ້; ຕົ້ນທຶນຂອງສິນຄ້າ ຫຼື ການບໍລິການ ປະເພດດຽວກັນ ທີ່ສະໜອງໃຫ້ຕົນເອງ, ໃຫ້ເປັນຂອງແຖມ, ເປັນຂອງຂວັນ ແລະ ລາງວັນ ຕ້ອງເທົ່າກັບຕົ້ນທຶນທີ່ສະໜອງໃຫ້ຜູ້ອື່ນ.

## III. ວິທີການຈັດຕັ້ງປະຕິບັດ

1. ມອບໃຫ້ກົມສ່ວຍສາອາກອນ ກະຊວງການເງິນ ຈັດຕັ້ງເຜີຍແຜ່ເຊື່ອມຊຶມ, ແນະນໍາ, ຕິດຕາມ ແລະ ກວດກາຜົນການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ໃຫ້ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ, ພະນັກງານສ່ວຍສາອາກອນ ລວມທັງບັນດາຫົວໜ່ວຍທຸລະກິດ ຮັບຮູ້, ເຂົ້າໃຈ ແລະ ຈັດຕັ້ງປະຕິບັດເປັນເອກະພາບໃນຂອບເຂດທົ່ວປະເທດ;

2. ການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ຫາກພົບຄວາມຫຍຸ້ງຍາກ ໃຫ້ລາຍງານກະຊວງການເງິນຕາມຂັ້ນຕອນ ເພື່ອແກ້ໄຂໃຫ້ທັນເວລາ;

3. ຄໍາແນະນໍາສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ບຸນໂຈມ ອຸບົນປະເສີດ